# ແຜນລະດົມທຶນ ສໍາລັບ ວຽກງານສ້າງຄວາມເຂັ້ມແຂງ ດ້ານຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ ຢູ່ໃນເຂດຊົນນະບົດ ແຕ່ປີ 2026-2030

## ສໍາລັບ ກອງທຶນຫຼຸດຜ່ອນຄວາມທຸກຍາກ

## ກະຊວງກະສິກໍາ ແລະ ສິ່ງແວດລ້ອມ

**(ແຜນລະດົມທຶນ RLRPP ສໍາລັບ ທລຍ)**

**ກັນຍາ 2025**

# ສາລະບານ

ຄໍານໍາ ......................................................................................................................................1

ບົດສະຫຼຸບຫຍໍ້...........................................................................................................................3

ພາກສະເໜີ ................................................................................................................................5

ພາກ 1: ປະເມີນຜົນການເຄື່ອນໄຫວໃນໄລຍະຜ່ານມາ...........................................................................6

1.1 ຂອບນະໂຍບາຍ ແລະ ນິຕິກໍາ ສໍາລັບ ການພັດທະນາຊົນນະບົດ............................................................7

1.2 ວິທີການດໍາງານ ຂອງ ທລຍ ໃນການຈັດຕັ້ງປະຕິບັດ ບັນດາແຜນງານແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາ......10

1.4 ຂໍ້ຈໍາກັດ ..................................................................................................................12

1.5 ບົດຮຽນທີ່ຖອດຖອນໄດ້......................................................................................................14

1.6 ໂອກາດ ແລະ ສິ່ງທ້າທາຍໃນລະດັບພາກ .................................................................................15

1.7 ຂອບນະໂຍບາຍ ແລະ ນິຕິກໍາ ທີ່ມີຢູ່ປະຈຸບັນ ສໍາລັບ ວຽກງານການພັດທະນາຊົນນະບົດ ...........................16

ພາກ 2: ວິໄສທັດ, ຈຸດປະສົງ ແລະ ກຸ່ມຄາດໝາຍສູ້ຊົນ ຂອງ ແຜນລະດົມທຶນ ສໍາລັບ ວຽກງານສ້າງຄວາມເຂັ້ມແຂງດ້ານການດໍາລົງຊີວິດ ແລະ ແກ້ໄຂຄວາມ ທຸກຍາກ ຢູ່ ເຂດຊົນນະບົດ ທີ່ຈະຈັດຕັ້ງປະຕິບັດໂດຍ ກອງທຶນຫຼຸດຜ່ອນຄວາມ ທຸກຍາກ (ແຜນລະດົມທຶນ RLRPP ສໍາລັ ທລຍ) ແຕ່ປີ 2026-2030 ..........................................................17

2.1 ວິໄສທັດ ຂອງ ແຜນລະດົມທຶນ RLRPP ສໍາລັບ ທລຍ..................................................................17

2.2 ຈຸດປະສົງ ຂອງ ແຜນລະດົມທຶນ RLRPP ສໍາລັບ ທລຍ .................................................................18

ພາກ 3: ແຜນລະດົມທຶນ ສາລັບ ວຽກງານສ້າງຄວາມເຂັ້ມແຂງດ້ານການດາລົງຊີວິດ ແລະ ແກ້ໄຂຄວາມທຸກຍາກ ຢູ່ ເຂດຊົນນະບົດ ສໍາລັບ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ແຜນລະດົມທຶນ RLRPP ສໍາລັບ ທລຍ) ແຕ່ປີ 2026-2030 ..19

3.1 ຫົວຂໍ້ການຊ່ວຍເຫຼືອ ແລະ ຄາດໝາຍຜົນໄດ້ຮັບ ຂອງ ແຜນລະດົມທຶນ RLRPP ສໍາລັບ ທລຍ ......................20

3.1.1 ການຜະລິດ ເພື່ອການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ແລະ ປັບປຸງການດໍາລົງຊີວິດໃຫ້ມີຄວາມເປັນເອກະລາດເປັນເຈົ້າຕົນເອງ.......................................................................................20

3.1.2 ການຜະລິດກະສິກໍາເປັນສິນຄ້າ, ການເຂົ້າເຖິງຕະຫຼາດ ແລະ ການຕະຫຼາດ............................................21

3.1.3 ວຽກງານກະສິກໍາ-ປ່າໄມ້, ການປູກເຄື່ອງປ່າຂອງດົງ ແລະ ການປຸງແຕ່ງກະສິກໍາ.....................................23

3.1.4 ວຽກງານພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ຄວາມຕໍ່ເນື່ອງ ຂອງ ແຜນງານ ທລຍ ...............25

3.1.5 ຄວາມສອດຄ່ອງ ກັບ ຈຸດປະສົງລະດັບສູງ...................................................................................27

3.2 ເຂດເປົ້າໝາຍ ແລະ ຜູ້ໄດ້ຮັບຜົນປະໂຫຍດ ....................................................................................27

3.3 ແຫຼ່ງການຊ່ວຍເຫຼືອທາງດ້ານການເງິນ ທີ່ມີຄວາມເປັນໄປໄດ້...........................................................29

3.3.1 ການເຜີຍແຜ່ໂຄງການ ແລະ ການເຂົ້າເຖິງແຫຼ່ງທຶນ ສໍາລັບ ທລຍ .....................................................32

ພາກ 4: ໂຄງຮ່າງການຈັດຕັ້ງປະສານງານ ..........................................................................................32

4.1 ຄວາມເປັນມາດ້ານການຈັດຕັ້ງ ......................................................................................................32

4.2 ໂຄງຮ່າງການຈັດຕັ້ງປະສານງານ ຂອງ ແຜນລະດົມທຶນ RLRPP ສໍາລັບ ທລຍ .......................................34

4.3 ຫຼັກການເຄື່ອນໄຫວ ຂອງ ແຜນລະດົມທຶນ RLRPP ສໍາລັບ ທລຍ .....................................................38

4.4 ມາດຖານເງື່ອນໄຂການຄັດເລືອກ ໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.......................39

4.5 ຂັ້ນຕອນການເບີກຈ່າຍເງິນ ...........................................................................................................40

4.6 ການຈັດຊື້ຈັດຈ້າງ.........................................................................................................................41

4.7 ການຂໍການຍັ້ງຢືນ ໃຫ້ ກອງທຶນຫຼຸດຜ່ອນຄວາມທຸກຍາກ ເປັນຈຸດປະສານງານແຫ່ງຊາດ .............................41

ພາກ 5: ບາດກ້າວໃນຕໍ່ໜ້າ .............................................................................................................42

ເອກະສານຊ້ອນທ້າຍ 1: ສັງລວມ ບັນດາປະເດັນສໍາຄັນ ຈາກ ດໍາລັດ ແລະ ບັນດາເອກະສານກ່ຽວຂ້ອງ ພາຍໃນຂອບ ນະໂຍບາຍ ຂະແໜງກະສິກໍາ ແລະ ພັດທະນາຊົນນະບົດ ຂອງ ລບ ທີ່ ທລຍ ປະກອບສ່ວນຈັດຕັ້ງປະຕິບັດ .............45

ເອກະສານຊ້ອນທ້າຍ 2: ແຜນທີ່ການເຄື່ອນໄຫວ ຂອງ ໂຄງການ ທລຍ III, ທລຍ III-ເພີ່ມທຶນ ແລະ ໂຄງການ ປສກ .50

# ສັບຫຍໍ້ ແລະ ອັກສອນຫຍໍ້

| | |
|---|---|
| AFRDP | ແຜນພັດທະນາກະສິກຳ, ປ່າໄມ້ ແລະ ຊົນນະບົດ ໄລຍະຫ້າປີ |
| ADS | ຍຸດທະສາດການພັດທະນາ ຂອງ ກະຊວງກະສິກຳແລະປ່າໄມ້ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 |
| CCRI | ດັດສະນີໝາຍ ຄວາມສ່ຽງການປ່ຽນແປງດິນຟ້າອາກາດ |
| CFA | ການຈັດຊື້ວຽກກໍ່ສ້າງໂດຍບ້ານນໍາໃຊ້ຊັບພະຍາກອນຂອງຕົນເອງ |
| CLEAR | ໂຄງການ ປັບປຸງຊີວິດການເປັນຢູ່ ແລະ ການປັບຕົວເກັບການປ່ຽນແປງດິນຟ້າອາກາດ (ປສກ) |
| CSA | ການຜະລິດກະສິກຳທັນສະໄໝ ຫຼື ການຜະລິດກະສິກຳທີ່ປັບຕົວກັບການປ່ຽນແປງດິນຟ້າອາກາດ |
| CSO | ອົງການຈັດຕັ້ງທາງສັງຄົມ |
| DAEC | ກົມສົ່ງເສີມກະສິກຳ ແລະ ສະຫະກອນ |
| DALAM | ກົມຄຸ້ມຄອງ ແລະ ພັດທະນາ ທີ່ດິນກະສິກຳ |
| DFAT | ກະຊວງການຕ່າງປະເທດ ແລະ ການຄ້າ ຂອງ ປະເທດອົດສະຕຣາລີ |
| DOA | ກົມປູກຝັງ |
| DOF | ກົມປ່າໄມ້ |
| DOI | ກົມຊົນລະປະທານ |
| DOLF | ກົມລ້ຽງສັດ ແລະ ການປະມົງ |
| DOPC | ກົມແຜນການ ແລະ ການຮ່ວມມື |
| DRD | ກົມພັດທະນາຊົນນະບົດ |
| EPF | ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) |
| FAO | ອົງການ ອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ |
| GAP | ມາດຕະຖານກະສິກຳສະອາດ |
| GCF | ກອງທຶນສີຂຽວ ດ້ານການປ່ຽນແປງດິນຟ້າອາກາດສາກົນ |
| GEF | ກອງທຶນສິ່ງແວດລ້ອມໂລກ |
| GOL | ລັດຖະບານ ແຫ່ງ ສປປ ລາວ |
| LDC | ປະເທດດ້ອຍພັດທະນາ |
| LWU | ສະຫະພັນແມ່ຍິງລາວ |
| M&E | ການຕິດຕາມ ແລະ ການປະເມີນຜົນ |
| MAE | ກສ (ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ) |
| MAF | ກປ (ກະຊວງກະສິກຳ ແລະ ປ່າໄມ້) |
| NAFRI | ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ |
| NDA | ຈຸດປະສານງານແຫ່ງຊາດ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| NTFP | ເຄື່ອງປ່າຂອງດົງ |
| PG | ກຸ່ມຜູ້ຜະລິດ |
| PMO | ສຳນັກງານນາຍົກລັດຖະມົນຕີ |
| PRF | ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) |
| PRFO | ຫ້ອງການກອງທຶນຫຼຸດຜ່ອນຄວາມທຸກຍາກ |

| | |
|---|---|
| RLRPP | ແຜນລະດົມທຶນ ສຳລັບ ວຽກງານສ້າງຄວາມເຂັ້ມແຂງດ້ານການດຳລົງຊີວິດ ແລະ ແກ້ໄຂຄວາມທຸກຍາກ ຢູ່ເຂດຊົນນະບົດ ແຕ່ປີ 2026-2030 |
| RMG | ກຸ່ມບໍາລຸງຮັກສາເສັ້ນທາງ |
| SDC | ອົງການຮ່ວມມືເພື່ອການພັດທະນາ ປະເທດ ສະວິດ |
| SHG | ກຸ່ມຊ່ວຍເຫຼືອກັນ ຫຼື ກຊກ |
| UN | ສປຊ (ອົງການສະຫະປະຊາຊາດ) |

## ຄຳນຳ

ແຜນລະດົມທຶນ ສຳລັບວຽກແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ ໃນເຂດຫ່າງໄກສອກຫຼີກ ຂອງ ສປປ ລາວ ແຕ່ປີ 2026–2030 ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ທີ່ຂຶ້ນກັບ ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ແມ່ນເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຂອງພັກ, ພ້ອມທັງ ເປັນເຈົ້າການນຳພາ ໃນການປັບປຸງບັນດາກົນໄກ ແລະ ຂະບວນການ ການໃຫ້ບໍລິການຂອງພາກລັດ ໃຫ້ແກ່ປະຊາຊົນລາວ.

ແຜນລະດົມທຶນ ສຳລັບວຽກແກ້ໄຂຄວາມທຸກຍາກ ແຕ່ປີ 2026–2030 ນີ້ ແມ່ນແນ່ໃສ່ນຳສະເໜີ ວິທີການຮອບດ້ານ ຕໍ່ຜູ້ມີສ່ວນກ່ຽວຂ້ອງ ແລະ ບັນດາຄູ່ຮ່ວມພັດທະນາ ຂອງລັດຖະບານ ສປປ ລາວ. ຜ່ານແຜນການລະດົມທຶນດັ່ງກ່າວນີ້, ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈະນຳເອົາບົດຮຽນໃນການພັດທະນາຊົນນະບົດ ທີ່ມີຫຼາຍກວ່າ 20 ປີ ມາຈັດຕັ້ງປະຕິບັດວຽກງານ ຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາຊຸມຊົນຊົນນະບົດ.

ຈຸດປະສົງຫຼັກຂອງແຜນລະດົມທຶນສະບັບນີ້ ແມ່ນເພື່ອເພີ່ມຄວາມສາມາດ ໃນການເພິ່ງພາຕົນເອງ ຂອງປະຊາຊົນ ແລະ ບັນດາບ້ານ, ປັບປຸງຄຸນນະພາບຊີວິດ, ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ປັບປຸງຊີວິດການເປັນຢູ່, ສົ່ງເສີມການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ ແລະ ພັດທະນາກະສິກຳທັນສະໄໝ ໃຫ້ແກ່ຄອບຄົວທຸກຍາກ ໃນເຂດຊົນນະບົດຫ່າງໄກສອກຫຼີກ ແລະ ເຂດທີ່ມີຄວາມສ່ຽງ ຂອງ ສປປ ລາວ. ດ້ວຍການກຳນົດເຂດພື້ນທີ່ເປົ້າໝາຍ ທີ່ໄດ້ຮັບຜົນກະທົບ ຈາກເຫດການປ່ຽນແປງດິນຟ້າອາກາດທີ່ເກີດຂຶ້ນເລື້ອຍໆ ແລະ ມີລັກສະນະຮຸນແຮງ , ແຜນລະດົມທຶນດັ່ງກ່າວ ຈະສະໜອງກິດຈະກຳ ການຫຼຸດຜ່ອນຄວາມທຸກຍາກ ແບບຍືນຍົງ, ສອດຄ່ອງ ແລະ ມີປະສິດທິຜົນ ທີ່ສາມາດປັບຕົວຕໍ່ກັບການປ່ຽນແປງ, ພ້ອມທັງ ດຶງດູດການສະໜັບສະໜູນຈາກສາກົນ.

ເຫດຜົນຂອງການກະກຽມແຜນລະດົມທຶນສະບັບນີ້ ແມ່ນອີງໃສ່ຄວາມຈຳເປັນ ໃນການສ້າງກອບວຽກໄລຍະຍາວ ທີ່ຮັບປະກັນຄວາມຍືນຍົງ ແລະ ຄວາມຕໍ່ເນື່ອງ ຂອງການຈັດຕັ້ງປະຕິບັດວຽກງານຫຼຸດຜ່ອນຄວາມທຸກຍາກ. ໂດຍການກຳນົດເປົ້າໝາຍ ທີ່ສາມາດປະເມີນຜົນໄດ້ ແລະ ຈັດສັນຊັບພະຍາກອນ ຢ່າງມີແຜນຍຸດທະສາດ, ແຜນລະດົມທຶນນີ້ ໄດ້ຖືກອອກແບບ ເພື່ອໃຫ້ຊຸມຊົນທ້ອງຖິ່ນ ມີສ່ວນຮ່ວມ ແລະ ສົ່ງເສີມ ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບຂອງຜູ້ໄດ້ຮັບຜົນປະໂຫຍດ. ນອກຈາກນັ້ນ, ການແກ້ໄຂຄວາມທຸກຍາກ ຜ່ານແຜນລະດົມທຶນນີ້ ຍັງຈະປະກອບສ່ວນໃຫ້ແກ່ການຂະຫຍາຍຕົວທາງເສດຖະກິດ, ການເພີ່ມສະມັດຕະພາບຜົນຜະລິດ ແລະ ການປັບປຸງການເພິ່ງພາຕົນເອງ, ເຊິ່ງຖືເປັນການສ້າງຮາກຖານ ສຳລັບການພັດທະນາໃນໄລຍະຍາວ.

ແຜນລະດົມທຶນສະບັບນີ້ ຈະຊ່ວຍດຶງດູດ ການສະໜັບສະໜູນ ແລະ ທຶນຮອນ ຈາກສາກົນ ແລະ ບັນດາຄູ່ຮ່ວມພັດທະນາ ທັງ ພາກລັດ ແລະ ພາກເອກະຊົນ, ເຊິ່ງປະກອບມີບັນດາແຜນງານ ທີ່ຈະສ້າງຂຶ້ນໂດຍອີງໃສ່ ການດຳເນີນງານທີ່ປະສົບຜົນສຳເລັດ ທີ່ໄດ້ຮັບການສະໜັບສະໜູນຈາກທະນາຄານໂລກ ແລະ ຄູ່ຮ່ວມພັດທະນາອື່ນໆ ແລະ ຍັງຈະເນັ້ນໃສ່ການສ້າງຄວາມເຂັ້ມແຂງ ໃຫ້ແກ່ ກອງທຶນຫຼຸດຜ່ອນຄວາມທຸກຍາກ ໃນການຮັບມື ກັບສິ່ງທ້າທາຍໃນປັດຈຸບັນ ແລະ ສິ່ງທ້າທາຍ ໃໝ່ໆ ທີ່ປະຊາຊົນຜູ້ທຸກຍາກ ໄດ້ພົບພໍ້.

ເພື່ອຍົກສູງປະສິດທິພາບຂອງແຜນງານ ຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກ, ແຜນລະດົມທຶນສະບັບນີ້ ໄດ້ ນຳສະເໜີ ການປັບປຸງການບໍລິຫານອົງກອນທີ່ມີຢູ່ໃນປັດຈຸບັນ, ເຊິ່ງຈະຊ່ວຍໃຫ້ ກອງທຶນຫຼຸດຜ່ອນຄວາມທຸກຍາກ ສາມາດເຮັດໜ້າທີ່ ໃນການສະໜອງທຶນ ໃຫ້ແກ່ການຫຼຸດຜ່ອນຄວາມທຸກຍາກ ແລະ ພັດທະນາຊົນນະບົດ ໂດຍຜ່ານບັນດາ

ໂຄງການ ແລະ ກິດຈະກຳ ທີ່ຈັດຕັ້ງປະຕິບັດ ໂດຍບັນດາກົມຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ກະຊວງ ອື່ນໆ ທີ່ກ່ຽວຂ້ອງ, ໂດຍການຮ່ວມມືກັບບັນດາ ອົງການຈັດຕັ້ງພັດທະນາ ທັງພາກລັດ ແລະ ພາກເອກະຊົນ.

ຂະແໜງກະສິກຳ ແລະ ສິ່ງແວດລ້ອມ ເຊື່ອໝັ້ນວ່າ ແຜນລະດົມທຶນດັ່ງກ່າວ ຈະຊ່ວຍປະກອບສ່ວນໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາຊົນນະບົດ ຢູ່ ສປປ ລາວ ແລະ ໂດຍອີງໃສ່ ປະສົບການຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກ ທີ່ມີໄດ້ຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນໄລຍະຜ່ານມາ ແລະ ການສະໜັບສະໜູນຢ່າງຕໍ່ເນື່ອງ ຈາກຄູ່ຮ່ວມພັດທະນາ ແລະ ການຮ່ວມມືຂອງຂະແໜງການຕ່າງໆທີ່ກ່ຽວຂ້ອງ, ພວກເຮົາເຊື່ອໝັ້ນວ່າ ຈະສາມາດ ບັນລຸເປົ້າໝາຍຮ່ວມກັນ ໃນການເສີມສ້າງຄວາມເຂັ້ມແຂງ ແລະ ການປັບປຸງຊີວິດການເປັນຢູ່ ຂອງຊຸມຊົນຊົນນະບົດ ໃນ ສປປ ລາວ.

ທ້າຍສຸດນີ້, ຂະແໜງກະສິກຳ ແລະ ສິ່ງແວດລ້ອມ ຂໍສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຂອບໃຈ ມາຍັງທຸກພາກສ່ວນ ໂດຍສະເພາະ ກຳມະການສະພາບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ, ທະນາຄານໂລກ, ຄູ່ຮ່ວມພັດທະນາ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ທີ່ໃຫ້ການສະໜັບສະໜູນ ແລະ ການປະກອບຄຳຄິດເຫັນຕ່າງໆ ຕໍ່ການສ້າງແຜນລະດົມທຶນສະບັບນີ້ ແລະ ຫວັງວ່າ ຈະໃຫ້ການສືບຕໍ່ສະໜັບສະໜູນ ໃນການຈັດຕັ້ງປະຕິບັດແຜນການລະດົມທຶນສະບັບນີ້ ໃຫ້ປະກົດຜົນເປັນຈິງ.

ນະຄອນຫຼວງວຽງຈັນ, ວັນທີ 01 SEP 2025

ຊທ. **ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ລັດຖະມົນຕີ

**ກິແກ້ວ ສິງບາວົງ**

# ບົດສະຫຼຸບຫຍໍ້

ວິໄສທັດ ຂອງ ແຜນລະດົມທຶນ ສໍາລັບ ວຽກງານສ້າງຄວາມເຂັ້ມແຂງດ້ານການດໍາລົງຊີວິດ ແລະ ແກ້ໄຂຄວາມທຸກຍາກ ຢູ່ ເຂດຊົນນະບົດ (RLRPP) ແຕ່ປີ 2026-2030 ສໍາລັບ ກອງທຶນຫຼຸດຜ່ອນຄວາມທຸກຍາກ ແມ່ນເພື່ອເພີ່ມຄວາມເຂັ້ມຂຸ້ນ ແລະ ເລັ່ງການຈັດຕັ້ງປະຕິບັດແຜນງານພັດທະນາຊົນນະບົດ ຂອງ ທລຍ ເພື່ອແກ້ໄຂຄວາມຕ້ອງການໃໝ່ ຂອງ ການພັດທະນາຊຸມຊົນທີ່ບອບບາງ ແລະ ຢູ່ເຂດຫ່າງໄກສອກຫຼີກ, ແລະ ຂອງປະຊາຊົນຜູ້ທຸກຍາກ ຢູ່ ສປປ ລາວ. ດ້ວຍການສະໜອງການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃຫ້ ກົມກອງພາຍໃຕ້ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ (ກສ), ອົງການກ່ຽວຂ້ອງ ແລະ ອົງການອື່ນໆ ຂອງ ລັດຖະບານ, ທລຍ ມີເປົ້າໝາຍປັບປຸງຄຸນນະພາບຊີວິດ, ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ຄວາມທົນທານ ຕໍ່ ການປ່ຽນ ແປງດິນຟ້າອາກາດ ແລະ ການຫັນການຜະລິດກະສິກໍາເປັນທັນສະໄໝ ໃນເຂດຕ່າງໆ ທີ່ຖືກກະທົບຈາກ ເຫດການດິນຟ້າອາກາດປ່ຽນແປງ ຊຶ່ງເກີດຂຶ້ນຖີ່ ແລະ ຮຸນແຮງ ຫຼາຍຂຶ້ນ.

ແຜນລະດົມທຶນ RLRPP ຂອງ ທລຍ ສະໜັບສະ□□ນບັນດານະໂຍບາຍ, ຍຸດທະສາດ, ແຜນງານ ແລະ ທິດຊີ້ນໍາຕ່າງໆ ຂອງ ລັດຖະບານ ສໍາລັບ ໄລຍະ 2025-2030 ໂດຍສອດຄ່ອງກັບ:

- ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສະບັບທີ 10 (ແຜນສິບ): ປັບປຸງຄຸນນະພາບຊີວິດ, ເສີມຂະຫຍາຍການຂະຫຍາຍຕົວຂອງເສດຖະກິດ, ສ້າງເສດຖະກິດເປັນເອກະລາດເປັນເຈົ້າຕົນເອງ, ປັບປຸງຊັບພະຍາກອນມະນຸດ, ປັບປຸງປະສິດທິພາບການຄຸ້ມຄອງບໍລິຫານລັດ, ແລະ ຮ່ວມມືກັບສາກົນ; ແລະ,
- ແຜນພັດທະນາ ກະສິກໍາ, ປ່າໄມ້ ແລະ ຊົນນະບົດ ຫ້າປີ ສະບັບທີ 10 (AFRDP): ຮັບປະກັນ ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ສົ່ງເສີມການຜະລິດກະສິກໍາເປັນສິນຄ້າ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ, ປຸງແຕ່ງຜະລິດຕະພັນກະສິກໍາ ແລະ ປ່າໄມ້ ແລະ ລຶບລ້າງຄວາມທຸກຍາກຢູ່ເຂດຊົນນະບົດ.

ຈຸດປະສົງການພັດທະນາໃນໄລຍະຍາວ ຂອງ ແຜນລະດົມທຶນ RLRPP ແມ່ນເພື່ອປັບປຸງຊີວິດການເປັນຢູ່ ໃນເຂດຊົນນະບົດ ແລະ ຮັບປະກັນການບໍລິໂພກອາຫານຫຼາກຫຼາຍ ສໍາລັບ ຊຸມຊົນທີ່ມີຄວາມສ່ຽງສູງ ໃນຂະນະດຽວກັນມີຄວາມສາມາດຕອບໂຕ້ແກ້ໄຂວິກິດ ຫຼື ເຫດສຸກເສີນຕ່າງໆ ໄດ້ຢ່າງວ່ອງໄວ. ທລຍ ມີເປົ້າໝາຍເຮັດໜ້າທີ່ເປັນ ອົງການຈັດຕັ້ງປະຕິບັດ ໂດຍເຮັດວຽກປະສານສົມທົບ ກັບ ກົມກອງ ພາຍໃຕ້ ກະຊວງກະສິກໍາ ແລະ ສິ່ງແວດລ້ອມຕະຫຼອດເຖິງ ບັນດາອົງການກ່ຽວຂ້ອງຂອງລັດ ທີ່ຈັດຕັ້ງປະຕິບັດການພັດທະນາຊົນນະບົດ ເພື່ອແກ້ໄຂຄວາມຕ້ອງການ ຂອງ ປະຊາຊົນ ທີ່ດໍາລົງຊີວິດຢູ່ຕາມບັນດາຊຸມຊົນທີ່ມີຄວາມສ່ຽງທີ່ສຸດ.

ແຜນລະດົມທຶນ RLRPP ມີສອງຈຸດປະສົງດ້ານຜົນດໍາເນີນງານ:

- ການມີສ່ວນຮ່ວມ: ການມີສ່ວນຮ່ວມ ຂອງ ຊຸມຊົນ, ອົງການຈັດຕັ້ງ ຂອງ ພາກລັດ ແລະ ເອກະຊົນ, ແລະ ຄູ່ຮ່ວມພັດທະນາສາກົນ ໃນການຮ່ວມມື ກັບ ລັດຖະບານ ເພື່ອແກ້ໄຂຄວາມທຸກຍາກ ແລະ ສົ່ງເສີມການພັດທະນາຊົນນະບົດແບບຍືນຍົງ.
- ການປັບປຸງດ້ານການຈັດຕັ້ງ: ເພື່ອປັບປຸງສະຖານະທາງການຈັດຕັ້ງ ຂອງ ທລຍ ພາຍໃນ ໂຄງຮ່າງການຈັດຕັ້ງ ຂອງ ກສ ເຮັດໃຫ້ ທລຍ ມີຄວາມສາມາດສະໜັບສະໜູນ ບັນດາໂຄງການພັດທະນາຊົນນະບົດ ແລະ ແກ້ໄຂ

ຄວາມທຸກຍາກ ໄດ້ຢ່າງມີປະສິດທິຜົນ ສອດຄ່ອງກັບ ຂໍ້ຕົກລົງ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍ ການສ້າງຕັ້ງ ຄະນະກຳມະການຂັ້ນສູນກາງ ຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

ຂົງເຂດຈຸດສຸມ ຂອງ ແຜນລະດົມທຶນ RLRPP ແຕ່ປີ 2026-2030 ມີຄວາມສອດຄ່ອງກັບ ບັນດາແຜນງານ ທີ່ຖືກກຳນົດໄວ້ໃນ ແຜນສິບ ແລະ ເສົາຄ້ຳ ຂອງ ແຜນພັດທະນາກະສິກຳ-ປ່າໄມ້ ແລະ ຊົນນະບົດ ໄລຍະຫ້າປີ ສະບັບ ທີ 10 ຂອງ ກສ. ທລຍ ໃນຖານະເປັນອົງການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ມີແຜນຈະສະໜັບສະໜູນ ບັນດາໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ສຸມໃສ່ ຂົງເຂດດັ່ງຕໍ່ໄປນີ້:

- ການຜະລິດກະສິກຳເພື່ອການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ແລະ ການປັບປຸງຊີວິດການເປັນຢູ່ໃຫ້ສາມາດເພິ່ງພາຕົນເອງໄດ້.
- ການຜະລິດກະສິກຳເປັນສິນຄ້າ, ສາມາດເຂົ້າເຖິງຕະຫຼາດ, ແລະ ປັບປຸງການຕະຫຼາດໃຫ້ຜະລິດຕະພັນເຫຼົ່ານັ້ນ
- ກະສິກຳ-ປ່າໄມ້, ການປູກເຄື່ອງປ່າຂອງດົງ ແລະ ການປຸງແຕ່ງກະສິກຳ
- ການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ຄວາມຕໍ່ເນື່ອງ ຂອງ ແຜນງານ ທລຍ

ດ້ວຍການເຮັດວຽກແກ້ໄຂບັນດາຫົວຂໍ້ເຫຼົ່ານີ້, ແຜນລະດົມທຶນ RLRPP ມີເປົ້າໝາຍປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ພາຍໃນຊຸມຊົນຊົນນະບົດ ຢູ່ ສປປ ລາວ ຮັບປະກັນການພັດທະນາໃນໄລຍະຍາວ ແລະ ແກ້ໄຂຄວາມທຸກຍາກ.

# ພາກສະເໜີ

1. <u>ຈຸດປະສົງ</u> ຂອງ ແຜນລະດົມທຶນ ສຳລັບ ວຽກງານສ້າງຄວາມເຂັ້ມແຂງດ້ານການດຳລົງຊີວິດ ແລະ ແກ້ໄຂຄວາມທຸກຍາກ ຢູ່ ເຂດຊົນນະບົດ (RLRPP), ແຕ່ປີ 2026-2030 ແມ່ນເພື່ອສະແດງໃຫ້ ບັນດາພາກສ່ວນກ່ຽວຂ້ອງ ຫຼັກ ແລະ ຄູ່ຮ່ວມພັດທະນາ ຂອງ ລັດຖະບານ ແຫ່ງ ສປປ ລາວ ເຫັນໄດ້ ເຖິງວິທີ ທີ່ກອງທຶນຫຼຸດ ຜ່ອນຄວາມທຸກຍາກ (ທລຍ) ຈະນຳໃຊ້ປະສົບການພັດທະນາຊົນນະບົດ ຫຼາຍກວ່າ 20 ປີ ເພື່ອສ້າງຄວາມເຂັ້ມ ແຂງໃຫ້ ແຜນງານພັດທະນາຊຸມຊົນ ແລະ ແກ້ໄຂຄວາມທຸກຍາກ. ດ້ວຍການຈັດຕັ້ງປະຕິບັດ ແຜນລະດົມທຶນ RLRPP, ທລຍ ມີເປົ້າໝາຍ ສືບຕໍ່ປັບປຸງຄວາມເປັນເອກະລາດເປັນເຈົ້າຕົນເອງ ຂັ້ນຄົວເຮືອນແລະຂັ້ນບ້ານ, ຍົກລະດັບຄຸນນະພາບຊີວິດ, ປັບປຸງ ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ຊີວິດການເປັນຢູ່, ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ, ແລະ ປັບປຸງ ການຫັນ ການຜະລິດກະສິກຳ ໃຫ້ທັນສະໄໝ ສຳລັບ ຄົວເຮືອນທຸກຍາກຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ ແລະ ເຂດທີ່ມີຄວາມບອບບາງ ຢູ່ ສປປ ລາວ. ແຜນຂອງ ໂຄງການ ແມ່ນມີເປົ້າໝາຍແນໃສ່ ເຂດ ບອບບາງ ຊຶ່ງໄດ້ຮັບຜົນກະທົບຈາກເຫດການປ່ຽນແປງດິນຟ້າອາກາດ ທີ່ເກີດຂຶ້ນ ຖີ່ ແລະ ມີຄວາມຮຸນແຮງຫຼາຍຂຶ້ນ.

2. <u>ເຫດຜົນ</u> ໃນການກະກຽມ ແຜນລະດົມທຶນ **RLRPP** ສຳລັບ ທລຍ ແມ່ນຄວາມຈຳເປັນທີ່ຕ້ອງຮັບປະກັນໃຫ້ ບັນດາກິດຈະກຳແກ້ໄຂຄວາມທຸກຍາກ ມີຄວາມຍືນຍົງ, ສອດຄ່ອງ ແລະ ມີປະສິດທິຜົນ ໂດຍສາມາດປັບຕົວຕາມສະພາບເງື່ອນໄຂທີ່ມີການປ່ຽນແປງ ແລະ ສາມາດດຶງດູດເອົາການຊ່ວຍເຫຼືອຈາກສາກົນ.
    - ການພັດທະນາແບບຍືນຍົງ: ໝາຍເຖິງ ແຜນການໄລຍະຍາວໃດໜຶ່ງ ທີ່ຮັບປະກັນວ່າ: ຄວາມພະຍາຍາມຫຼຸດ ຜ່ອນຄວາມທຸກຍາກ ມີຄວາມຍືນຍົງ ແລະ ບໍ່ເປັນພຽງແຕ່ການແກ້ໄຂໃນໄລຍະສັ້ນ. ແຜນການໃນລັກສະ ນະດັ່ງກ່າວ ຊ່ວຍໃຫ້ສາມາດຈັດຕັ້ງປະຕິບັດ ບັນດາແຜນງານຄົບຖ້ວນຮອບດ້ານ ທີ່ແກ້ໄຂ ກົກເຫດຂອງຄວາມທຸກຍາກ.
    - ຄວາມສອດຄ່ອງ ແລະ ຄວາມຕໍ່ເນື່ອງ: ໝາຍເຖິງ ແຜນການໃດໜຶ່ງ ທີ່ສະໜອງຂອບວິທີການດຳເນີນງານທີ່ສອດຄ່ອງ ສຳລັບ ບັນດາຂໍ້ລິເລີ່ມແກ້ໄຂຄວາມທຸກຍາກ ໂດຍຮັບປະກັນວ່າ: ບັນດາຄວາມພະຍາຍາມຕ່າງໆ ຈະບໍ່ຖືກກະທົບ ຈາກ ການປ່ຽນແປງຂອງເສດຖະກິດ.
    - ການມີກຳນົດໄລຍະເວລາທີ່ຈະແຈ້ງ ເຮັດໃຫ້ສະດວກງ່າຍຂຶ້ນ ໃນການກຳນົດ ເປົ້າໝາຍ ທີ່ມີລັກສະນະສະເພາະເຈາະຈົງ ສາມາດວັດແທກໄດ້ ແລະ ງ່າຍໃນການຕິດຕາມຄວາມຄືບໜ້າ ຕາມໄລຍະເວລາ ຊຶ່ງຈະຊ່ວຍໃນການປະເມີນ ປະສິດທິຜົນ ຂອງ ບັນດາແຜນງານຕ່າງໆ ແລະ ດັດປັບຕາມຄວາມຈຳເປັນ.
    - ການຈັດສັນຊັບພະຍາກອນ: ແຜນໃນໄລຍະຍາວ ຈະຊ່ວຍໃຫ້ສາມາດຈັດສັນຊັບພະຍາກອນຕ່າງໆ ໄດ້ດີຍິ່ງຂຶ້ນ. ຮັບປະກັນວ່າ: ທຶນຈາກແຫຼ່ງຕ່າງໆ ໄດ້ຖືກນຳໃຊ້ ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ໃນການບັນລຸ ຜົນໄດ້ຮັບທີ່ຕ້ອງການ.
    - ການມີສ່ວນຮ່ວມ ຂອງ ຊຸມຊົນ: ແຜນດັ່ງກ່າວ ສາມາດສຸມໃສ່ ການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ ດ້ວຍການລວມເອົາເຂົາເຈົ້າ ເຂົ້າຮ່ວມ ໃນຂະບວນການວາງແຜນ ແລະ ຈັດຕັ້ງປະຕິບັດ. ວິທີນີ້ ຈະຊ່ວຍເສີມຂະຫຍາຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບ ຂອງ ບັນດາຜູ້ໄດ້ຮັບຜົນປະໂຫຍດ.

- ການຂະຫຍາຍຕົວຂອງເສດຖະກິດ: ດ້ວຍການແກ້ໄຂຄວາມທຸກຍາກ, ແຜນດັ່ງກ່າວ ຈະປະກອບສ່ວນເຮັດໃຫ້ເສດຖະກິດຂະຫຍາຍຕົວ ຊຶ່ງຈະຊ່ວຍສືບຕໍ່ຫຼຸດຜ່ອນຄວາມທຸກຍາກ, ເພີ່ມປະສິດທິພາບ ແລະ ປັບປຸງຄວາມເປັນເອກະລາດເປັນເຈົ້າຕົນເອງ.
- ການຊ່ວຍເຫຼືອຈາກສາກົນ: ບັນດາອົງການຈັດຕັ້ງສາກົນ ນິຍົມ ແຜນໄລຍະຍາວ ທີ່ມີໂຄງສ້າງເປັນຢ່າງດີ. ມີຄວາມເປັນໄປໄດ້ສູງ ທີ່ຄູ່ຮ່ວມພັດທະນາ ຂອງ ລັດຖະບານແຫ່ງ ສປປ ລາວ ຈະລົງທຶນ ໃສ່ ບັນດາໂຄງການ ຊຶ່ງມີຈຸດປະສົງທີ່ຈະແຈ້ງ ໃນໄລຍະຍາວ ແລະ ມີປະຫວັດຄວາມສຳເລັດ ທີ່ພິສູດໃຫ້ເຫັນແລ້ວ.

3. ແຜນລະດົມທຶນ RLRPP ຈະພິຈາລະນາ ວິທີນຳໃຊ້ການຊ່ວຍເຫຼືອ ໃນອະນາຄົດ ຈາກຄູ່ຮ່ວມພັດທະນາຕ່າງໆ ເພື່ອ ສ້າງຄວາມເຂັ້ມແຂງ ໃຫ້ ທລຍ ໃນການແກ້ໄຂບັນດາສິ່ງທ້າທາຍໃນປະຈຸບັນ ແລະ ທີ່ເກີດຂຶ້ນໃໝ່ ຊຶ່ງຜະເຊີນໂດຍຄົນທຸກຍາກຢູ່ເຂດຊົນນະບົດ ໃຫ້ມີປະສິດທິຜົນ ແລະ ມີປະສິດທິພາບ ຍິ່ງຂຶ້ນກວ່າເດີມ ແລະ ໝູນໃຊ້ບົດຮຽນການເຄື່ອນໄຫວທີ່ປະສົບຜົນສຳເລັດຜ່ານມາ ຂອງ ທລຍ ພາຍໃຕ້ການຊ່ວຍເຫຼືອ ຂອງ ທະນາຄານໂລກ ແລະ ຄູ່ຮ່ວມພັດທະນາອື່ນໆ.

4. ເພື່ອປັບປຸງ ປະສິດທິຜົນ ຂອງ ແຜນງານແກ້ໄຂຄວາມທຸກຍາກ ຂອງ ທລຍ, ແຜນລະດົມທຶນ RLRPP ຂໍສະ ເໜີດັດປັບ ຂອດການປະສານງານທີ່ມີຢູ່ໃນປະຈຸບັນ ເພື່ອເຮັດໃຫ້ ທລຍ ກາຍເປັນ ກົນໄກລວມສູນຮັບຜິດຊອບ ການຈັດຕັ້ງປະຕິບັດແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຜ່ານ ບັນດາໂຄງການ ແລະ ກິດຈະກຳ ທີ່ຈັດຕັ້ງປະຕິດບັນໂດຍ ອົງການກ່ຽວຂ້ອງ ພາຍໃຕ້ ກະຊວງກະສິກຳແລະສິ່ງແວດລ້ອມ (ກສ) ແລະ ກະຊວງຂະແໜງການອື່ນໆທີ່ກ່ຽວຂ້ອງ ຂອງ ລັດຖະບານ ທີ່ຮ່ວມມືກັບ ອົງການພັດທະນາຂອງພາກລັດ ແລະ ເອກະຊົນອື່ນໆ.

5. ການນຳສະເໜີ ແຜນລະດົມທຶນ RLRPP ສຳລັບ ທລຍ ຖືກແບ່ງອອກເປັນຫ້າພາກ ລະອຽດມີຄື: ພາກ 1 ສະຫຼຸບສັງລວມຜົນການເຄື່ອນ ໄຫວ ຂອງ ທລຍ ຕະຫຼອດໄລຍະ 20 ກວ່າປີ ຜ່ານມາ ໃນການຈັດຕັ້ງປະຕິບັດການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ທີ່ໄດ້ຮັບ ຈາກ ທະນາຄານໂລກ ແລະ ອົງການໃຫ້ການຊ່ວຍເຫຼືອສອງຝ່າຍອື່ນໆ. ພາກ 2 ນຳສະເໜີ ວິໄສທັດ, ຈຸດປະສົງ, ແລະ ກຸ່ມເປົ້າໝາຍ ຂອງ ແຜນລະດົມທຶນ RLRPP. ພາກ 3 ນຳສະເໜີ ຂົງເຂດການຊ່ວຍເຫຼືອ ແລະ ຄາດໝາຍຜົນໄດ້ຮັບ ຂອງ ແຜນລະດົມທຶນ **RLRPP** ສຳລັບ ທລຍ. ພາກ 4 ນຳສະ ເໜີໂຄງຮ່າງການຈັດຕັ້ງ ແລະ ຂອດການປະສານງານ ເພື່ອຈັດຕັ້ງປະຕິບັດແຜນລະດົມທຶນ RLRPP ສຳລັບ ທລຍ. ແລະ ພາກ 5 ນຳສະເໜີ ບາດກ້າວໃນຕໍ່ໜ້າ ທີ່ ທລຍ ຄວນພິຈາລະນາ ໃນຂະບວນການວາງແຜນກ້າວໄປສູ່ ການສ້າງສຳເລັດບົດສະເໜີ ແຜນລະດົມທຶນ RLRPP. ເອກະສານຊ້ອນທ້າຍ 1 ສັງລວມບັນດາດຳລັດກ່ຽວຂ້ອງ ຂອງ ລັດຖະ ບານ ທີ່ກຳນົດຂອບນະໂຍບາຍ ສຳລັບ ວຽກງານແກ້ໄຂຄວາມທຸກຍາກ, ການພັດທະນາກະສິກຳ ແລະ ຊົນນະ ບົດ. ເອກະສານຊ້ອນທ້າຍ 2 ສັງລວມແຜນທີ່ ສະແດງຈຸດທີ່ຕັ້ງການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ຂອງ ທລຍ ທັງໃນອາດີດ ແລະ ປະຈຸບັນ.

## ພາກທີ 1: ປະເມີນຜົນການເຄື່ອນໄຫວໃນໄລຍະຜ່ານມາ

## 1.1 ຂອບນະໂຍບາຍ ແລະ ນິຕິກຳ ສຳລັບ ການພັດທະນາຊົນນະບົດ

6. ວຽກງານແກ້ໄຂຄວາມທຸກຍາກ ຖືເປັນບູລິມະສິດຂັ້ນສູງ ຂອງ ລັດຖະບານ ນັບຕັ້ງແຕ່ ການສ້າງຕັ້ງ ທລຍ ໃນປີ 2002 ເປັນຕົ້ນມາ. ທລຍ ໄດ້ປະກອບສ່ວນ ເຂົ້າໃນ ວຽກງານແກ້ໄຂຄວາມທຸກຍາກ ດ້ວຍການສະໜັບສະ ໜູນການຜັນຂະຫຍາຍ ບັນດານະໂຍບາຍ ທີ່ຖືກກຳນົດໄວ້ໃນ ບັນດາແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ໄລຍະຫ້າປີ (ແຜນຫ້າປີ).

- ຈຸດປະສົງຕົ້ນຕໍ ຂອງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະຫ້າປີ ຄັ້ງທີ 5 (ສຳລັບ ໄລຍະ 2001-2005) (ແຜນຫ້າ) ລວມມີຄື: ການນຳພາປະເທດ ຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ ຂອງ ອົງການສະຫະປະຊາຊາດ (ສປຊ) ໃຫ້ໄດ້ພາຍໃນປີ 2020; ບັນລຸການຂະຫຍາຍຕົວ ຂອງ GDP ປະຈຳປີ ສະເລ່ຍທີ່ 7-7,5 ສ່ວນຮ້ອຍ; ລົບລ້າງການຖາງປ່າເຮັດໄຮ່ ແລະ ການປູກຝິ່ນ; ແລະ ເຮັດໃຫ້ຄວາມທຸກຍາກ ຫຼຸດລົງເຄິ່ງໜຶ່ງ ພາຍໃນປີ 2005 ຜ່ານການຈັດຕັ້ງປະຕິບັດ ບັນດາແຜນງານແກ້ໄຂຄວາມທຸກຍາກ.
- ແຜນຫ້າປີ ຄັ້ງທີ 6 (2006-2010) ໄດ້ສຸມໃສ່ ຍຸດທະສາດການພັດທະນາເສດຖະກິດສັງຄົມໄລຍະຍາວ ຮອດປີ 2020 ຊຶ່ງລວມເອົາ ຍຸດທະສາດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ຍຸດທະສາດການເຕີບໂຕ ແລະ ລົບລ້າງຄວາມທຸກຍາກ ແຫ່ງຊາດ (NGPES), ການເຊື່ອມໂຍງເຂົ້າກັບພາກພື້ນ, ແລະ ການແກ້ໄຂການຄໍ້າປະກັນສະບຽງອາຫານ ຢູ່ໃນບັນດາເມືອງທຸກຍາກທີ່ສຸດ.
- ແຜນຫ້າປີ ຄັ້ງທີ 7 (2011-2015) ມີເປົ້າໝາຍແນໃສ່ ສ້າງຄວາມພຽງພໍດ້ານສະບຽງອາຫານ ພາຍໃນປະເທດ ດ້ວຍການສົ່ງເສີມ ເຕັກໂນໂລຊີການຜະລິດກະສິກຳທັນສະໄໝ, ສົ່ງເສີມທຸລະກິດກະສິກຳ, ປັບປຸງມາດຕະການທາງດ້ານການເງິນ ແລະ ສ່ວຍສາອາກອນ, ແລະ ການພັດທະນາຊັບພະຍາກອນມະນຸດ. ແຜນຫ້າປີ ສະບັບດັ່ງກ່າວ ຍັງໄດ້ເນັ້ນໜັກ ການສ້າງຄວາມເຂັ້ມແຂງໃຫ້ແກ່ ກຸ່ມຜູ້ຜະລິດກະສິກຳຂະໜາດນ້ອຍ ເພື່ອເຮັດການຜະລິດເປັນສິນຄ້າ, ການພັດທະນາທີ່ດິນ ສຳລັບ ການຜະລິດສະບຽງອາຫານ, ແລະ ການພັດທະນາເຂດຜະລິດກະສິກຳ ຕາມທົ່ງພຽງບູລິມະສິດເຈັດແຫ່ງ ແລະ ເຂດການຜະລິດກະສິກຳເນີນສູງ ຢູ່ພາກເໜືອ.
- ແຜນຫ້າປີ ຄັ້ງທີ 8 (2016-2020) ມີເປົ້າໝາຍແນໃສ່ຮັກສາລະດັບການຂະຫຍາຍຕົວຂອງເສດຖະກິດ ດ້ວຍການຮັບປະກັນ ການພັດທະນາຊັບພະຍາກອນມະນຸດ ແລະ ຊົນນະບົດໃຫ້ກວມລວມທົ່ວເຖິງ ແລະ ຂະຫຍາຍການຂະຫຍາຍຕົວ ຂອງ ຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 3,4 ສ່ວນຮ້ອຍ ຕໍ່ປີ. ເປົ້າໝາຍຫຼັກ ແມ່ນການແກ້ໄຂຄວາມທຸກຍາກ ໃຫ້ແກ່ກຸ່ມປະຊາຊົນບັນດາເຜົ່າຢູ່ເຂດພູດອຍ. ແຜນຫ້າປີ ສະ ບັບທີ 8 ຍັງເນັ້ນໜັກ ການຄໍ້າປະກັນສະບຽງອາຫານແລະໂພຊະນາການ, ການຜະລິດກະສິກຳເປັນສິນຄ້າ, ແລະ ການປຸງແຕ່ງເພີ່ມມູນຄ່າ ໃຫ້ ຜະລິດຕະພັນກະສິກຳ-ປ່າໄມ້. ແຕ່ບັນດາຈຸດປະສົງ ຂອງ ແຜນຫ້າປີ ສະບັບດັ່ງກ່າວ ແມ່ນຖືກຈຳກັດ ຈາກ ຜົນກະທົບທາງດ້ານເສດຖະກິດ-ສັງຄົມ ທີ່ເກີດຈາກ ພະຍາດລະບາດໂຄວິດ 19.
- ຈຸດປະສົງ ຂອງ ແຜນຫ້າປີ ຄັ້ງທີ 9 (2021-2025) ແມ່ນເພື່ອຮັບປະກັນ ການຄໍ້າປະກັນສະບຽງອາຫານ, ສົ່ງເສີມການຜະລິດພືດກະສິກຳເປັນສິນຄ້າ, ແລະ ສ້າງຄວາມເຂັ້ມແຂງໃຫ້ ການສະໜອງເມັດພັນ ທີ່ມີຄຸນນະພາບສູງ, ປັບປຸງ ພໍ່ພັນແມ່ພັນສັດລ້ຽງ ແລະ ຄວາມສາມາດ ຂອງ ອົງການຈັດຕັ້ງຂອງຊາວກະສິກອນ

ເພື່ອສ້າງສະຖຽນລະພາບ ໃຫ້ ການສະໜອງຜະລິດຕະພັນກະສິກຳ. ແຜນຫ້າປີ ສະບັບດັ່ງກ່າວ ຍັງສະໜັບສະໜູນການພັດທະນາຊັບພະຍາກອນມະນຸດ ເພື່ອສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ກາງ. ມີການຊຸກຍູ້ໃຫ້ເພີ່ມການສິນທະນາແລກປ່ຽນ ລະຫວ່າງ ພາກລັດ ແລະ ເອກະຊົນ ເພື່ອສ້າງຕ່ອງໂສ້ມູນຄ່າກະສິກຳ ທີ່ລວມເອົາ ການຜະລິດກະສິກຳ, ການປຸງແຕ່ງ ແລະ ການຕະຫຼາດ ກໍຄື ການພັດທະນາໂຄງລ່າງພື້ນຖານຊົນນະບົດ. ແຕ່ການຈັດຕັ້ງປະຕິບັດແຜນຫ້າປີ ສະບັບດັ່ງກ່າວ ພົບວ່າ: ຍັງຄົງຖືກຈຳກັດ ຈາກ ຜົນກະທົບທາງດ້ານເສດຖະກິດ-ສັງຄົມ ຍ້ອນພະຍາດລະບາດໂຄວິດ 19 ຊຶ່ງໃນນັ້ນລວມເອົາ ຄວາມຫຼົ້ມເຫຼວຂອງ ຕ່ອງໂສ້ການສະໜອງສິນຄ້າ ທີ່ເປັນຜົນນຳໄປສູ່ບັນຫາເງິນເຟີ້ໃນລະດັບສູງ. ແຜນຫ້າປີ ສະບັບດັ່ງກ່າວ ມີເປົ້າໝາຍ ຢາກກ້າວໄປສູ່ການເຮັດບັນລຸ ເປົ້າໝາຍພັດທະນາສະຫະສະວັດ (ປພຍ) ຂອງ ອົງການ ສປຊ ດ້ວຍການແກ້ໄຂຄວາມທຸກຍາກ ແລະ ປັບປຸງດັດສະນີໝາຍການພັດທະນາຊັບພະຍາກອນມະນຸດ ຊຶ່ງຈຳເປັນຕໍ່ການນຳເອົາປະເທດຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ ໃຫ້ໄດ້ພາຍໃນປີ 2024.

7. ຫຼາກຫຼາຍການປະເມີນ ທີ່ມີຕໍ່ ການເຄື່ອນໄຫວເຮັດວຽກ ຂອງ ທລຍ ນັບແຕ່ປີ 2003 ເປັນຕົ້ນມາ ໄດ້ຢັ້ງຢືນວ່າ: ການເຄື່ອນໄຫວ ຂອງ ທລຍ ມີຄວາມເປັນມືອາຊີບ ແລະ ສອດຄ່ອງກັບ ແຜນຫ້າປີ ທັງຫ້າສະບັບ ທີ່ກ່າວເຖິງຂ້າງເທິງນັ້ນ ພ້ອມນັ້ນ ຍັງໄດ້ປະກອບສ່ວນເຂົ້າໃນ ການບັນລຸ ບັນດາຈຸດປະສົງທີ່ກຳນົດໄວ້ໃນແຜນເຫຼົ່ານັ້ນ. ວິທີການດຳເນີນງານ ຂອງ ທລຍ ແມ່ນການລວມເອົາ ຊຸມຊົນ ເຂົ້າມີສ່ວນຮ່ວມ ໃນການບົວລະບັດຮັກສາ ແລະ ປັບປຸງໂຄງລ່າງພື້ນຖານຊົນນະບົດ ດ້ວຍການຈັດຕັ້ງ ກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ (ກຊກ), ກຸ່ມຜະລິດ, ກຸ່ມບົວລະບັດຮັກສາເສັ້ນທາງ (RMG), ແລະ ກຸ່ມແຮງງານຊຸມຊົນຊ່ວຍສ້າງໂຄງລ່າງພື້ນຖານ. ການລົງທຶນໃສ່ ໂຄງລ່າງພື້ນຖານຊົນນະບົດ ດ້ວຍການນຳໃຊ້ແຮງງານ ຂອງ ປະຊາຊົນພາຍໃນບ້ານ (ຊຶ່ງສີມືແຮງງານຂອງເຂົາເຈົ້າ ໄດ້ຮັບການຍົກລະດັບ ໂດຍ ທລຍ) ລວມເອົາ: ວຽກບົວລະບັດຮັກສາເສັ້ນທາງ, ລະບົບຊົນລະປະທານຂະໜາດນ້ອຍ ແລະ ຄອງຊົນລະປະທານ, ນໍ້າປະປາຊຸມຊົນ, ປັບປຸງໂຮງຮຽນ ແລະ ສຸກສາລາ, ຄອກສັດ ແລະ ອື່ນໆ. ທລຍ ໄດ້ລະດົມແຮງງານທ້ອງຖິ່ນ ເພື່ອເຮັດໜ້າທີ່ບົວລະບັດຮັກສາໂຄງລ່າງພື້ນຖານຊົນນະບົດ ເພື່ອຕອບສະໜອງຄວາມຕ້ອງການເງິນສົດດ່ວນ ຂອງ ບັນດາຄົວເຮືອນຢູ່ເຂດຊົນນະບົດ, ສ້າງຄວາມເຂັ້ມແຂງໃຫ້ວຽກປັບຕົວກັບການປ່ຽນແປງດິນຟ້າອາກາດ, ແລະ ສະໜັບສະໜູນ ກິດຈະກຳຜະລິດກະສິກຳ ເປັນສິນຄ້າ ແລະ ກິດຈະກຳສ້າງເສດຖະກິດອື່ນໆ ທີ່ບໍ່ແມ່ນຂະແໜງກະສິກຳ ໃຫ້ມີຜະລິດຕະພາບຫຼາຍຂຶ້ນ ກໍຄື ສ້າງ ໂຄງລ່າງພື້ນຖານປ້ອງກັນໄພພິບັດ ເພື່ອຈຳກັດຜົນກະທົບ ຈາກ ໄພພິບັດທຳມະຊາດ.

8. ບັນດາໂຄງການຊ່ວຍເຫຼືອ ຈາກ ທະນາຄານໂລກ ຊຶ່ງຈັດຕັ້ງປະຕິບັດໂດຍ ທລຍ ໃນໄລຍະຜ່ານມາ ໄດ້ປະກອບສ່ວນປັບປຸງ ການເຂົ້າເຖິງ ໂຄງລ່າງພື້ນຖານ ໃຫ້ປະຊາຊົນຜູ້ໄດ້ຮັບຜົນປະໂຫຍດໃນເຂດຊົນນະບົດ ໄດ້ຫຼາຍກວ່າ 1 ລ້ານຄົນ ຜ່ານ ການກໍ່ສ້າງ ໂຄງລ່າງພື້ນຖານຂະໜາດນ້ອຍ ຫຼາຍກວ່າ 6,000 ແຫ່ງ. ອີງຕາມຂໍ້ມູນ ປີ 2020, ປະມານ 10,000 ຄົວເຮືອນ ໄດ້ມີການລົງທຶນເພີ່ມເຕີມ ເພື່ອປັບປຸງຊີວິດການເປັນຢູ່ ຂອງ ເຂົາເຈົ້າ ພາຍ

ໃຕ້ ການຊ່ວຍເຫຼືອ ຈາກ ທລຍ III. ການປະເມີນທາງດ້ານວິຊາການ ຂອງ ຕົວຊີ້ບອກຜົນການຈັດຕັ້ງປະຕິບັດສໍາຄັນ (KPI) ສໍາລັບ ທລຍ III[1] ໄດ້ສະຫຼຸບໃຫ້ເຫັນຜົນໄດ້ຮັບຕົ້ນຕໍ ຄືດັ່ງນີ້:

- *ຄຸນນະພາບດ້ານເຕັກນິກວິຊາການ:* ສ່ວນຮ້ອຍ ຂອງ ບັນດາໂຄງການຍ່ອຍ ທລຍ ທີ່ມີຄຸນນະພາບດ້ານເຕັກນິກວິຊາການສູງ ມີຜົນການປະເມີນບອກໃຫ້ຮູ້ວ່າ: 93 ສ່ວນຮ້ອຍ ຖືເປັນໂຄງການ 'ດີ' ຫຼື 'ຄຸ້ມຄ່າເງິນ';
- *ກຸ່ມທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນຂັ້ນຊຸມຊົນ:* ໄດ້ສ້າງຕັ້ງ 74 ກຸ່ມ RMGs (ທີ່ຈ້າງສະມາຊິກຈໍານວນ 341 ຄົນ) ເພື່ອເຮັດໜ້າທີ່ບົວລະບັດຮັກສາເສັ້ນທາງ ທີ່ມີຄວາມຍາວ 338, ໂດຍເປັນການສ້າງວຽກເຮັດງານທໍາເພີ່ມ ໃຫ້ ແມ່ຍິງທຸກຍາກ ໃນ ບັນດາບ້ານເປົ້າໝາຍ ທີ່ມີໂອກາດຈໍາກັດ ໃນການສ້າງລາຍໄດ້;
- *ຄວາມເປັນເຈົ້າການ ຂອງ ຊຸມຊົນ:* ໃນສົກປີ 2018-19, ທລຍ III ໄດ້ທົດລອງຈັດຕັ້ງປະຕິບັດ ສັນຍາກໍ່ສ້າງໂຄງລ່າງພື້ນຖານ ໂດຍຊຸມຊົນມີສ່ວນຮ່ວມ ຢູ່ສາມແຂວງ ກວມເອົາ 13 ໂຄງການຍ່ອຍ, ພາຍໃຕ້ສັນຍາ ດັ່ງກ່າວ, ໜ້າທີ່ຮັບຜິດຊອບ ໃນການອອກແບບ ແລະ ກໍ່ສ້າງ ໂຄງການຍ່ອຍ ເພື່ອ ພັດທະນາໂຄງລ່າງພື້ນ ຖານ ແມ່ນຖືກມອບໝາຍໃຫ້ ຊຸມຊົນ ເປັນເຈົ້າການ ໂດຍມີການຊ່ວຍເຫຼືອຈາກ ວິຊາການຂັ້ນບ້ານທີ່ຜ່ານການຝຶກອົບຮົມ ແລະ ທີມງານເຕັກນິກ ຈາກ ທລຍ;
- *ການຄຸ້ມຄອງບໍລິຫານ ແລະ ການປະຫຍັດມູນຄ່າໂຄງການກໍ່ສ້າງໂຄງລ່າງພື້ນຖານ:* ສາມາດຫຼຸດມູນຄ່າໂຄງການຍ່ອຍ ລົງໄດ້ 27 ສ່ວນຮ້ອຍ ແລະ ການທີ່ຊຸມຊົນຍອມຮັບສິດເປັນເຈົ້າຕໍ່ໂຄງລ່າງພື້ນຖານ ຍັງໄດ້ປະກອບສ່ວນຫຼຸດຄ່າໃຊ້ຈ່າຍຄຸ້ມຄອງໂຄງການ ແລະ ຄ່າບໍລິຫານຕ່າງໆ ລົງໄດ້, ພ້ອມນັ້ນ ວັດສະດຸກໍ່ສ້າງສ່ວນຫຼາຍ ແມ່ນຈັດຊື້ພາຍໃນທ້ອງຖິ່ນ ຖືເປັນອີກປັດໄຈໜຶ່ງ ທີ່ປະກອບສ່ວນຫຼຸດມູນຄ່າໂຄງການລົງ;
- *ການຄໍ້າປະກັນໂພຊະນາການ:* ເຫັນວ່າ: ສອດຄ່ອງ ກັບ ຍຸດທະສາດປັບປຸງໂພຊະນາການ ດ້ວຍວິທີການໜຶ່ງດຽວ ທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ, ບັນດາໂຄງການຍ່ອຍ ຂອງ ທລຍ ໄດ້ສະໜອງທຶນປັບປຸງການບໍລິການສຸຂະພາບແມ່ແລະເດັກ, ສະໜອງນໍ້າສະອາດ, ປ່ຽນພຶດຕິກໍາທາງສັງຄົມດ້ານການຮັກສາອະນາໄມ, ສຸຂາພິບານ, ແລະ ສະໜອງເງິນສົດ ໃຫ້ ປະຊາຊົນຜູ້ໄດ້ຮັບຜົນປະໂຫຍດ ເພື່ອຊື້ອາຫານ ທີ່ມີໂພຊະນາການ; ນອກຈາກນັ້ນ, ຜ່ານການລົງທຶນ ທີ່ໄດ້ຮັບການສົມທົບຈາກກິດຈະກໍາສ້າງລາຍໄດ້ ເຮັດໃຫ້ປະຊາຊົນ ມີເງິນສົດເພີ່ມຂຶ້ນ ເພື່ອຊື້ອາຫານ ກໍຄື ເຮັດການປູກ-ການລ້ຽງ ພາຍໃນທ້ອງຖິ່ນ ແລ້ວ ນໍາມາປຸງແຕ່ງອາຫານ ທີ່ມີໂພຊະນາການ ເພື່ອລ້ຽງເດັກນ້ອຍ;
- *ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ:* ໃນຈໍານວນພະນັກງານ 215 ຄົນ ຂອງ ທລຍ, ແມ່ຍິງ ກວມເອົາ 44,19 ສ່ວນຮ້ອຍ, ອີກ 37,70 ສ່ວນຮ້ອຍ ຂອງ ຈໍານວນພະນັກງານທັງໝົດ ແມ່ນຄົນຊົນເຜົ່າ, ພ້ອມນັ້ນ ສະມາຊິກ ຄຸ້ມຄອງບໍລິຫານ ກຊກ ຍັງປະກອບມີແມ່ຍິງໃນຄະນະ ກວມເອົາ 81 ສ່ວນຮ້ອຍ.

9. ທລຍ ໄດ້ຈັດຕັ້ງປະຕິບັດບັນດາກິດຈະກໍາພັດທະນາຊົນນະບົດ ໂດຍສອດຄ່ອງກັບ ດໍາລັດ ເລກທີ 9/ຫສນຍ ສະບັບປີ 2012 (ໝາຍເຖິງ ນະໂຍບາຍ ສາມສ້າງ) ຄື: ການສ້າງແຂວງ ເປັນ ຫົວໜ່ວຍຍຸດທະສາດ, ສ້າງເມືອງ ເປັນ ຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານ ເປັນ ຫົວໜ່ວຍພັດທະນາ; ຊຶ່ງຕໍ່ມາໃນປີ 2016 ດໍາລັດ

[1] ລິງ, ເອດສ໌. ແລະ ບຸນຜາສຸກ ດີ. (Ling, S. and Bounphasouk, D.), 24 ມິຖຸນາ, *ບົດລາຍງານປະເມີນຜົນສໍາເລັດການຈັດຕັ້ງປະຕິບັດ ໂຄງການ ທລຍ (PRF3 ແລະ PRF3-AF)*, ກະຊວງກະສິກໍາ-ປ່າໄມ້, ຫ້ອງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ, ນະຄອນຫຼວງວຽງຈັນ: ບໍລິສັດ ລາວ ຄອນເຊົາຕິງ ກຸ່ມ (Lao Consulting Group)

ດັ່ງກ່າວ ຖືກຍົກລະດັບ ເປັນ ກົດໝາຍປົກຄອງທ້ອງຖິ່ນ. ນະໂຍບາຍສາມສ້າງດັ່ງກ່າວ ໄດ້ອຳນວຍຄວາມສະດວກໃຫ້ ການຈັດຕັ້ງປະຕິບັດບັນດາແຜນງານພັດທະນາຊົນນະບົດ ໄດ້ຮັບການເຊື່ອມໂຍງເຂົ້າກັນ ແລະ ມີການປະສານງານຕາມລວງຕັ້ງ ດີຍິ່ງຂຶ້ນ. ໃນຂະນະທີ່ ແຂວງ ມີໜ້າທີ່ຮັບຜິດຊອບໃນການກຳນົດຍຸດທະສາດການພັດທະນາ, ສ່ວນອຳນາດການປົກຄອງຂັ້ນເມືອງ ເຮັດໜ້າທີ່ເປັນຫົວໜ່ວຍຈັດຕັ້ງປະຕິບັດ ແລະ ບ້ານ ເປັນຫົວໜ່ວຍພັດທະນາພື້ນຖານ. ເຖິງວ່າ ມີການແບ່ງໜ້າທີ່ຮັບຜິດຊອບ ໃຫ້ ສາມຂັ້ນອຳນາດກາປົກຄອງ ແຕ່ ວຽກງານການສະໜອງງົບປະມານ ແລະ ການຕັດສິນບັນຫາ ແມ່ນຍັງລວມສູນຢູ່ຂັ້ນສູນກາງ. ທລຍ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ດ້ວຍການສ້າງຄວາມສາມາດ ໃຫ້ຂັ້ນຮາກຖານ ເພື່ອອຳນວຍຄວາມສະດວກໃຫ້ ວຽກງານການພັດທະນາຊົນນະບົດ ມີການເຊື່ອມໂຍງເປັນຢ່າງດີກັບ ການຈັດຕັ້ງປະຕິບັດບັນດານະໂຍບາຍ, ຍຸດທະສາດ, ແຜນງານ ແລະ ໂຄງການກະສິກຳ ແລະ ພັດທະນາຊົນນະບົດ ຂອງ ກະຊວງກະສິກຳແລະປ່າໄມ້.

10. ພ້ອມນີ້, ບັນດາກິດຈະກຳຕ່າງໆ ຂອງ ທລຍ ຍັງເຫັນວ່າ: ສອດຄ່ອງກັບ ຂອບນະໂຍບາຍທີ່ມີຢູ່ ຂອງ ຂະແໜງກະສິກຳ ແລະ ພັດທະນາຊົນນະບົດ ຊຶ່ງໄດ້ຮັບການກຳນົດໄວ້ໃນ ບັນດາເອກະສານສຳຄັນ ຂອງ ລັດຖະບານແຫ່ງ ສປປ ລາວ ຕາມທີ່ສະຫຼຸບສັງລວມໄວ້ໃນ ຕາຕະລາງ 1. ລາຍລະອຽດ ໃຫ້ເບິ່ງ ເອກະສານຊ້ອນທ້າຍ 1.

**ຕາຕະລາງ 1: ຂອບນະໂຍບາຍ ຂອງ ຂະແໜງກະສິກຳ ແລະ ພັດທະນາຊົນນະບົດ**

- ແຜນງານແຫ່ງຊາດ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ເມສາ 2009
- ດຳລັດ ເລກທີ 348/ລບ ວ່າດ້ວຍ ມາດຕະຖານພົ້ນທຸກ ມາດຕະຖານພັດທະນາ, 16 ພະຈິກ 2017
- ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດ 2030
- ແຜນງານພັດທະນາເຂດເນີນສູງ, 2016 - 2025
- ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໄລຍະຫ້າປີ (2011-2015)
- ຍຸດທະສາດໂພຊະນາການແຫ່ງຊາດ ຮອດປີ 2025 ແລະ ແຜນດຳເນີນງານ ສຳລັບ ໄລຍະ 2016-2020
- ຍຸດທະສາດປ່າໄມ້ ຮອດປີ 2020
- ຂອບພັດທະນາຂະແໜງກະສິກຳ ຕາມທິດສີຂຽວ ແລະ ຍືນຍົງ ສຳລັບ ສປປ ລາວ ຮອດປີ 2030, ມິຖຸນາ 2021

11. ນອກຈາກໄດ້ຮັບການຊ່ວຍເຫຼືອຈາກທະນາຄານໂລກ, ທລຍ ຍັງໄດ້ຮັບທຶນຊ່ວຍເຫຼືອ ຈາກ ອົງການເພື່ອການພັດທະນາ ແລະ ການຮ່ວມມື ຂອງ ສະວິດເຊີແລນ (SDC), ກະຊວງການຕ່າງປະເທດ ແລະ ການຄ້າ ຂອງ ອົດສະຕຣາລີ (DFAT), ແລະ ກອງທຶນເພື່ອການພັດທະນາສັງຄົມ ຂອງ ຍີ່ປຸ່ນ. ລະດັບການຊ່ວຍເຫຼືອທີ່ໄດ້ຮັບດັ່ງກ່າວ ຖືເປັນສະແດງຄວາມຮັບຮູ້ ຕໍ່ ຄວາມເປັນມືອາຊີບໃນການເຮັດວຽກ ຂອງ ທລຍ ແລະ ສ່ອງແສງໃຫ້ເຫັນ ປະສິດທິຜົນ ຂອງ ທລຍ ທັງໃນດ້ານການຈັດຕັ້ງປະຕິບັດ ແຜນງານແກ້ໄຂຄວາມທຸກຍາກ ຕະຫຼອດເຖິງບັນດາກິດຈະກຳດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

## 1.2 ວິທີການດຳງານ ຂອງ ທລຍ ໃນການຈັດຕັ້ງປະຕິບັດ ບັນດາແຜນງານແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາ

12. ທລຍ ເປັນໜຶ່ງໃນສະຖາບັນຫຼັກ ຂອງ ລັດຖະບານລາວ ທີ່ເຄື່ອນໄຫວເຮັດວຽກແກ້ໄຂຄວາມທຸກຍາກຢູ່ຊົນນະບົດ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການຫຼຸດຜ່ອນຄວາມທຸກຍາກ ທີ່ໄດ້ຮັບທຶນຊ່ວຍເຫຼືອຈາກ ທະນາຄານໂລກ ນັບແຕ່ປີ 2003 ເປັນຕົ້ນມາ. ໂຄງການຊຸດທີສີ່ ຄື: ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (ປສກ) ແມ່ນໄດ້ເລີ່ມການຈັດຕັ້ງປະຕິບັດ ນັບແຕ່ ເດືອນມີນາ 2024 (ແລະ ຈະສິ້ນສຸດລົງໃນວັນທີ 31 ທັນວາ 2027).

13. ວິທີການພັດທະນາຊົນນະບົດ ຂອງ ທລຍ ໄດ້ປ່ຽນແປງໄປຕາມໄລຍະເວລາ ໂດຍຄ່ອຍໆ ຂະຫຍາຍຂອບເຂດກິດຈະກໍາຊ່ວຍເຫຼືອ ແລະ ສືບຕໍ່ປັບປຸງຕົວແບບການຈັດຕັ້ງປະຕິບັດ. ເລີ່ມຕົ້ນຈາກສຸມໃສ່ ການສະໜອງໂຄງລ່າງພື້ນຖານຊຸມຊົນ ແລະ ການສ້າງຄວາມສາມາດໃຫ້ທ້ອງຖິ່ນ, ໂຄງການ ທລຍ ໄດ້ວິວັດປ່ຽນແປງ ໂດຍສ່ອງແສງໃຫ້ເຫັນ ຄວາມສໍາຄັນ ຂອງ ວິທີການດໍາເນີນງານຮ່ວມລະຫວ່າງຫຼາຍຂະແໜງການ ເພື່ອແກ້ໄຂຄວາມທຸກຍາກ ໂດຍສົມທົບ ການສ້າງໂຄງລ່າງພື້ນຖານຊົນນະບົດ ໃສ່ກັບ ກິດຈະກໍາປັບປຸງຊີວິດການເປັນຢູ່ ແລະ ສົ່ງເສີມໂພ ຊະນາການ. ຄຽງຄູ່ກັນນັ້ນ, ທລຍ ຍັງໄດ້ລົງເລິກວິທີການດໍາເນີນງານແບບມີສ່ວນຮ່ວມ ໃນຂະບວນການຕັດ ສິນໃຈນໍາໃຊ້ເງິນຊ່ວຍເຫຼືອ ພາຍໃນ ຊຸມຊົນ, ສຸມໃສ່ສ້າງຄວາມສາມາດຂັ້ນເມືອງ ແລະ ປັບປຸງວິທີການກໍານົດບ້ານເປົ້າໝາຍ ເພື່ອໃຫ້ເຂົ້າເຖິງບ້ານໃນເຂດທຸກຍາກແທ້ໆ. ການປັບປຸງໃນຂົງເຂດຕ່າງໆ ເຫັນວ່າ: ມີລັກສະນະຄ່ອຍເພີ່ມພູນ ບົນພື້ນຖານ ການທົດລອງຈັດຕັ້ງປະຕິບັດ ແລະ ການປະເມີນກິດຈະກໍາຊ່ວຍເຫຼືອໃໝ່ຢ່າງຮອບຄອບ. ພ້ອມນັ້ນ, ທລຍ ຍັງໄດ້ປ່ຽນຂອບເຂດປົກຄຸມທັງພູມສາດໃນການຊ່ວຍເຫຼືອ ຂອງຕົນ ເພື່ອຊ່ວຍເຫຼືອທ້ອງຖິ່ນທຸກຍາກ ໃຫ້ສາມາດປັບປຸງຊີວິດການເປັນຢູ່, ເຖິງວ່າ ບາງເມືອງ ໄດ້ຮັບຜົນປະໂຫຍດຈາກການຊ່ວຍ ເຫຼືອ ຂອງ ທລຍ ໃນໄລຍະຕ່າງກັນ ແຕ່ນັ້ນກໍ່ເປັນຍ້ອນ ຜົນຈາກການຂະຫຍາຍຂອບເຂດກິດຈະກໍາຊ່ວຍເຫຼືອ.

### 1.3 **ວິທີການຂອງແຜນງານໃນໄລຍະຜ່ານມາ ຂອງ ທລຍ**

14. ການຈັດຕັ້ງປະຕິບັດ ບັນດາໂຄງການຊ່ວຍເຫຼືອ ຂອງ ທລຍ ໃນໄລຍະຜ່ານມາ ພົບວ່າ: ເຄື່ອນໄຫວຢ່າງເປັນມືອາຊີບ ແລະ ໄດ້ແກ້ໄຂ ຄວາມຕ້ອງການເງິນສົດດ່ວນ ຂອງຄົວເຮືອນ ທຸກຍາກ ແລະ ບອບບາງ ໄດ້ຢ່າງມີປະສິດທິຜົນ ດ້ວຍການຈັດຕັ້ງປະຊາຊົນ ເຮັດໜ້າທີ່ບົວລະບັດຮັກສາ ໂຄງລ່າງພື້ນຖານຊົນນະບົດ ແລະ ການປັບປຸງການປັບຕົວກັບການປ່ຽນແປງດິນຟ້າອາກາດ. ຈຸດສຸມ ແມ່ນເນັ້ນໃສ່ ການປັບປຸງ, ຟື້ນຟູ, ສ້ອງແປງ ໂຄງລ່າງພື້ນຖານສໍາຄັນ ຕໍ່ ຄຸນນະພາບການດໍາລົງຊີວິດ ຂອງ ຊຸມຊົນທ້ອງຖິ່ນຊົນນະບົດ ຄື: ນໍ້າປະຊາຊຸມຊົນ ແລະ ສຸຂາພິບານ, ໂຮງຮຽນ ແລະ ສຸກສາລາ, ເສັ້ນທາງເຂົ້າເຖິງຕະຫຼາດ, ລະບົບຊົນນະປະທານຂະໜາດນ້ອຍ, ການຄຸ້ມຄອງຂີ້ເຫຍື້ອ, ແລະ ໂຄງລ່າງພື້ນຖານ ເພື່ອສະໜັບສະໜູນ ກິດຈະກໍາການຜະລິດກະສິກໍາທີ່ມີຜະລິດຕະພາບ ແລະ ກິດຈະກໍາສ້າງເສດຖະກິດໃນຮູບແບບອື່ນໆ. ມີການນໍາໃຊ້ ວິທີການຊ່ວຍເຫຼືອ ທີ່ເອົາຊຸມຊົນເປັນໃຈກາງ ເພື່ອ ສ້າງ ຫຼື ຕິດຕັ້ງ ໂຄງສ້າງປ້ອງກັນໄພພິບັດ (ເຊັ່ນ: ສາງແຈກຢາຍເຄື່ອງບັນເທົາທຸກ, ໂຄງສ້າງປ້ອງກັນດິນເຈື່ອນ, ຄອງລະບາຍນໍ້າ ເພື່ອຫຼຸດຜ່ອນຄວາມສ່ຽງເກີດນໍ້າຖ້ວມ, ໂຮງງານຜະລິດນໍ້າສະອາດ, ທີ່ສົ່ງນໍ້າສຸກເສີນໃຫ້ສຸກສາ ລາ, ອື່ນໆ) ເພື່ອຈໍາກັດ ຜົນກະທົບຈາກໄພພິບັດທໍາມະຊາດ.

15. ກຸ່ມພັດທະນາຊຸມຊົນ ຂອງ ທລຍ ທີ່ປະສົບຜົນສໍາເລັດ ລວມມີຄື:

a) ກຸ່ມຊ່ວຍເຫຼືອເຊິ່ງກັນແລະກັນ (ກຊກ) ແລະກຸ່ມຜະລິດ ທີ່ສະໜອງການຊ່ວຍເຫຼືອ ການຝາກປະຫຍັດ ແລະ ການລົງທຶນ ໃສ່ ກິດຈະກໍາເສດຖະກິດຂັ້ນບ້ານ ແລະ ກິດຈະກໍາສ້າງລາຍໄດ້ຈາກການຜະລິດກະສິກໍາ ໂດຍມີເປົ້າໝາຍແນໃສ່ ເພີ່ມຜະລິດຕະພາບ ແລະ ຄວາມສາມາດດ້ານການຕະຫຼາດ ຍັງເຮັດໜ້າທີ່ເປັນຊ່ອງທາງຮັບຄໍາແນະນໍາ ເພື່ອປັບປຸງໂພຊະນາການ ສໍາລັບ ເດັກ ແລະ ປັບປຸງດ້ານອື່ນໆ ຂອງ ມາດຕະຖານການດໍາລົງຊີວິດ ຂອງ ຄົວເຮືອນ;

b) ກຸ່ມບົວລະບັດຮັກສາທາງ (RMG) ຊຶ່ງມີຢູ່ແລ້ວ ໃນບັນດາບ້ານສ່ວນໃຫຍ່ ທີ່ໄດ້ຮັບການຊ່ວຍເຫຼືອ ຈາກ ທລຍ ແມ່ນສາມາດນໍາໄປຜັນຂະຫຍາຍ ສູ່ ບ້ານອື່ນໆ ໄດ້ຢ່າງວ່ອງໄວ ເພື່ອສະໜອງເງິນສົດ ແລະ ການເຮັດວຽກບົວລະບັດຮັກສາທາງ ໃນບັນດາເຂດເປົ້າໝາຍ; ແລະ

c) ກິດຈະກໍາລົງທຶນພັດທະນາໂຄງລ່າງພື້ນຖານຊຸມຊົນທີ່ໃຊ້ແຮງງານເຂັ້ມຂຸ້ນ ຕ່າງຈາກກິດຈະກໍາບົວລະບັດຮັກສາທາງ ທີ່ນໍາໃຊ້ແຮງງານບໍ່ມີສີມື ເພາະເປັນການລົງທຶນ ເພື່ອປັບປຸງໂຄງລ່າງພື້ນຖານແລະການບໍລິການພາຍໃນຊຸມຊົນ ເປັນຕົ້ນ ການປັບປຸງ ລະບົບຊົນລະປະທານ, ຮ່ອງລະລາຍນໍ້າ, ນໍ້າປະປາຊຸມຊົນ, ໂຮງຮຽນ ແລະ ສຸກສາລາ, ຄອກສັດລ້ຽງ ແລະ ອື່ນໆ.

ບັນດາວິທີການ ທີ່ຖືກນໍາໃຊ້ ເພື່ອບົວລະບັດຮັກສາ ແລະ ປັບປຸງໂຄງລ່າງພື້ນຖານ ໄດ້ເປີດໂອກາດໃຫ້ແກ່ການລົງທຶນ ໃສ່ການຝຶກອົບຮົມວິຊາຊີບ ແລະ ທັກສະສີມືແຮງງານ ຂຶ້ນພາຍໃນຊຸມຊົນ ໃນຂະນະທີ່ ມູນຄ່າສ່ວນໃຫຍ່ຂອງໂຄງການພັດທະນາໂຄງລ່າງພື້ນຖານຊຸມຊົນ ແມ່ນເນັ້ນໃສ່ການຈ້າງແຮງງານທ້ອງຖິ່ນທີ່ບໍ່ມີສີມືແຮງງານ ໃນຖານະເປັນວິທີການເພີ່ມການຈ້າງແຮງງານ ພາຍໃນບ້ານເປົ້າໝາຍ.

## 1.4 ຂໍ້ຈໍາກັດ

**16.** ທລຍ ໄດ້ຜະເຊີນຫຼາຍຂໍ້ຈໍາກັດ ໃນການຈັດຕັ້ງປະຕິບັດກິດຈະກໍາແກ້ໄຂຄວາມທຸກຍາກ ເປັນຕົ້ນຄື:[2]

a) ພົບເລື້ອຍໆວ່າ: ບົນລາຍງານຜົນການປະເມີນ ທລຍ ບໍ່ໄດ້ກ່າວເຖິງ ວິທີແກ້ໄຂ ຫຼື ມາດຕະການຫຼຸດຜ່ອນຄວາມສ່ຽງ ທີ່ພົວພັນກັບ ດ້ານຕ່າງໆ ຂອງ ໂຄງການ ທີ່ຈັດຕັ້ງປະຕິບັດແລ້ວບໍ່ໄດ້ຜົນ. ສິ່ງເຫຼົ່ານັ້ນ ສາມາດນໍາໃຊ້ເປັນຂໍ້ມູນປັບປຸງການວາງແຜນ ເພື່ອຜ່ານຜ່າຂໍ້ຈໍາກັດກ່ຽວຂ້ອງ.[3]

b) ຜົນການຈັດຕັ້ງປະຕິບັດ ທີ່ແຕກຕ່າງກັນ ລະຫວ່າງ ໂຄງການ ຕາມເຂດພູມສາດຕ່າງໆ **(**ໝາຍວ່າ: ໃນບາງເຂດ ກິດຈະກໍາຊ່ວຍເຫຼືອຂອງໂຄງການ ມີຜົນໄດ້ຮັບທີ່ດີກວ່າ ເຂດອື່ນ**).** ນີ້ ບອກໃຫ້ຮູ້ວ່າ: ມີປັດໄຈຕັດສິນຄວາມສໍາເລັດ ຊຶ່ງໃນນັ້ນ ລວມມີ: ຄວາມແຕກຕ່າງດ້ານເສດຖະກິດ-ສັງຄົມ, ດ້ານສະພາບແວດ

---

[2] ລິງ, ເອດສ໌. ແລະ ບຸນຜາສຸກ ດີ. (Ling, S. and Bounphasouk, D.), 24 ມິຖຸນາ, ບົດລາຍງານປະເມີນຜົນສໍາເລັດການຈັດຕັ້ງປະຕິບັດ ໂຄງການ ທລຍ *(PRF3 ແລະ PRF3-AF)*, ກະຊວງກະສິກໍາ-ປ່າໄມ້, ຫ້ອງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ, ນະຄອນຫຼວງວຽງຈັນ: ບໍລິສັດ ລາວ ຄອນເຊົາຕິງ ກຸບ (Lao Consulting Group).

[3] ການປັບປຸງການວາງແຜນ: ການປ່ຽນແປນ ຕາມໄລຍະເວລາຄວາມຄືບໜ້າ ຂອງ ໂຄງການ; ປັບຕົວໃສ່ການປ່ຽນແປງທີ່ເກີດຂຶ້ນກັບໂຄງການ ບົນພື້ນຖານຄໍາເຫັນ, ຄວາມສ່ຽງ, ຫຼື ການປ່ຽນແປງ ຂອງ ຂອບເຂດວຽກ, ງົບປະມານ ແລະ ຕາຕະລາງເວລາຈັດຕັ້ງປະຕິບັດໂຄງການ.

ລ້ອມ ແລະ ເຂດທີ່ຕັ້ງພູມສາດ – ສະນັ້ນ, ການລາຍງານຊີ້ໃຫ້ເຫັນຂໍ້ມູນໃນລັກສະນະດັ່ງກ່າວ ເຫັນວ່າ: ເປັນປະໂຫຍດ.

c) ການປະເມີນເບິ່ງວ່າ: ກຸ່ມຊ່ວຍເຫຼືອເຊິ່ງກັນແລະກັນ (ກຊກ) ແລະ ກຸ່ມຜະລິດ (ກຜ) ຈະມີຄວາມຍືນຍົງ ຫຼືບໍ່ນັ້ນ ເປັນເລື່ອງທີ່ຫຍຸ້ງຍາກ ຍ້ອນວ່າ ບາງກຸ່ມ ຫາກໍ່ໄດ້ຮັບການສ້າງຕັ້ງຂຶ້ນ. ບາງ ກຊກ ສ່ຽງບໍ່ປະສົບຜົນສຳເລັດ ຍ້ອນສິ້ນສຸດການຈັດຕັ້ງປະຕິບັດ ກິດຈະກຳຊ່ວຍເຫຼືອ ຂອງ ທລຍ ເວົ້າສະເພາະ ກໍລະນີ ກຊກ ທີ່ມີ ການກູ້ຢືມ ເພື່ອເຮັດກິດຈະກຳທີ່ບໍ່ສ້າງລາຍໄດ້, ຂາດຄວາມຮູ້ດ້ານວິຊາການ ແລະ ການຈົດກ່າຍບັນຊີ ໃນລະດັບພຽງພໍ, ແລະ ບັນຫາຂາດງົບປະມານຢູ່ຂັ້ນເມືອງ ເພື່ອຕິດຕາມບັນດາກິດຈະກຳ ຂອງ ກຊກ.

d) ການກຳນົດຄາດໝາຍໃນລະດັບໂຄງການ ສຳລັບ ກິດຈະກຳການລ້ຽງສັດ ພົບວ່າ: ມີຄວາມຫຍຸ້ງຍາກ ຍ້ອນບໍ່ສາມາດຮູ້ລ່ວງໜ້າວ່າ: ກຜ ຈະເລືອກ ການລ້ຽງ ຫຼື ການປູກ. ພ້ອມນັ້ນ, ບັນຫາເງິນເຟີ້ສູງ **(33% ປີ-ຕໍ່-ປີ)** ເຮັດໃຫ້ຕົ້ນທຶນປັດໄຈການຜະລິດ ເພີ່ມສູງຂຶ້ນຫຼາຍ. ຜູ້ໄດ້ຮັບຜົນປະໂຫຍດໃນບ້ານບໍ່ທຸກຍາກ ບໍ່ສົນໃຈກິດຈະກຳລ້ຽງສັດ ຍ້ອນມີຫຼາຍກິດຈະກຳສ້າງລາຍໄດ້ ໃນຮູບແບບອື່ນ ທີ່ໃຫ້ຜົນກຳໄລສູງກວ່າ ແລະ ມີຮອບວຽນສັ້ນກວ່າ.

e) ວຽກງານສົ່ງເສີມກະສິກຳ ຢູ່ຂັ້ນເມືອງ ຂາດງົບປະມານເຄື່ອນໄຫວ. ດ້ວຍການນຳໃຊ້ ບັນດາອົງການໃນກົງຈັກ ກປ ເຮັດໜ້າທີ່ເປັນ ໜ່ວຍງານຈັດຕັ້ງປະຕິບັດໂຄງການ, ທລຍ ສາມາດຊ່ວຍຜ່ານຜ່າຂໍ້ຈຳກັດດັ່ງກ່າວນັ້ນໄດ້.

f) ພົບວ່າ: ຜູ້ປະສານງານໂຄງການຂັ້ນເມືອງ ຂອງ ທລຍ ມີວຽກໂຄງການລົ້ນມື ຈົນມີເວລາບໍ່ພໍ ທີ່ຈະກວດຂໍ້ມູນ ທີ່ປ້ອນເຂົ້າໃນລະບົບຂໍ້ມູນຂ່າວສານຄຸ້ມຄອງໂຄງການ (MIS) ໂດຍອາສາສະໝັກ (YGs) ທີ່ມີໜ້າທີ່ຮັບຜິດຊອບ ໃນການເກັບກຳຂໍ້ມູນຂັ້ນໜຶ່ງ ກ່ຽວກັບ ການຈັດຕັ້ງປະຕິບັດແຕ່ລະອົງປະກອບ ຂອງໂຄງການ ກໍຄື ຄຳຮ້ອງຮຽນ ແລະ ຄຳເຫັນ ຈາກຊຸມຊົນ. ຂໍ້ຈຳກັດອີກຢ່າງຄື: ບໍ່ມີພະນັກງານຕິດຕາມແລະປະເມີນຜົນ (M&E) ປະຈຳຢູ່ຂັ້ນເມືອງ ເພື່ອຊ່ວຍວຽກ MIS. ດ້ວຍເຫດນັ້ນ, ຂໍ້ມູນຈຳນວນຫຼາຍທີ່ລາຍງານສູນກາງ ຈຶ່ງຂາດການທົບທວນຄຸນນະພາບຂອງຂໍ້ມູນ ເຮັດໃຫ້ເກີດຄວາມກັງວົນ ກ່ຽວກັບ ຄຸນນະພາບ ຂອງຂໍ້ມູນ. ເຫັນວ່າ: ການຈັດບູລິມະສິດວຽກ ແລະ ການແບ່ງລຳດັບການເຮັດວຽກ ສາມາດແບ່ງເບົາພາລະແບກຫາບວຽກ ຂອງ ຜູ້ປະສານງານໂຄງການຂັ້ນເມືອງໄດ້.

g) ການເອົາ ປະຊາຊົນ ທີ່ຕັ້ງຖິ່ນຖານກະຈັດກະຈາຍອອກໄປ (ຫ່າງໄກຈາກເຂດບ້ານໃຫຍ່) ໃຫ້ເຂົ້າມີສ່ວນຮ່ວມ ໃນບັນດາກິດຈະກຳ ຂອງ ທລຍ ພົບວ່າ: ມີຄວາມຫຍຸ້ງຍາກ ຍ້ອນປັດໄຈດ້ານໄລຍະທາງໄກ ແລະ ການເດີນທາງມາເຂົ້າຮ່ວມ.

h) ຄວາມຕ້ອງການ ໂຄງລ່າງພື້ນຖານ (ເຊັ່ນ: ທາງ, ນ້ຳປະປາຊຸມຊົນ, ຊົນລະປະທານ, ໂຮງຮຽນ, ສຸກສາລາ) ເຫັນວ່າ: ມີສູງ ໃນຫຼາຍບ້ານເປົ້າໝາຍ ຈຶ່ງສົ່ງຜົນເຮັດໃຫ້ຕ້ອງຫຼຸດງົບປະມານ ສຳລັບ ບັນດາກິດຈະກຳພັດທະນາບ້ານ ທີ່ບໍ່ແມ່ນການສ້າງ ຫຼື ປັບປຸງ ໂຄງລ່າງພື້ນຖານ.

i) ຕ້ອງການເວລາເພີ່ມ ໃນການຈັດຕັ້ງກຸ່ມຜູ້ຜະລິດ ໃຫ້ມີຄວາມຍືນຍົງ ແລະ ເຊື່ອມໂຍງ ກຸ່ມເຫຼົ່ານັ້ນ ໃຫ້ສາມາດເຂົ້າເຖິງຕະຫຼາດທີ່ມີຄວາມໜ້າເຊື່ອຖື; ດັ່ງນັ້ນ, ການສ້າງຄວາມໄວ້ວາງໃຈ ລະຫວ່າງ ກຸ່ມຜູ້ຜະລິດ ແລະ ພໍ່ຄ້າແມ່ຄ້າ ຈຶ່ງມີຄວາມຈຳເປັນ ເພື່ອຮັກສາສາຍເຊື່ອມໂຍງເຂົ້າເຖິງຕະຫຼາດ ໃຫ້ມີຄວາມຍືນຍົງ. ວຽກງານການເຊື່ອມໂຍງ ຜູ້ຜະລິດ ໃຫ້ສາມາດເຂົ້າເຖິງຕະຫຼາດ ອາດຈະມອບໝາຍໃຫ້ ອົງການຈັດຕັ້ງສັງຄົມ ເປັນຜູ້ຈັດຕັ້ງປະຕິບັດ.

## 1.5 ບົດຮຽນທີ່ຖອດຖອນໄດ້

17. ການປະເມີນຜົນການຈັດຕັ້ງປະຕິບັດໂຄງການ ທລຍ III-ເພີ່ມທຶນ[4] ຂອງ ທລຍ ໃນຫວ່າງບໍ່ດົນມານີ້ ໄດ້ສະຫຼຸບ ບັນດາບົດຮຽນທີ່ຖອດຖອນໄດ້ຄືດັ່ງຕໍ່ໄປນີ້ ທີ່ ທລຍ ຈະນໍາໃຊ້ເປັນບ່ອນອີງ ໃນການອອກແບບ ກິດຈະກໍາແກ້ໄຂຄວາມທຸກຍາກ ໃນອະນາຄົດ:
    a) ການນໍາໃຊ້ວິທີການຈັດຊື້ວຽກກໍ່ສ້າງໂດຍບ້ານນໍາໃຊ້ຊັບພະຍາກອນຂອງຕົນເອງ ພົບວ່າ: ຊ່ວຍປະຫຍັດຕົ້ນທຶນການກໍ່ສ້າງລົງໄດ້ຫຼາຍ (ມູນຄ່າໂຄງການຍ່ອຍ ໂດຍສະເລ່ຍ ເຫັນວ່າ: ຫຼຸດລົງຈາກ US$43,000 ມາເປັນ US$14,500) ພ້ອມນັ້ນຍັງເປັນການເສີມຂະຫຍາຍຄວາມເປັນເຈົ້າການ ຂອງ ຊຸມຊົນ ແລະ ສ້າງຄວາມສາມາດໃຫ້ທ້ອງຖິ່ນ.
    b) ການຮຽນຮູ້ແບບເພື່ອນສອນເພື່ອນ ເຫັນວ່າ: ເປັນເຄື່ອງມືການຮຽນຮູ້ທີ່ມີປະສິດທິຜົນ ສໍາລັບ ຜູ້ໃຫຍ່ ເມື່ອທຽບໃສ່ ຮູບແບບການຮຽນແບບໃນຫ້ອງຮຽນ ຫຼື ການຮຽນຮູ້ໂດຍມີຄູຝຶກມາສອນໃຫ້.
    c) ການມອບໝາຍໜ້າທີ່ຮັບຜິດຊອບ ໃຫ້ຂັ້ນເມືອງ ເປັນຈຸດປະສານງານການພັດທະນາ (ຊຶ່ງສອດຄ່ອງກັບນະໂຍບາຍ'*ສາມສ້າງ*' ) ພົບວ່າ: ເຮັດໃຫ້ມີປະສິດທິພາບເພີ່ມສູງຂຶ້ນ ແລະ ສາມາດຕອບສະໜອງ ຕໍ່ ຄວາມຕ້ອງການຂອງຊຸມຊົນ ໄດ້ດີຍິ່ງຂຶ້ນ.
    d) ເພື່ອຫຼຸດຜ່ອນຄວາມສ່ຽງ ເກີດກໍລະນີບໍ່ສາມາດຊໍາລະຄືນເງິນກູ້ ສໍາລັບ ບັນດາຊຸມຊົນຫ່າງໄກສອກຫຼີກ ແລະ ຂາດປະສົບການໃນການຄຸ້ມຄອງກອງທຶນບ້ານ, ການໃຫ້ເງິນກູ້ເພື່ອເຮັດການຜະລິດກະສິກໍາ ຕ້ອງປະຕິບັດໄປຄຽງຄູ່ກັບ ການສົ່ງເສີມເຕັກນິກກະສິກໍາໃນຂັ້ນທ້ອງຖິ່ນ.
    e) ຄວນຈັດປະເພດບ້ານ ຕາມລະດັບຄວາມຕ້ອງການ ການຊ່ວຍເຫຼືອ ໃນການຈັດຕັ້ງປະຕິບັດ ວິທີການໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ເພື່ອປັບປຸງໂພຊະນາການ.
    f) ສ້າງຄວາມສາມາດດ້ານການຕິດຕາມ ແລະ ປະເມີນຜົນ (M&E) ຢູ່ຂັ້ນເມືອງ ຜ່ານການຈັດຝຶກອົບຮົມ ແລະ ສະໜອງຊັບພະຍາກອນ ເພື່ອຊ່ວຍສະໜັບສະໜູນ ການເຮັດວຽກ ຂອງ ອາສາສະມັກ ແລະ ພະນັກງານ M&E.
    g) ເຖິງວ່າ ມີການປັບປຸງການເຊື່ອມໂຍງເຊື່ອມຈອດ ລະຫວ່າງ ບັນດາແຂວງພາກເໜືອ, ຫຼາຍບ້ານໃນເຂດພູດອຍ ຊຶ່ງຂາດເສັ້ນທາງເຂົ້າເຖິງ ຍັງບໍ່ສາມາດເຂົ້າເຖິງຕະຫຼາດທີ່ມີຄວາມໜ້າເຊື່ອຖືໃນການຮັບຊື້ຜົນຜະລິດຂອງເຂົາເຈົ້າ ເຮັດໃຫ້ ບ້ານເຫຼົ່ານັ້ນ ເກີດຄວາມສ່ຽງມີອາຫານການກິນບໍ່ຄົບໝວດໝູ່.

[4] ລິງ, ສະຈວດ ແລະ ດາວອນ ບຸນຜາສຸກ *(Ling, Stuart and Davone Bounphasouk)*, 24 ມິຖຸນາ 2024, "ບົດລາຍງານປະເມີນຜົນສໍາເລັດການຈັດຕັ້ງປະຕິບັດ ໂຄງການ ທລຍ *(PRF3 ແລະ PRF3-AF)*, ການປະເມີນຜົນການຈັດຕັ້ງປະຕິບັດ ຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກ ໂດຍ ບໍລິສັດ ລາວ ຄອນເຊົາຕິງ ກຸມ *(Lao Consulting Group)*, ນະຄອນຫຼວງວຽງຈັນ, ສປປ ລາວ.

h) ພາບຖ່າຍດາວທຽມ ບອກໃຫ້ຮູ້ວ່າ: ຍັງມີອີກຫຼາຍບ້ານ ໃນເມືອງທຸກຍາກ ທີ່ບໍ່ມີເສັ້ນທາງເຂົ້າເຖິງ ຊຶ່ງເປັນການຈຳກັດການເຂົ້າເຖິງຕະຫຼາດ, ການບໍລິການສາທາລະສຸກ ແລະ ການບໍລິການສາທາລະນະພື້ນຖານອື່ນໆ.

i) ການຈັດຕັ້ງປະຕິບັດນະໂຍບາຍພັດທະນາຊົນນະບົດ ຂອງ ລັດຖະບານ ໃນການໂຮມບ້ານນ້ອຍເປັນບ້ານໃຫຍ່ ຊຶ່ງມີເສັ້ນທາງເຂົ້າເຖິງ ໄດ້ສົ່ງຜົນກະທົບທາງດ້ານເສດຖະກິດ-ສັງຄົມ ທີ່ບໍ່ເທົ່າທຽມກັນ. ພ້ອມນັ້ນ, ການພັດທະນາຂະແໜງໄຟຟ້ານໍ້າຕົກ ແລະ ບໍ່ແຮ່ ຍັງເປັນປັດໄຈຂັບເຄື່ອນການຍົກຍ້າຍຖິ່ນຖານ ຢູ່ເຂດຊົນນະບົດ. ມີບ້ານເປັນຈຳນວນຫຼາຍ ໃນເຂດຫ່າງໄກສອກຫຼີກ ທີ່ຍັງບໍ່ທັນໄດ້ມີການສ້າງຕັ້ງເປັນບ້ານ ຫຼື ຊຸມຊົນຖາວອນ.

## 1.6 **ໂອກາດ ແລະ ສິ່ງທ້າທາຍໃນລະດັບພາກ**

18. ບັນດາສິ່ງທ້າທາຍ ທີ່ກ່າວເຖິງຂ້າງເທິງນັ້ນ ຊີ້ໃຫ້ເຫັນຄວາມຈຳເປັນທີ່ ທລຍ ຕ້ອງມີ ແຜນງານແກ້ໄຂຄວາມທຸກຍາກ ແລະ ພັດທະນາຊົນນະບົດ ທີ່ຄົບຖ້ວນຮອບດ້ານ ແລະ ເຂັ້ມຂຸ້ນຂຶ້ນກວ່າເດີມ. ສິ່ງທ້າທາຍເຫຼົ່ານັ້ນ ຄວນຖືກເບິ່ງເປັນ ໂອກາດ ສຳລັບ ທລຍ ໃນການສ້າງແຜນງານໃດໜຶ່ງ ໂດຍຜ່ານການຂໍຄຳປຶກສາກັບ ບັນດາ ອົງການ ແລະ ກົມວິຊາການ ຂອງ ກສ ແລະ ອົງການກ່ຽວຂ້ອງອື່ນໆ ຂອງ ລັດຖະບານ ເພື່ອໃຫ້ໄດ້ ວິທີການດຳເນີນງານ “ເປັນເອກະພາບທົ່ວກົງຈັກລັດ” ໃນການແກ້ໄຂສິ່ງທ້າທາຍໃໝ່ ແລະ ຂໍ້ຈຳກັດທີ່ຍັງຕົກຄ້າງ. ທລຍ ມີປະສົບການ, ຄວາມຕັ້ງໃຈຈິງທີ່ຜ່ານການພິສູດແລ້ວ, ຄວາມຮູ້, ລະບົບການເຮັດວຽກ ແລະ ຜົນໄດ້ຮັບຜ່ານມາ ເພື່ອຊີ້ນຳການຈັດຕັ້ງປະຕິບັດວິທີການດຳເນີນງານໃນລັກສະນະດັ່ງກ່າວ ໃນຖານະເປັນ ອົງການຄຸ້ມຄອງການຈັດຕັ້ງປະຕິບັດ.

19. ຈຳເປັນຕ້ອງມີ ກິດຈະຊ່ວຍເຫຼືອທີ່ເປົ້າໝາຍເພີ່ມເຕີມ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ ຄວາມເຂົ້າໃຈກ່ຽວກັບຄວາມສ່ຽງດ້ານການປ່ຽນແປງດິນຟ້າອາກາດ ທີ່ມີຕໍ່ ຊຸມຊົນບອບບາງ ແລະ ຢູ່ເຂດຫ່າງໄກສອກຫຼີກ ໂດຍສຸມໃສ່ ເດັກນ້ອຍ ແລະ ຊຸມຊົນຂອງເຂົາເຈົ້າ ກໍຄື ວິທີທີ່ໄພຂົ່ມຂູ່ເຫຼົ່ານັ້ນ ສົ່ງຜົນຕໍ່ ຍຸດທະສາດຫຼຸດຜ່ອນຄວາມສ່ຽງ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. ຍຸດທະສາດແກ້ໄຂການປ່ຽນແປງດິນຟ້າອາກາດ ສປປ ລາວ ສຳລັບໄລຍະ 2024-2026 ຂອງອົງການ UNICEF ກ່າວວ່າ: ໄພຂົ່ມຂູ່ຈາກການປ່ຽນແປງດິນຟ້າອາກາດນັບມື້ນັບພົ້ນເດັ່ນຂຶ້ນ ເວົ້າສະເພາະ ເຂດທົ່ງພຽງແຄມນໍ້າຂອງ ແລະ ສາຂາຂອງແມ່ນໍ້າຂອງ ຊຶ່ງໄພນໍ້າຖ້ວມ ແລະ ດິນເຈື່ອນ ໃນໄລຍະລະດູຝົນ ເກີດຖີ່ຂຶ້ນທຸກປີ. ຍັງພົບອີກວ່າ: ອາກາດ ຢູ່ ລາວ ມີຄຸນນະພາບອາກາດຕໍ່າທີ່ສຸດເມື່ອທຽບໃສ່ ບັນດາປະເທດອື່ນໆ ໃນອາຊຽນ ຍ້ອນບັນຫາ ໄຟໄໝ້ປ່າ, ການເຮັດໄຮ່ ແລະ ບັນຫາການຈູດສິ່ງເສດເຫຼືອ. ນອກຈາກນັ້ນ, ບັນຫາຄື້ນຄວາມຮ້ອນ ກໍພົບວ່າ: ມີຄວາມຮຸນແຮງຂຶ້ນ ແລະ ກາຍ ເປັນປະກົດການທີ່ເກີດຂຶ້ນປົກກະຕິ.

20. ບັນຫາລົມພະຍຸ, ໄພນໍ້າຖ້ວມ, ດິນເຈື່ອນ, ໄພແລ້ງ, ຄື້ນຄວາມຮ້ອນ ແລະ ມົນລະພິດທາງອາກາດ ໄດ້ສົ່ງຜົນກະທົບລະດັບສູງ ຕໍ່ ເກືອບທຸກຂະແໜງເສດຖະກິດ, ທຸກພາກ ແລະ ກຸ່ມປະຊາຊົນບັນດາເຜົ່າ. ສາຍພົວພັນລະຫວ່າງ ໄພອັນຕະລາຍທາງທຳມະຊາດ ແລະ ຄວາມສ່ຽງເກີດໄພພິບັດຍ້ອນກິດຈະກຳຂອງຄົນ ຍິ່ງເຮັດໃຫ້

ຄວາມບອບບາງທີ່ມີຢູ່ແລ້ວ ມີຄວາມເຮັ່ງຮ້າຍຂຶ້ນຕື່ມ ເວົ້າສະເພາະ ໃນກຸ່ມແມ່ຍິງ, ຊາວໜຸ່ມ ແລະ ເດັກນ້ອຍ. ອີງການ UNICEF ຊີ້ໃຫ້ເຫັນວ່າ: ສປປ ລາວ ມີຄະແນນ ດັດສະນີໝາຍຄວາມສ່ຽງດ້ານການປ່ຽນແປງດິນຟ້າອາກາດ ທີ່ກະທົບຕໍ່ເດັກນ້ອຍ (CCRI) ທີ່ 6,7 ໂດຍຢູ່ໃນອັນດັບທີ 40 ຈາກທັງໝົດ 163 ປະເທດ ຊຶ່ງມີການວັດແທກດັດສະນີໝາຍ CCRI ດັ່ງກ່າວ, ສະພາບດັ່ງກ່າວ ເຮັດໃຫ້ເດັກນ້ອຍລາວ ມີ 'ຄວາມສ່ຽງສູງ'. ການຈັດບູລິມະສິດແຜນງານທີ່ມີຂໍ້ມູນຄວາມສ່ຽງ ແລະ ເອົາເດັກນ້ອຍເປັນໃຈກາງ ຖືເປັນສິ່ງຈຳເປັນ ຕໍ່ ພັດທະນາການ ແລະ ຄວາມຢູ່ດີມີສຸກ ຂອງ ເດັກນ້ອຍ.

## 1.7 **ຂອບນະໂຍບາຍ ແລະ ນິຕິກຳ ທີ່ມີຢູ່ປະຈຸບັນ ສຳລັບ ວຽກງານການພັດທະນາຊົນນະບົດ**

21. ຫວ່າງບໍ່ດົນມານີ້, ລັດຖະບານ ໄດ້ຮັບຮອງ ເອົາ ນະໂຍບາຍ ແລະ ນິຕິກຳໃໝ່ ທີ່ມີເປົ້າໝາຍແນໃສ່ ເພີ່ມປະສິດທິຜົນໃນແກ້ໄຂຄວາມຕ້ອງການໃໝ່ ຂອງ ຊຸມຊົນຢູ່ຊົນນະບົດ ທີ່ນັບມື້ນັບມີສິ່ງທ້າທາຍເພີ່ມສູງຂຶ້ນ ຍ້ອນບັນດາເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ມີການປ່ຽນແປງ. ນະໂຍບາຍແລະນິຕິກຳ ທີ່ໄດ້ຮັບການປັບປຸງໃນຫວ່າງບໍ່ດົນມານີ້ ເພື່ອຮັບປະກັນ ຄວາມສອດຄ່ອງດ້ານການເຄື່ອນໄຫວໃນອະນາຄົດຂອງ ທລຍ ລວມມີຄືດັ່ງນີ້:
    - ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍ: ການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່, ເລກທີ 04, ລົງວັນທີ 11 ເມສາ 2024;
    - ດຳລັດ ເລກທີ 302, ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050, ລົງວັນທີ 19 ມິຖຸນາ 2024;
    - ກົດໝາຍ ວ່າດ້ວຍ ການຄຸ້ມຄອງໄພພິບັດ ເລກທີ 71/ສຊ, ລົງວັນທີ 18 ຕຸລາ 2021, ເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດແຫ່ງຊາດ (NSDRR) ສຳລັບໄລຍະ 2021-2030;
    - ຄຳສັ່ງກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ ວ່າດ້ວຍ ການສ້າງຄວາມເຂັ້ມແຂງໃຫ້ທິດນຳ ແລະ ການຊີ້ນຳນຳພາ ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແລະ, ເລກທີ 97/ພປປລ, ລົງວັນທີ 18 ກຸມພາ 2020;
    - ດຳລັດ ວ່າດ້ວຍ ກຸ່ມ ແລະ ສະຫະກອນ, ເລກທີ 606/ລບ, ລົງວັນທີ 26 ພະຈິກ 2020;
    - ກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບປັບປຸງ, ເລກທີ 64/ສຊ, ລົງວັນທີ 13 ມິຖຸນາ 2019; ແລະ
    - ດຳລັດ ວ່າດ້ວຍ ມາດຕະຖານພື້ນທຸກ ແລະ ມາດຕະຖານການພັດທະນາ ເລກທີ 348/ລບ, ລົງວັນທີ 06 ເມສາ 2018.

22. ສ່ວນນິຕິກຳກ່ອນໜ້ານີ້ ທີ່ຊີ້ນຳ ກິດຈະກຳພັດທະນາການດຳລົງຊີວິດ ແລະ ການຄ້ຳປະກັນອາຫານ ແລະ ໂພຊະນາການ ຂອງ ທລຍ ລວມມີຄື: ນະໂຍບາຍ ອາຫານປອດໄພ ສະບັບປີ 2009; ຫຼັກການ "ກະສິກຳສະອາດ, ປອດໄພ ແລະ ຍືນຍົງ" ສອດຄ່ອງກັບ ລະບົບຍັ້ງຢືນ ແລະ ມາດຕະຖານກະສິກຳສະອາດ ຂອງ ສປປ ລາວ ທີ່

ລັດຖະບານໄດ້ຮັບຮອງເອົາ ໃນປີ 2015 ຊຶ່ງສອດຄ່ອງກັບ ມາດຕະຖານກະສິກຳສະອາດ (GAP) ຂອງ ອາຊຽນ ສະບັບ ປີ 2014; ແລະ ມາດຕະຖານກະສິກຳປອດສານພິດ ຂອງ ສປປ ລາວ ຊຶ່ງຈັດຕັ້ງປະຕິບັດມາ ນັບແຕ່ປີ 2005. ເຖິງແມ່ນວ່າ ນະໂຍບາຍເຫຼົ່ານີ້ ສຸມໃສ່ ການຜະລິດເພື່ອສົ່ງອອກ ແຕ່ເມື່ອປະສົມປະສານກັບ ວຽກງານແກ້ໄຂຄວາມທຸກຍາກ ແລະ ພັດທະນາຊົນນະບົດແລ້ວ, ນະໂຍບາຍເຫຼົ່ານີ້ ຊ່ວຍສະໜັບສະໜູນການເພີ່ມມູນຄ່າໃຫ້ຜະລິດຕະພັນກະສິກຳ ເພື່ອໃຫ້ສາມາດຂາຍໄດ້ມູນຄ່າສູງ ໃນ ຕະຫຼາດຈຳໜ່າຍພາຍໃນ.

23. ການປະຕິບັດຕາມຂອບນະໂຍບາຍດັ່ງກ່າວ ທລຍ ໄດ້ປະກອບສ່ວນເຂົ້າໃຈ ການຈັດຕັ້ງປະຕິບັດບັນດານະໂຍບາຍ ຂອງ ລັດຖະບານ ທີ່ພົວພັນກັບ ການຫັນປ່ຽນລະບົບສະບຽງອາຫານ ເວົ້າສະເພາະ ເພື່ອ:
- ປັບປຸງມາດຕະຖານ ແລະ ນິຕິກຳ ກ່ຽວກັບ ອາຫານປອດໄພ ສຳລັບ ຜູ້ມີບົດບາດທຸກພາກສ່ວນ ໃນຕ່ອງໂສ້ມູນຄ່າການຜະລິດກະສິກຳ ເພື່ອຕອບສະໜອງຄວາມຕ້ອງການ ຂອງ ຕະຫຼາດພາກພື້ນ ແລະ ສາກົນ;
- ຈັດຕັ້ງປະຕິບັດ ນິຕິກຳພາຍໃນ ທີ່ພົວພັນກັບ ຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງອາດເກີດຈາກການລົງທຶນ, ການຜະລິດກະສິກຳສະອາດ ແລະ ວຽກງານອາຫານປອດໄພ ໃນລະດັບຊຸມຊົນ;
- ສ້າງຄວາມເຂັ້ມແຂງ ໃຫ້ ຄວາມສອດຄ່ອງ ລະຫວ່າງ ນະໂຍບາຍສົ່ງເສີມການພັດທະນາກະສິກຳ ເພື່ອສົ່ງອອກ ແລະ ຂອບກະສິກຳສີຂຽວ ແລະ ຍືນຍົງ ຮອດປີ 2030; ແລະ
- ສ້າງຄວາມເຂັ້ມແຂງ ໃຫ້ ການບໍລິການໃຫ້ຄຳປຶກສາທ້ອງຖິ່ນຊົນນະບົດ ກ່ຽວກັບ ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ.

24. ພາຍໃຕ້ສະພາບເງື່ອນໄຂດັ່ງກ່າວ, ເຫັນວ່າ: ແຜນລະດົມທຶນ RLRPP ສຳລັບ ທລຍ ສອດຄ່ອງກັບ ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 (ADS) ຂອງ ກສ ແລະ ແຜນພັດທະນາໄລຍະຫ້າປີ ຂອງ ແຕ່ລະອົງການກ່ຽວຂ້ອງພາຍໃຕ້ ກສ ຊຶ່ງສະໜັບສະໜູນ ຄາດໝາຍສູ້ຊົນ ແລະ ຈຸດປະສົງຂອງ ADS ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP) ສະບັບປະຈຸບັນ.

# ພາກທີ 2: ວິໄສທັດ, ຈຸດປະສົງ ແລະ ກຸ່ມຄາດໝາຍສູ້ຊົນ ຂອງ ແຜນລະດົມທຶນ ສຳລັບ ວຽກງານສ້າງຄວາມເຂັ້ມແຂງດ້ານການດຳລົງຊີວິດ ແລະ ແກ້ໄຂຄວາມ ທຸກຍາກ ຢູ່ ເຂດຊົນນະບົດ ທີ່ຈະຈັດຕັ້ງປະຕິບັດໂດຍ ກອງທຶນຫຼຸດຜ່ອນຄວາມ ທຸກຍາກ (ແຜນລະດົມທຶນ RLRPP ສຳລັ� ທລຍ) ແຕ່ປີ 2026-2030

## 2.1 ວິໄສທັດ ຂອງ ແຜນລະດົມທຶນ RLRPP ສຳລັບ ທລຍ

25. ວິໄສທັດ ຂອງ ແຜນລະດົມທຶນ RLRPP ສຳລັບ ທລຍ ແມ່ນຕ້ອງການເພີ່ມຄວາມເຂັ້ມຂຸ້ນ ແລະ ເລັ່ງການຈັດຕັ້ງປະຕິບັດ ແຜນງານພັດທະນາຊົນນະບົດ ເພື່ອແກ້ໄຂຄວາມຕ້ອງການໃໝ່ດ້ານການພັດທະນາ ຂອງບັນດາກຸ່ມປະຊາຊົນເປົ້າໝາຍ ຄື: ປະຊາຊົນທຸກຍາກ ແລະ ບັນດາຊຸມຊົນບອບບາງ ແລະ ຫ່າງໄກສອກຫຼີກທີ່ສຸດ ເວົ້າສະເພາະ:

ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈະຄຸ້ມຄອງການຈັດຕັ້ງປະຕິບັດ ບັນດາແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຜ່ານການສະໜອງການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃຫ້ແກ່ບັນດາກົມກອງ ພາຍໃຕ້ ກສ ແລະ ອົງການກ່ຽວຂ້ອງອື່ນໆ ຂອງ ລັດຖະບານ ທີ່ມີຄຳໝາຍໝັ້ນຈັດຕັ້ງປະຕິບັດ ກິດຈະກຳພັດທະນາຊົນນະບົດແບບຍືນຍົງ ດ້ວຍການນຳໃຊ້ ຫຼັກການຄຸ້ມຄອງບໍລິຫານແຜນງານທີ່ດີ ແລະ ການຄຸ້ມຄອງຄວາມສ່ຽງດ້ານສັງຄົມແລະສິ່ງແວດລ້ອມ ໃຫ້ມີຄວາມປອດໄພ ຕາມບັນດາເຂດເປົ້າໝາຍທີ່ບອບບາງ ແລະ ຫ່າງໄກສອກຫຼີກ ຂອງ ສປປ ລາວ ໂດຍສະເພາະ ໃນບັນດາເຂດທີ່ຖືກກະທົບຈາກເຫດການປ່ຽນແປງດິນຟ້າອາກາດ ຊຶ່ງເກີດຖີ່ຂຶ້ນ ແລະ ຮຸນແຮງຂຶ້ນ ເພື່ອປັບປຸງຄຸນນະພາບຊີວິດ, ການຄໍ້າປະກັນສະບຽງອາຫານ, ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການຫັນການຜະລິດກະສິກຳໃຫ້ເປັນທັນສະໄໝ ສຳລັບໄລຍະ 2025-2030 ແລະ ພາຍພາກໜ້າ.

## 2.2 **ຈຸດປະສົງ ຂອງ ແຜນລະດົມທຶນ** RLRPP **ສຳລັບ ທລຍ**

26. ພາຍໃຕ້ສະພາບເງື່ອນໄຂດັ່ງກ່າວ, ແຜນລະດົມທຶນ RLRPP ສຳລັບ ທລຍ ຈະຊ່ວຍສະໜັບສະໜູນ ການເຮັດບັນລຸບັນດາຈຸດປະສົງ ຂອງ ນະໂຍບາຍ, ຍຸດທະສາດ, ແຜນງານ ແລະ ທິດທາງຕ່າງໆ ຂອງ ລັດຖະບານ ທີ່ສ້າງຂຶ້ນສຳລັບ ໄລຍະ 2025-2030, ເວົ້າສະເພາະ:

ກ. ທິດທາງ ຂອງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າປີ ຄັ້ງທີ 10 (ແຜນສິບ) ຄື:

- i) ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ
- ii) ສ້າງເສດຖະກິດເປັນເຈົ້າຕົນເອງ ໂດຍເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ
- iii) ສ້າງເສດຖະກິດເອກະລາດ
- iv) ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ
- v) ປັບປຸງປະສິດທິພາບການຄຸ້ມຄອງບໍລິຫານລັດ
- vi) ຮ່ວມມືກັສາກົນຢ່າງຕັ້ງໜ້າ

ຂ. ຫ້າແຜນງານ ທີ່ກຳນົດໄວ້ໃນ ແຜນພັດທະນາກະສິກຳ, ປ່າໄມ້ ແລະ ຊົນນະບົດ ຫ້າປີ ຄັ້ງທີ 10 ຂອງ ກສ (AFRDP) ຄື:

- i) ການຜະລິດສະບຽງອາຫານ ເພື່ອການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ
- ii) ການຜະລິດກະສິກຳເປັນສິນຄ້າ ເພື່ອສະໜອງການຊົມໃຊ້ພາຍໃນ ແລະ ສົ່ງອອກ
- iii) ການປຸງແຕ່ງຜະລິດກະສຳແລະປ່າໄມ້

iv) ການຄຸ້ມຄອງ, ພັດທະນາ ແລະ ປົກປັກຮັກສາປ່າໄມ້ ແບບຍືນຍົງ

v) ແຜນງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ

27. ຈຸດປະສົງການພັດທະນາໄລຍະຍາວ ຂອງ ແຜນລະດົມທຶນ RLRPP ສຳລັບ ທລຍ ແມ່ນເພື່ອປັບປຸງຊີວິດການເປັນຢູ່ ແລະ ການບໍລິໂພກອາຫານຫຼາກຫຼາຍໝວດໝູ່ ສຳລັບຊຸມຊົນເປົ້າໝາຍທີ່ບອບບາງ ແລະ ຕອບໂຕ້ແກ້ໄຂຢ່າງວ່ອງໄວ ແລະ ມີປະສິດທິຜົນ ໃນກໍລະນີເກີດວິກິດ ຫຼື ເຫດການສຸກເສີນ. ທລຍ ສາມາດເຮັດບັນລຸຈຸດປະສົງດັ່ງກ່າວນັ້ນໂດຍຜ່ານການເຮັດໜ້າທີ່ ເປັນອົງການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ແລະ ຮ່ວມມືກັບ ບັນດາກົມກອງກ່ຽວຂ້ອງ ພາຍໃຕ້ ກສ ອົງການກ່ຽວຂ້ອງອື່ນໆ ຂອງ ລັດຖະບານ ທີ່ມີສ່ວນຮ່ວມໃນວຽກງານພັດທະນາຊົນ ນະບົດ ຊຶ່ງພາກສ່ວນກ່ຽວຂ້ອງເຫຼົ່ານັ້ນ ຈະເຮັດໜ້າທີ່ເປັນ ໜ່ວຍງານຈັດຕັ້ງປະຕິບັດໂຄງການ ເພື່ອພ້ອມພຽງກັນແກ້ໄຂຄວາມຕ້ອງການໃໝ່ດ້ານການພັດທະນາຊົນນະບົດ ຂອງ ປະຊາຊົນຜູ້ທຸກຍາກ ແລະ ບັນດາຊຸມຊົນທີ່ບອບບາງທີ່ສຸດ.

28. ແຜນລະດົມທຶນ RLRPP ສຳລັບ ທລຍ ມີສອງຈຸດປະສົງສະເພາະໃນລະດັບຜົນການດຳເນີນງານ ຄື:

a) ເພື່ອຮ່ວມມືກັບອົງການຈັດຕັ້ງລັດ ແລະ ເອກະຊົນ, ກຸ່ມ ແລະ ຄູ່ຮ່ວມພັດທະນາ ທີ່ມີຄວາມສົນໃຈຮ່ວມມືກັບ ລັດຖະບານ ເພື່ອແກ້ໄຂຄວາມທຸກຍາກ ແລະ ສົ່ງເສີມ ການພັດທະນາຊົນນະບົດແບບຍືນຍົງ ດ້ວຍການນຳສະເໜີຜົນງານຂອງ ທລຍ ໃນຖານະເປັນ ອົງການພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ທີ່ມີຄວາມໜ້າເຊື່ອຖື ແລະ ມີປະສົບການສູງ ໃນຂົງເຂດວຽກງານດັ່ງກ່າວ.

b) ເພື່ອປັບປຸງສະຖານະທາງການຈັດຕັ້ງໃນປະຈຸບັນ ຂອງ ທລຍ ພາຍໃນ ກສ ທີ່ຈະຊ່ວຍໃຫ້ ທລຍ ສາມາດເຄື່ອນໄຫວ ໃນຖານະເປັນອົງການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ຊຶ່ງສະໜັບສະໜູນຊ່ວຍເຫຼືອການຈັດຕັ້ງປະຕິບັດ ບັນດາໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ຈັດຕັ້ງປະຕິບັດໂດຍບັນດາກົມກອງພາຍໃຕ້ ກສ ແລະ ອົງການກ່ຽວຂ້ອງອື່ນໆ ຂອງ ລັດຖະບານ ໂດຍໃຫ້ສອດຄ່ອງກັບ *ຂໍ້ຕົກລົງນາຍົກລັດຖະມົນຕີ ວ່າດ້ວຍ ການແຕ່ງຕັ້ງຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງ, ເລກທີ 121/ນຍ, ລົງວັນທີ 02 ກັນຍາ 2024.*

29. ທລຍ ຈະສືບຕໍ່ເຄື່ອນໄຫວເພື່ອເຮັດບັນລຸບັນດາຈຸດປະສົງເຫຼົ່ານີ້ ພາຍຫຼັງ ລັດຖະມົນຕີ ກສ ອອກຂໍ້ຕົກລົງ ໃຫ້ ທລຍ ສາມາດເຮັດໜ້າທີ່ເປັນ ອົງການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ໂດຍຮ່ວມມືກັບ ບັນດາກົມກອງພາຍໃນ ກສ ແລະ ອົງການທີ່ກ່ຽວຂ້ອງອື່ນໆ ຂອງ ລັດຖະບານ ຊຶ່ງຈະເຮັດໜ້າທີ່ເປັນ ໜ່ວຍງານຈັດຕັ້ງປະຕິບັດໂຄງການ ເພື່ອຈັດຕັ້ງປະຕິບັດບັນດາໂຄງການ ແລະ ກິດຈະກຳຕ່າງໆຢູ່ພາກສະໜາມ ພາຍໃນບັນດາເຂດເປົ້າໝາຍ ຂອງ ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

# ພາກທີ 3: ແຜນລະດົມທຶນ ສຳລັບ ວຽກງານສ້າງຄວາມເຂັ້ມແຂງດ້ານການດຳລົງຊີວິດ ແລະ ແກ້ໄຂຄວາມທຸກຍາກ ຢູ່ ເຂດຊົນນະບົດ ສຳລັບ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ແຜນລະດົມທຶນ RLRPP ສຳລັບ ທລຍ) ແຕ່ປີ 2026-2030

### 3.1 **ຫົວຂໍ້ການຊ່ວຍເຫຼືອ ແລະ ຄາດໝາຍຜົນໄດ້ຮັບ ຂອງ ແຜນລະດົມທຶນ** RLRPP **ສໍາລັບ ທລຍ**

30. ບັນດາຫົວຂໍ້ການຊ່ວຍເຫຼືອ ພາຍໃຕ້ ແຜນລະດົມທຶນ RLRPP ສໍາລັບ ກອງທຶນຫຼຸດຜ່ອນຄວາມທຸກຍາກ ແຕ່ປີ 2026-2030 (ແຜນລະດົມທຶນ RLRPP ສໍາລັບ ທລຍ) ແມ່ນສອດຄ່ອງກັບ ບັນດາແຜນງານ ພາຍໃຕ້ ແຜນ ສິບ ແລະ ເສົາຄໍ້າ ຂອງ ແຜນພັດທະນາກະສິກໍາ, ປ່າໄມ້ ແລະ ຊົນນະບົດ ຫ້າປີ ຄັ້ງທີ 10 ຂອງ ກສ (AFRDP). ທທລ ໃນຖານະເປັນ ອົງການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ຈະຊ່ວຍສະໜັບສະໜູນຊ່ວຍເຫຼືອ ບັນດາ ກິດຈະກໍາ ແລະ ໂຄງການ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ຈັດຕັ້ງປະຕິບັດໂດຍ ກົມກອງ ພາຍໃຕ້ ກສ ແລະ ອົງການກ່ຽວຂ້ອງອື່ນໆ ຂອງ ລັດ ຕາມບັນດາຫົວຂໍ້ການຊ່ວຍເຫຼືອດັ່ງນີ້:
    - ການຜະລິດ ເພື່ອການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ,ແລະ ການດໍາລົງຊີວິດເປັນເອກະລາດ ເປັນເຈົ້າຕົນເອງ
    - ການຜະລິດກະສິກໍາເປັນສິນຄ້າ, ການເຂົ້າເຖິງຫຼາດ ແລະ ການຕະຫາດ
    - ກະສິກໍາ-ປ່າໄມ້, ການປູກເຄື່ອງປ່າຂອງດົງ ແລະ ການປຸງແຕ່ງກະສິກໍາ
    - ການພັດທະນາຊົນນະລົດ, ການລຶບລ້າງຄວາມທຸກຍາກ ແລະ ຄວາມຕໍ່ເນື່ອງ ຂອງ ແຜນງານ ທລຍ

#### 3.1.1 **ການຜະລິດ ເພື່ອການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ແລະ ປັບປຸງການດໍາລົງຊີວິດໃຫ້ ມີຄວາມເປັນເອກະລາດເປັນເຈົ້າຕົນເອງ**

31. ພາຍໃຕ້ແຜນລະດົມທຶນ RLRPP ສໍາລັບ ທລຍ, ທລຍ ສາມາດສະໜອງການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃນຖານະປັນ ອົງການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ໃຫ້ແກ່ ບັນດາໂຄງການຕ່າງໆ ທີ່ຈັດຕັ້ງ ປະຕິບັດໂດຍ ກົມກອງ ພາຍໃຕ້ ກສ ໃນຂົງເຂດການປູກ ແລະ ການລ້ຽງ ທີ່ປັບຕົວເຂົ້າກັບການປ່ຽນແປງດິນ ຟ້າອາກາດ ຊຶ່ງປະກອບສ່ວນເຂົ້າໃນວຽກງານ ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ໃຫ້ແກ່ຊຸມ ຊົນບອບບາງ. ກົມກອງ ພາຍໃຕ້ ກສ ທີ່ມີທ່າແຮງເປັນຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ ລວມມີຄື: ກົມພັດທະ ນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ (DRDPR ໃນຖານະເປັນ ກົມວິຊາການຫຼັກ ຂອງ ກສ ທີ່ຮັບ ຜິດ ຊອບກິດຈະກໍາປັບປຸງໂພຊະນາການ, ກົມປູກຝັງ (DOA) ໃນຖານະເປັນ ກົມວິຊາການຫຼັກ ສໍາລັບ ການ ຜະລິດກະສິກໍາ "ສະອາດ ແລະ ສີຂຽວ" ຊຶ່ງລວມເອົາ ການປູກພືດປະເພດຕ່າງໆ ທີ່ທົນແລ້ງ ແລະ ຜົນກະທົບ ຈາກຄວາມຮ້ອນໄດ້ດີ, ການກະຈາຍການປູກໃຫ້ຫຼາກຫາຍ ແລະ ວຽກງານສົ່ງເສີມມາດຕະຖານກະສິກໍາສະ ອາດ (GAP). ໂຄງການທີ່ກ່ຽວຂ້ອງກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຊຶ່ງລວມເອົາ ການປັບ ປຸງການຈັດການ ແລະ ເກັບມ້ຽນພືດຜົນຜະລິດ ແລະ ເມັດພັນ ຫຼັງເກັບກ່ຽວ, ການປັບປຸງຕົວແບບການຜະລິດ ພືດ ທີ່ເຊື່ອມສານເຕັກນິກນິເວດກະສິກໍາ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ກໍສາມາດໄດ້ ຮັບການສະໜັບສະໜູນຊ່ວຍເຫຼືອ ໂດຍການຮ່ວມມືກັບ ສະຖາບັນຄົ້ນຄວ້າກະສິກໍາ ແລະ ປ່າໄມ້ (NAFRI). ໂຄງການອື່ນໆ ທີ່ອາດຈະຖືກພິຈາລະນາໃຫ້ການຊ່ວຍເຫຼືອ ລວມເອົາ: ໂຄງການທີ່ພົວພັນກັບ ການອະນຸລັກນໍ້າ

ແລະດິນ ທີ່ສະເໜີໂດຍ ກົມຄຸ້ມຄອງແລະພັດທະນາທີ່ດິນ (DoLAD) ແລະ ໂຄງການ ທີ່ພົວພັນກັບ ກຸ່ມຜູ້ຜະລິດ, ອົງການຈັດຕັ້ງຂອງຊາວກະສິກອນ, ແລະ ການສະໜອງສິນເຊື່ອຢູ່ເຂດຊົນນະບົດ ທີ່ສະເໜີໂດຍກົມສົ່ງເສີມກະສິກຳ ແລະ ສະຫະກອນ (DAEC). ທລຍ ຍັງສາມາດໃຫ້ການຊ່ວຍເຫຼືອ ໂຄງການ ທີ່ສະເໜີໂດຍກົມຊົນລະປະທານ (DOI) ເພື່ອປັບປຸງລະບົບຊົນລະປະທານຂະໜາດນ້ອຍ ແລະ ຮ່ອງຊົນລະປະທານ, ແລະປັບປຸງການຄຸ້ມຄອງນໍ້າ ສຳລັບ ການຜະລິດກະສິກຳ ແລະ ການສະໜອງນໍ້າເຂົ້ານາ ຜ່ານການຈັດຝຶກອົບຮົມ ໃຫ້ບັນດາກຸ່ມຜູ້ນຳໃຊ້ນໍ້າ.

- ການປະກອບສ່ວນ ຂອງ ທລຍ ໃສ່ ຫົວຂໍ້ດັ່ງກ່າວ ແມ່ນຈະຢູ່ໃນຮອບ ການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃຫ້ບັນດາກົມກອງພາຍໃຕ້ ກສ ເພື່ອສົ່ງເສີມເຕັກນິກການຜະລິດກະສິກຳ ທີ່ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.
- ຄາດໝາຍຜົນໄດ້ຮັບ ຈາກກິດຈະກຳ ເຫຼົ່ານັ້ນ ແມ່ນໄດ້ນຳເໜີໄວ້ໃນ ຕາຕະລາງ 3.1.

| **ຕາຕະລາງ 3.1: ຫົວຂໍ້ 1: ການຜະລິດ ເພື່ອການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ,ແລະ ການດຳລົງຊີວິດເປັນເອກະລາດເປັນເຈົ້າຕົນເອງ** | |
|---|---|
| **ຄູ່ຮ່ວມຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງ ທລຍ** | **ຄາດໝາຍຜົນໄດ້ຮັບທີ່ຕ້ອງເຮັດບັນລຸ ໃນເຂດເປົ້າໝາຍໂຄງການ ທີ່ໄດ້ຮັບການຊ່ວຍເຫຼືອຈາກ ທລຍ** |
| DRD, DOA, NAFRI, DoLAD, DAEC, DOI | • ປັບປຸງການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ.<br>• ຜູ້ຜະລິດກະສິກຳຂະໜາດນ້ອຍ ຊຶ່ງນຳໃຊ້ ເຕັກນິກການຜະລິດທີ່ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເພື່ອການຜະລິດກະສິກຳເປັນສິນຄ້າ ມີຈຳນວນເພີ່ມຂຶ້ນ.<br>• ສ້າງຄວາມເຂັ້ມແຂງ ໃຫ້ຕ່ອງໂສ້ມູນຄ່າສະບຽງອາຫານ ພາຍໃນບ້ານ ຜ່ານ ກຸ່ມຜູ້ຜະລິດ, ກຸ່ມການຕະຫຼາດ ແລະ ອົງການຈັດຕັ້ງ ຂອງ ຊາວກະສິກອນ.<br>• ການນຳໃຊ້ຕົວແບບການຜະລິດ ທີ່ມີຜະລິດຕະພາບສູງ ມີເພີ່ມສູງຂຶ້ນໃນກຸ່ມຜູ້ຜະລິດກະສິກຳຂະໜາດນ້ອຍ ຊຶ່ງໝູນໃຊ້ເຕັກນິກການຜະລິດກະສິກຳ ທີ່ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ສຳລັບ ການປູກແນວພັນເຂົ້າລາວ, ການປູກຜັກໃນເຮືອນຮົ່ມ ແລະ ການລ້ຽງສັດນ້ອຍ.<br>• ເພີ່ມການນຳໃຊ້ມາດຕະຖານ GAP.<br>• ເພີ່ມການປູກໄດ້ຫຼາຍລະດູ ໃນເຂດທີ່ມີລະບົບຊົນລະປະທານຂະໜາດນ້ອຍ ແລະ ກາງ.<br>• ລະບົບຊົນລະປະທານຂະໜາດນ້ອຍ ແລະ ຮ່ອງຊົນລະປະທານ ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ. |

### 3.1.2 **ການຜະລິດກະສິກຳເປັນສິນຄ້າ, ການເຂົ້າເຖິງຕະຫຼາດ ແລະ ການຕະຫຼາດ**

32. ພາຍໃຕ້ແຜນລະດົມທຶນ RLRPP ສຳລັບ ທລຍ, ທລຍ ສາມາດໃຫ້ການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃນຖານະເປັນ ອົງການການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ໃຫ້ແກ່ ບັນດາໂຄງການ ທີ່ຈັດຕັ້ງ

ປະຕິບັດໂດຍ ກົມກອງພາຍໃຕ້ ກສ ຊຶ່ງສົ່ງເສີມການຜະລິດກະສິກຳເປັນສິນຄ້າ ເພື່ອຮັບໃຊ້ ການຊົມໃຊ້ພາຍໃນ ແລະ ສົ່ງອອກ. ແຜນລະດົມທຶນ RLRPP ສຳລັບ ທລຍ ມີເປົ້າໝາຍແນໃສ່ ເພີ່ມຜະລິດຕະພາບ ໃຫ້ແກ່ການຜະລິດກະສິກຳເປັນສິນຄ້າ ຂອງ ຜູ້ຜະລິດກະສິກຳຂະໜາດນ້ອຍ, ຈຸດປະສົງແມ່ນເພື່ອ ຫຼຸດຜ່ອນການເອື່ອຍອີງການນຳເຂົ້າຜະລິດ ຕະພັນສະບຽງອາຫານຈາກຕ່າງປະເທດ, ສາມາດຜະລິດເພື່ອສົ່ງອອກ, ເພີ່ມຮອບວຽນການປູກ ໃນເຂດ ທີ່ມີລະບົບຊົນລະປະທານຂະໜາດນ້ອຍ ແລະ ຂະໜາດກາງ. ກົມກອງ ພາຍໃນ ກສ ທີ່ສາມາດເປັນຄູ່ຮ່ວມງານ ຂອງ ທລຍ ລວມມີ: ກົມປູກຝັງ (DOA) ໃນຖານະເປັນກົມຫຼັກ ທີ່ຮັບຜິດຊອບສົ່ງເສີມ ການຜະລິດກະສິກຳ "ສະອາດ ແລະ ສີຂຽວ" ຊຶ່ງລວມທັງ ການສົ່ງເສີມການປູກທີ່ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການກະຈາຍການປູກ ໃຫ້ມີຄວາມຫຼາກຫຼາຍ ກໍຄື GAP; ແລະ ສະຖາບັນຄົ້ນຄວ້າກະສິກຳ-ປ່າໄມ້ (NAFRI) ທີ່ຮັບຜິດຊອບການສ້າງຄວາມເຂັ້ມແຂງ ໃຫ້ ຜູ້ຜະລິດສາມາດເຂົ້າເຖິງຕະຫຼາດ, ໝູນໃຊ້ຄວາມຮູ້ ແລະ ທັກສະ ຂອງ ແຮງງານເຄື່ອນຍ້າຍທີ່ເດີນທາງກັບຄືນປະເທດ ເພື່ອນຳສະເໜີເຕັກໂນໂລຊີການຜະລິດທີ່ເປັນນາວັດຕະກຳໃໝ່ ຢູ່ໃນລະດັບຟາມ ກໍຄື ການຫັນການຜະລິດກະສິກຳເປັນທັນສະໄໝ ແລະ ທົດລອງ ການຜະລິດແບບລະບົບນິເວດກະສິກຳ. ທລຍ ຍັງສາມາດຊ່ວຍເຫຼືອ ບັນດາກິດຈະກຳຂອງ ກົມສົ່ງເສີມກະສິກຳແລະສະຫະ ກອນ (DAEC) ທີ່ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຜູ້ຜະລິດ ແລະ ກຸ່ມການຕະຫຼາດ ເພື່ອຫັນເປັນທັນສະໄໝ ແລະ ປັບປຸງຕ່ອງໂສ້ການສະໜອງ ເຊື່ອມໂຍງຜູ້ຜະລິດແລະ ຕະຫຼາດ ໃຫ້ກະທັດຮັດຂຶ້ນ. ນອກຈາກນັ້ນ, ທລຍ ຍັງສາມາດຊ່ວຍເຫຼືອໂຄງການ ທີ່ນຳສະເໜີໂດຍ ກົມຊົນລະປະທານ (DOI) ເພື່ອປັບປຸງ ລະບົບຊົນລະປະທານຂະໜາດນ້ອຍ ແລະ ຮ່ອງຊົນລະປະທານ, ການຄຸ້ມຄອງນ້ຳ ສຳລັບ ການຜະລິດກະກິກຳ ແລະ ການສະໜອງນ້ຳເຂົ້ານາ ຜ່ານການຈັດຝຶກອົບຮົມ ໃຫ້ ບັນດາກຸ່ມຜູ້ນຳໃຊ້ນ້ຳ.

- ການປະກອບສ່ວນ ຂອງ ທລຍ ເຂົ້າໃນຫົວຂໍ້ດັ່ງກ່າວ ແມ່ນລວມເອົາ ການຊ່ວຍເຫຼືອທາງດ້ານການເງິນ ແລະວິຊາການ ເພື່ອສົ່ງເສີມການເປັນຜູ້ປະກອບການໃນຂັ້ນຄົວເຮືອນ ແລະ ຂັ້ນບ້ານ, ການສະໜອງສິນເຊື່ອໃຫ້ການຜະລິດ ຜ່ານລະບົບກອງທຶນບ້ານ, ແລະ ການເຊື່ອມໂຍງຜູ້ຜະລິດໃສ່ຕະຫຼາດພາຍໃນ.
- ຄາດໝາຍຜົນໄດ້ຮັບ ຂອງ ກິດຈະກຳເຫຼົ່ານັ້ນ ແມ່ນໄດ້ນຳສະເໜີໄວ້ໃນ ຕາຕະລາງ 3.2.

| **ຕາຕະລາງ 3.2: ຫົວຂໍ້ 2: ການຜະລິດກະສິກຳເປັນສິນຄ້າ, ການເຂົ້າເຖິງຕະຫຼາດ ແລະ ການຕະຫຼາດ** | |
|---|---|
| **ຄູ່ຮ່ວມຈັດຕັ້ງປະຕິບັດວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກ ຂອງ ທລຍ** | **ຄາດໝາຍຜົນໄດ້ຮັບ ທີ່ຕ້ອງເຮັດສຳເລັດ ໃນເຂດເປົ້າໝາຍ ທີ່ໄດ້ຮັບ ການຊ່ວຍເຫຼືອ ຈາກ ທລຍ** |
| • DOA, NAFRI, DAEC, DOI<br>• ທະນາຄານທຸລະກິດ ຂອງ ລັດ | • ທລຍ ຮ່ວມມືກັບ DAEC, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງ ຂອງ ພາກເອກະຊົນ ເພື່ອສົ່ງເສີມການເປັນຜູ້ປະການ ໃນຂັ້ນຄົວເຮືອນ ແລະ ຂັ້ນບ້ານ, ເຊື່ອມໂຍງ ກຸ່ມຜູ້ຜະລິດກະສິກຳຂະໜາດນ້ອຍ ໃສ່ ຕະຫຼາດພາຍໃນ.<br>• ສ້າງຄວາມສາມາດດ້ານການເປັນຜູ້ປະກອບການ ຂັ້ນບ້ານ.<br>• ທລຍ ຮ່ວມມືກັບ ທະນາຄານທຸລະກິດ ຂອງ ລັດ ສົ່ງເສີມການປ່ອຍກູ້ ໃຫ້ ຜູ້ຜະລິດຂະໜາດນ້ອຍ ແລະ ທຸລະກິດປຸງແຕ່ງກະສິກຳຂະໜາດນ້ອຍ.<br>• ຄວາມຮູ້ແລະທັກສະຂອງແຮງງານເຄື່ອນຍ້າຍ ທີ່ເດີນທາງກັບຄືນປະເທດ ໄດ້ຮັບການໝູນໃຊ້ ເພື່ອເພີ່ມຜະລິດຕະພາບ ໃນການຜະລິດກະສິກຳເປັນສິນຄ້າ. |

| ຕາຕະລາງ 3.2: ຫົວຂໍ້ 2: ການຜະລິດກະສິກຳເປັນສິນຄ້າ, ການເຂົ້າເຖິງຕະຫຼາດ ແລະ ການຕະຫຼາດ | |
|---|---|
| **ຄູ່ຮ່ວມຈັດຕັ້ງປະຕິບັດວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກ ຂອງ ທລຍ** | **ຄາດໝາຍຜົນໄດ້ຮັບ ທີ່ຕ້ອງເຮັດສຳເລັດ ໃນເຂດເປົ້າໝາຍ ທີ່ໄດ້ຮັບ ການຊ່ວຍເຫຼືອ ຈາກ ທລຍ** |
| | • ລະບົບຊົນນະປະທານຂະໜາດນ້ອຍ ແລະ ຄອງຊົນລະປະທານ ມີຄວາມທົນທານ ສູງຂຶ້ນຕໍ່ການປ່ຽນແປງດິນຟ້າອາກາດ. |

### 3.1.3 ວຽກງານກະສິກຳ-ປ່າໄມ້, ການປູກເຄື່ອງປ່າຂອງດົງ ແລະ ການປຸງແຕ່ງກະສິກຳ

33. ພາຍໃຕ້ແຜນລະດົມທຶນ RLRPP ສຳລັບ ທລຍ, ທລຍ ສາມາດສະໜອງການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃນຖານະເປັນອົງການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ໃຫ້ແກ່ບັນດາໂຄງການຕ່າງໆ ທີ່ຈັດຕັ້ງປະຕິບັດໂດຍ ກົມກອງ ພາຍໃຕ້ ກສ ທີ່ສົ່ງເສີມການຜະລິດກະສິກຳ ແລະ ການປຸງແຕ່ງກະສິກຳ ທີ່ເປັນການເພີ່ມມູນຄ່າ ໃຫ້ຜະລິດຕະພັນອາຫານ, ຜະລິດຕະພັນກະສິກຳ ແລະ ປ່າໄມ້ ໃນຂັ້ນຊຸມຊົນ. ຈຸດສຸມ ແມ່ນຈະເນັ້ນໃສ່ການ ນຳໃຊ້ແນວພັນພືດທີ່ໄດ້ຮັບການປຸງ, ການປັບປຸງພໍ່ແມ່ພັນສັດລ້ຽງ, ແລະ ສົ່ງເສີມການປູກເຄື່ອງປ່າຂອງດົງ ສ້າງຄວາມເປັນເອກະລາດເປັນເຈົ້າຕົນເອງ ໃຫ້ຂັ້ນຄົວເຮືອນ ແລະ ຂັ້ນບ້ານ, ແລະ ຮັກສາການຄ້ຳປະກັນສະບຽງອາຫານແລະໂພຊະນາການໃນຂັ້ນຄົວເຮືອນ. ສ່ວນເກີນຂອງຜົນຜະລິດ ແມ່ນສາມາດນຳໄປຈຳໜ່າຍ ຢູ່ຕະຫຼາດພາຍໃນ. ກົມກອງ ພາຍໃຕ້ ກສ ສາມາດສົ່ງບົດສະເໜີໂຄງການທີ່ເປັນການຮ່ວມມືລະຫວ່າງກົມວິຊາການ ເພື່ອຂໍທຶນຈັດຕັ້ງປະຕິບັດ ໂດຍ DRDPR ເຮັດວຽກຄ້ຳປະກັນສະບຽງອາຫານ; DAEC ຄຸ້ມຄອງວຽກງານຍົກລະດັບໃຫ້ ກຊກ ແລະ ຈັດຕັ້ງກຸ່ມຜະລິດ ແລະ ກຸ່ມປຸງແຕ່ງກະສິກຳ; NAFRI ສຸມໃສ່ການສົ່ງເສີມ ແລະ ສາທິດການປູກແນວພັນພືດທີ່ເໝາະສົມ ແລະ ປັບປຸງພໍ່ແມ່ພັນສັດລ້ຽງ; ແລະ DOA ຊີ້ນຳວຽກຄວບຄຸມຄຸນນະພາບ ແລະ ການອອກໃບຢັ້ງຢືນ ໃຫ້ ຜົນຜະລິດທີ່ເປັນສິນຄ້າ. ກົມປ່າໄມ້ (DOF) ກໍສາມາດສົ່ງບົດສະເໜີ ໂຄງການ ທີ່ເນັ້ນໃສ່ການປູກ ເຄື່ອງປ່າຂອງດົງ ເປັນຕົ້ນປະເພດເຄື່ອງປ່າຂອງດົງ (NTFPs) ທີ່ໃຫ້ຄຸນຄ່າທາງໂພຊະນາການ, ທາງການຢາ ແລະ ປະເພດເຄື່ອງປ່າຂອງດົງ ທີ່ມີມູນຄ່າສູງ ເພື່ອການສົ່ງອອກ ໂດຍປູກປະສົມໃສ່ກັບຊະນິດພັນໄມ້ປ່າທ້ອງຖິ່ນມູນຄ່າສູງ ທີ່ໃຫຍ່ໄວ. DoLAD ສາມາດຈັດຕັ້ງປະຕິບັດ ໂຄງການ ຮ່ວມກັບ ກຸ່ມ ກຊກ ເຂດເນີນສູງ ຢູ່ຕາມບໍລິເວນອ່າງໂຕ່ງຂະໜາດນ້ອຍ, ເຂດກັນຊົນ ທີ່ຕິດກັບ ປ່າປ້ອງກັນ ແລະ ປ່າສະຫງວນ ໃນລະບົບນິເວດກະສິກຳເນີນສູງ ທີ່ບອບບາງຕໍ່ການປ່ຽນແປງດິນຟ້າອາກາດ. ກຊກ ສາມາດ ຈັດຕັ້ງ ແລະ ຄຸ້ມຄອງ ວິສາຫະກິດປຸງແຕ່ງກະສິກຳ ແລະ ການທ່ອງທ່ຽວແບບທຳມະຊາດໃນຂັ້ນບ້ານ ຢູ່ຕາມບັນດາບ້ານພູດອຍ ຜ່ານ ໂຄງການ ທີ່ຈັດຕັ້ງປະຕິບັດໂດຍ DAEC. NAFRI ໂດຍການຮ່ວມມືກັບ DAEC ສາມາດຈັດຕັ້ງປະຕິບັດກິດຈະກຳພັດທະນາກະສິກຳ-ປ່າໄມ້ ຊຶ່ງລວມເອົາ ການປູກເຄື່ອງປ່າຂອງດົງ (NTFPs) ແລະ ການສະໜັບສະໜູນສົ່ງເສີມ ເຕັກນິກການຜະລິດກະສິກຳທີ່ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (CSA) ເພື່ອເພີ່ມຜະລິດຕະພາບ, ປັບປຸງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ, ແລະ ຫຼຸດຜ່ອນການປ່ອຍທາດ ອາຍພິດເຮືອນແກ້ວ. ທລຍ ຍັງອາດຈະພິຈາລະນາໃຫ້ທຶນຊ່ວຍເຫຼືອ ກົມກອງ ພາຍໃຕ້ ກສ ທີ່ຈັດຕັ້ງປະຕິບັດ ໂຄງການ ໃນເຂດອ່າງໂຕ່ງ ເຊັ່ນ: ໂຄງການ “ໂຄງການຄຸ້ມຄອງອ່າງໂຕ່ງຂະໜາດຈຸລະ

ພາກແບບຍືນຍົງ ຢູ່ພາກ ເໜືອ" (SWAN) ທີ່ມີ ກົມແຜນການແລະການຮ່ວມມື (DOPC) ເຮັດໜ້າທີ່ເປັນອົງການຄຸ້ມຄອງການຈັດຕັ້ງປະຕິບັດ. ຈຳເປັນຕ້ອງມີ ການຜະລິດກະສິກຳເປັນສິນຄ້າໃນປະລິມາສູງ ຢ່າງເປັນລະບົບ ເພື່ອດຶງດູດ ພໍ່ຄ້າແມ່ຄ້າ ແລະ/ຫຼື ຜູ້ປຸງແຕ່ງອາຫານ ແລະ ຜະລິດຕະພັນກະສິກຳ, ຫຼື ເພື່ອຍາດແຍ່ງສ່ວນແບ່ງຕະຫຼາດ ຈາກຄູ່ແຂ່ງທີ່ມີຢູ່. ທຸລະກິດກະສິກຳ ຂອງ ຄົນລາວ ແລະ ພາກເອກະຊົນລະດັບພາກພື້ນ ສາມາດຮ່ວມມືກັບ ກົມກອງ ພາຍໃຕ້ ກສ ເພື່ອສະໜອງຄຳແນະນຳດ້ານເຕັກນິກສະເພາະດ້ານ ຕາມຄວາມເໝາະສົມ ແລະ ສ້າງຄວາມສາມາດໃຫ້ ວິຊາການຂັ້ນແຂວງ ແລະ ເມືອງ ຕະຫຼອດເຖິງ ຜູ້ຜະລິດກະສິກຳຂະໜາດນ້ອຍ ເພື່ອປູກພືດມູນຄ່າສູງ ສະໜອງອຸດສາຫະກຳປຸງແຕ່ງ. ອົງການຈັດຕັ້ງສັງຄົມ (CSO) ທີ່ມີປະສົບການ ສາມາດຮ່ວມມື ກັບ ກົມກອງພາຍໃຕ້ ກສ ເພື່ອສ້າງສາຍເຊື່ອມໂຍງ ກັບ ພໍ່ຄ້າແມ່ຄ້າ ແລະ ຕະຫຼາດ; ຫຼື ວິສາຫະກິດເອກະຊົນ ສາມາດຮ່ວມສັນຍາການຜະລິດກະສິກຳ ກັບ ກຸ່ມຜູ້ຜະລິດ.

- ການປະກອບສ່ວນຂອງ ທລຍ ໃສ່ຫົວຂໍ້ດັ່ງກ່າວ ແມ່ນການສະໜອງການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃຫ້ແກ່ ກົມກອງພາຍໃຕ້ ກສ ເພື່ອສົ່ງເສີມການປຸງແຕ່ງເພີ່ມມູນຄ່າໃຫ້ຜົນຜະລິດກະສິກຳ ແລະ (NTFPs) ໃນຂັ້ນຄົວເຮືອນ ແລະ ຂັ້ນບ້ານ. ທລຍ ຍັງສາມາດຮ່ວມມື ກັບ CSO ແລະ ວິສາຫະກິດກະສິກຳເອກະຊົນ ເພື່ອອຳນວຍຄວາມສະດວກໃຫ້ ການເຊື່ອມໂຍງ ກຸ່ມຜູ້ຜະລິດ ແລະ ກຸ່ມການຕະ ຫຼາດ ໃຫ້ເຂົ້າເຖິງ ຕະຫຼາດພາຍໃນ ແລະ ພາກພື້ນ. ນອກຈາກນັ້ນ, ທລຍ ຍັງສາມາດສະໜອງການຊ່ວຍ ເຫຼືອທາງດ້ານການເງິນ ແລະ ວິຊາການ ໃຫ້ແກ່ ກົມກອງພາຍໃຕ້ ກສ ເພື່ອຈັດຕັ້ງປະຕິບັດກິດຈະກຳວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແລະ ການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ຢູ່ເຂດອ່າງໂຕ່ງ, ເຂດກັນຊົນ ທີ່ຕິດຈອດ ກັບ ປ່າປ້ອງກັນ, ປ່າສະຫງວນ, ແລະ ປ່າຜະລິດ ຊຶ່ງສົ່ງເສີມການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ການປັບປຸງຊີວິດການເປັນຢູ່ ເຂດພູດອຍຫ່າງໄກສອກຫຼີກ ທີ່ບອບບາງ. ທລຍ ຍັງສາມາດສະໜັບສະໜູນ ກົມກອງພາຍໃຕ້ ກສ ທີ່ຮ່ວມມືກັບ ອົງການຈັດຕັ້ງສັງຄົມເພື່ອຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ໃນເຂດບອບບາງຕໍ່ການປ່ຽນແປງດິນຟ້າອາກາດ ຊຶ່ງສະໜັບສະໜູນກິດຈະກຳພັດທະນາແລະອະນຸລັກແບບເຊື່ອມສານ (ICAD) ຢູ່ເຂດກັນຊົນ ແລະ ສົ່ງເສີມການປົກປັກຮັກສາປ່າໄມ້.
- ຄາດໝາຍຜົນໄດ້ຮັບ ຂອງ ກິດຈະກຳເຫຼົ່ານັ້ນ ແມ່ນໄດ້ນຳສະເໜີໄວ້ໃນ ຕາຕະລາງ 3.3.

| ຕາຕະລາງ 3.3: ຫົວຂໍ້ 3: ວຽກງານກະສິກຳ-ປ່າໄມ້, ການປູກເຄື່ອງປ່າຂອງດົງ ແລະ ການປຸງແຕ່ງກະສິກຳ | |
|---|---|
| **ຄູ່ຮ່ວມຈັດຕັ້ງປະຕິບັດວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກ ຂອງ ທລຍ** | **ຄາດໝາຍຜົນໄດ້ຮັບ ທີ່ຕ້ອງເຮັດສຳເລັດ ໃນເຂດເປົ້າໝາຍ ທີ່ໄດ້ຮັບ ການຊ່ວຍເຫຼືອ ຈາກ ທລຍ** |
| • DRDPR, DOA, NAFRI, DAEC, DOF, DOLF<br>• ວິສາຫະກິດກະສິກຳ ຂອງ ພາກເອກະຊົນ<br>• ອົງການຈັດຕັ້ງສັງຄົມ | • ຜູ້ຜະລິດຂະໜາດນ້ອຍ ແລະ ກຊກ ປຸງແຕ່ງຜົນຜະລິດກະສິກຳເປັນສິນຄ້າ ໃນຂັ້ນຄົວເຮືອນ ແລະ ຂັ້ນບ້ານ ເພື່ອເພີ່ມມູນຄ່າໃຫ້ຜົນຜະລິດກະສິກຳ.<br>• ທລຍ ໃຫ້ການສະໜັບສະໜູນບັນດາໂຄງການ ຂອງ ກົມກອງພາຍໃຕ້ ກສ ທີ່ຮ່ວມມືກັບວິສາຫະກິດທ້ອງຖິ່ນ ແລະ ພາກພື້ນ ຜ່ານສັນຍາສະໜອງການຜະລິດ ແລະ ການສະໜອງເງິນກູ້ ໃຫ້ແກ່ການຜະລິດ ຂອງ ກຊກ.<br>• ກະຈາຍການຜະລິດກະສິກຳ ແລະ ການປຸງແຕ່ງຜົນຜະລິດກະສິກຳ ໃຫ້ມີຄວາມຫຼາກຫຼາຍ ເພື່ອໂພຊະນາການທີ່ດີຍິ່ງຂຶ້ນ ຂອງ ຄົວເຮືອນ. |

| ຕາຕະລາງ 3.3: ຫົວຂໍ້ 3: ວຽກງານກະສິກຳ-ປ່າໄມ້, ການປູກເຄື່ອງປ່າຂອງດົງ ແລະ ການປຸງແຕ່ງກະສິກຳ | |
|---|---|
| **ຄູ່ຮ່ວມຈັດຕັ້ງປະຕິບັດວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກ ຂອງ ທລຍ** | **ຄາດໝາຍຜົນໄດ້ຮັບ ທີ່ຕ້ອງເຮັດສຳເລັດ ໃນເຂດເປົ້າໝາຍ ທີ່ໄດ້ຮັບ ການຊ່ວຍເຫຼືອ ຈາກ ທລຍ** |
| | • ຜູ້ຜະລິດກະສິກຳຂະໜາດນ້ອຍ ພາກັນປູກເຄື່ອງປ່າຂອງດົງ (NTFPs) ທີ່ມີຄຸນຄ່າ ທາງໂພຊະນາການ ແລະ ມີມູນຄ່າສູງ ບົນພື້ນຖານຜົນການວິເຄາະ ຕ່ອງໂສ້ມູນຄ່າ ກະສິກຳ-ປ່າໄມ້ ແລະ ເສດຖະສາດການກະເສດ.<br>• ປັບປຸງການໝູນໃຊ້ເຕັກນິກ CSA ທີ່ມີຜະລິດຕະພາບສູງ, ປັບປຸງຄວາມ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໃຫ້ແກ່ ຊຸມຊົນເຂດເນີນສູງ, ແລະ ຫຼຸດຜ່ອນການຖາງປ່າເຮັດໄຮ່ ແລະ ການລ່າສັດປ່າ.<br>• ບໍລິມາດຂອງຜະລິດກະສິກຳສະອາດ ແລະ ສີຂຽວ (ປອດສານພິດ) ທີ່ຜະລິດໂດຍ ຜູ້ຜະລິດຂະໜາດນ້ອຍ ໄດ້ຮັບການຢັ້ງຢືນ ຕາມມາດຕະຖານ GAP ແລະ ແຫຼ່ງ ກຳເນີດສິນຄ້າ (GI) ຈາກ DOA ມີເພີ່ມສູງຂຶ້ນ.<br>• ທລຍ ສະໜັບສະໜູນ ກົມກອງພາຍໃຕ້ ກສ ທີ່ຮ່ວມມືກັບ ອົງການຈັດຕັ້ງ ສັງຄົມ ເພື່ອສະໜອງຄຳແນະນຳດ້ານການຕະຫຼາດ ໃຫ້ແກ່ ກຸ່ມຜູ້ຜະລິດ ແລະ ກຊກ. |

### 3.1.4 ວຽກງານພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ຄວາມຕໍ່ເນື່ອງ ຂອງ ແຜນງານ ທລຍ

34. ພາຍໃຕ້ແຜນລະດົມທຶນ RLRPP ສຳລັບ ທລຍ, ທລຍ ສາມາດໃຫ້ການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃນຖານະເປັນອົງການຄຸ້ມຄອງໂຄງການ ໃຫ້ແກ່ ບັນດາໂຄງການຕ່າງໆ ທີ່ຈັດຕັ້ງປະຕິບັດໂດຍກົມ ກອງພາຍໃຕ້ ສສ ແລະ ອົງການກ່ຽວຂ້ອງຂອງລັດ ຊຶ່ງລວມເອົາກິດຈະກຳ ສ້າງຄວາມເຂັ້ມແຂງໃຫ້ບ້ານມີຄວາມ ເປັນເອກະລາດເປັນເຈົ້າຕົນເອງ, ແກ້ໄຂຄວາມທຸກຍາກ ແລະ ຮັກສາຄວາມຕໍ່ເນື່ອງ ຂອງ ກິດຈະກຳແກ້ໄຂ ຄວາມທຸກຍາກ ທີ່ ລິເລີ່ມຈັດຕັ້ງປະຕິບັດໂດຍ ທລຍ ໃນໄລຍະຜ່ານມາ. ໂຄງການ ທີ່ຈັດຕັ້ງປະຕິບັດໂດຍ NAFRI ແລະ DAEC ອາດຈະລວມເອົາວຽກງານສ້າງຄວາມເຂັ້ມແຂງ ໃຫ້ ອົງການຈັດຕັ້ງ ຂອງ ຊາວກະສິກອນ , ຈຸລະວິສາຫະກິດກະ ສິກຳຂັ້ນບ້ານ ກໍຄື ການເຜີຍແຜ່ຜົນການຄົ້ນຄວ້າວິໄຈ ຈາກການວິເຄາະຕ່ອງໂສ້ມູນຄ່າ ໃຫ້ແກ່ ວິຊາການຂັ້ນແຂວງ ແລະ ເມືອງ, ແລະ ກຊກ ຂັ້ນບ້ານ. ທລຍ ສາມາດສົ່ງເສີມບ້ານ ແລະ ຄົວເຮືອນ ໃຫ້ມີຄວາມເປັນເອກະລາດເປັນເຈົ້າຕົນເອງ ດ້ວຍການສະໜັບສະໜູນ ການຈັດຕັ້ງປະຕິບັດກິດຈະກຳ ຂອງ NAFRI ໂດຍສຸມໃສ່ການອະນຸລັກແນວພັນເຂົ້າ, ແນວພັນຜັກທ້ອງຖິ່ນ, ພໍ່ພັນແມ່ພັນສັດລ້ຽງ ທ້ອງຖິ່ນ. DAEC ໂດຍການຮ່ວມມືກັບ NAFRI ຍັງສາມາດສ້າງຄວາມເຂັ້ມແຂງ ໃຫ້ ກຸ່ມຊາວກະສິກອນ ເພື່ອຄຸ້ມຄອງ ກອງທຶນສົ່ງເສີມການປູກຂັ້ນບ້ານ ແລະ ເຜີຍແຜ່ເຕັກໂນໂລຊີ ໃຫ້ແກ່ ຜູ້ຜະລິດຂະໜາດນ້ອຍ, ຈັດຕັ້ງການ ພັດທະນາຊັບພະຍາ ກອນມະນຸດ ແລະ ການສ້າງຄວາມສາມາດ. NAFRI ໂດຍການຮ່ວມມືກັບ DAEC, DOF, DRDPR, ແລະ ກົມປູກຝັງແລະການປະມົງ (DOLF) ຍັງສາມາດເຮັດການຄົ້ນຄວ້າວິໄຈພຶດຕິກຳຕົວຈິງ ແລະ ສົ່ງເສີມເຕັກນິກການຜະລິດກະສິກຳທີ່ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (CSA) ເພື່ອປັບປຸງ ການຄຸ້ມຄອງພູມມິທັດເຂດເນີນສູງ (ເນື້ອທີ່ການປູກ, ການລ້ຽງ, ປ່າໄມ້ ແລະ ການປະມົງ) ເພື່ອແກ້ໄຂສິ່ງທ້າ ທາຍ ທີ່ພົວພັນກັບວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ແລະ ປັບຕົວເຂົ້າກັບການປ່ຽນແປງ

ດິນຟ້າອາກາດ. ທລຍ ຍັງສາມາດສະໜັບສະໜູນ DOI ແລະ ອົງການກ່ຽວຂ້ອງຂອງລັດ ໃນການຈັດຕັ້ງປະຕິບັດ ບັນດາໂຄງການ ທີ່ພົວພັນກັບການກໍ່ສ້າງໂຄງລ່າງພື້ນຖານຊົນນະບົດ ຊຶ່ງມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາ ກາດ ໃນນັ້ນລວມເອົາ ລະບົບຊົນລະປະທານຂະໜາດນ້ອຍ ແລະ ຄອງຊົນລະປະ ທານ, ນ້ຳປະຊາຊຸມຊົນ, ໄຟຟ້າ ແລະ ເສັ້ນທາງເຂົ້າເຖິງ. ນອກຈາກນີ້, ທລຍ ຍັງສາມາດສະໜັບສະໜູນ DAEC ແລະ ທະນາຄານທຸລະກິດຂອງລັດ ເພື່ອຈັດຕັ້ງປະຕິບັດ ກິດຈະກຳຕ່າງໆ ກ່ຽວກັບ ການສ້າງຄວາມສາມາດໃຫ້ ກຸ່ມຝາກປະຫຍັດ ແລະ ປ່ອຍກູ້ຂັ້ນບ້ານ ຊຶ່ງເປັນການສ້າງຄວາມສາມາດທາງການຈັດຕັ້ງ ແລະ ປັບປຸງການສະໜອງບໍລິການສາທາລະ ນະ ເຊື່ອມໂຍງວຽກການປົກຄອງທ້ອງຖິ່ນ ໃສ່ກັບ ວຽກສະໜອງສິນເຊື່ອຈຸລະພາກ.

- ການປະກອບສ່ວນ ຂອງ ທລຍ ໃສ່ ຫົວຂໍ້ດັ່ງກ່າວ ແມ່ນການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃຫ້ແກ່ ກົມກອງ ພາຍໃຕ້ ກສ ແລະ ອົງການກ່ຽວຂ້ອງຂອງລັດ ເພື່ອຈັດຕັ້ງປະຕິບັດ ກິດຈະກຳ ທີ່ຮັກສາຄວາມຕໍ່ເນື່ອງ ຂອງ ແຜນງານພັດທະນາ ຂອງ ທລຍ, ສົ່ງເສີມ ເຕັກນິກ CSA ເພື່ອປັບປຸງການຄຸ້ມຄອງພູມມີທັດ, ແກ້ໄຂສິ່ງທ້າທາຍ ຂອງ ວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ແລະ ການປ່ຽນແປງດິນຟ້າອາກາດ. ທລຍ ຍັງສາມາດຮ່ວມມື ກັບ ທະນາຄານທຸລະກິດ ຂອງລັດ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ກຸ່ມຝາກປະຫຍັດ ແລະ ປ່ອຍກູ້ຂັ້ນບ້ານ.
- ຄາດໝາຍຜົນໄດ້ຮອບ ຂອງ ກິດຈະກຳເຫຼົ່ານັ້ນ ແມ່ນນຳສະເໜີໄວ້ ໃນ ຕາຕະລາງ 3.4.

**ຕາຕະລາງ 3.4: ຫົວຂໍ້ 4: ວຽກງານພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ຄວາມຕໍ່ເນື່ອງ ຂອງ ແຜນງານ ທລຍ**

| ຄູ່ຮ່ວມຈັດຕັ້ງປະຕິບັດວຽກງານ ພັນທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກ ຂອງ ທລຍ | ຄາດໝາຍຜົນໄດ້ຮັບ ທີ່ຕ້ອງເຮັດບັນລຸ ໃນເຂດເປົ້າໝາຍ ທີ່ໄດ້ຮັບ ການສະ ໜັບສະໜູນຊ່ວຍເຫຼືອ ຈາກ ທລຍ |
|---|---|
| • DRDPR, DAEC, NAFRI, DOF, DOLF, DOI<br>• ທະນາຄານທຸລະກິດ ຂອງ ລັດ | • ບັນດາກິດຈະກຳ ຂອງ ທລຍ ໃນບ້ານເປົ້າໝາຍ ຍັງຈະສືບຕໍ່ຈັດຕັ້ງປະຕິບັດ.<br>• ບ້ານບອບບາງ ແລະ ບ້ານພູດອຍຫ່າງໄກສອກຫຼີກ ສາມາດສະແດງໃຫ້ເຫັນຄວາມເປັນເອກະລາດເປັນເຈົ້າຕົນເອງ ຢູ່ໃນລະດັບສູງ.<br>• ຄວາມທຸກຍາກໃນເຂດພູດອຍ ສືບຕໍ່ ຫຼຸດລົງ.<br>• ເພີ່ມຜະລິດຕະພາບ ຂອງ ການລ້ຽງ ແລະ ການປູກແນວພັນທ້ອງຖິ່ນ.<br>• ມີຈຳນວນກອງທຶນບ້ານທີ່ມີການຝາກປະຫຍັດ ແລະ ສະໜອງເງິນກູ້ ໃຫ້ປະຊາຊົນໃນບ້ານ ເຮັດວຽກກັບ ທະນາຄານທຸລະກິດ ຂອງ ລັດ ເພີ່ມຫຼາຍຂຶ້ນ.<br>• ມີຈຳນວນ ຜູ້ຜະລິດກະສິກຳຂະໜາດນ້ອຍໃນເຂດເນີນສູງ ເພີ່ມຫຼາຍຂຶ້ນ ທີ່ພາກັນໝູນໃຊ້ ເຕັກນິກ CSA ເພື່ອປັບປຸງຄວາມທົນທານ ຕໍ່ ການປ່ຽນແປງດິນຟ້າອາກາດ ທີ່ສົ່ງຜົນກະທົບ ຕໍ່ພູມມີທັດເຂດເນີນສູງ.<br>• ກໍ່ສ້າງໂຄງລ່າງພື້ນຖານ ຊຶ່ງທົນທານຕໍ່ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ຢູ່ເຂດພູດອຍຊົນນະບົດ. |

### 3.1.5 **ຄວາມສອດຄ່ອງ ກັບ ຈຸດປະສົງລະດັບສູງ**

35. ແຜນລະດົມທຶນ RLRPP ສຳລັບ ທລຍ ເຫັນວ່າ: ສອດຄ່ອງກັບ ວິທີການພັດທະນາສີຂຽວ, ສ້າງຄວາມທົນທານ ແລະ ກວມ ລວມທົ່ວເຖິງ ຂອງ ທະນາຄານໂລກ ຕະຫຼອດເຖິງ ຂອບດຳເນີນງານຕອບໂຕ້ວິກິດ ຂອງ ສາກົນ ຊຶ່ງໃຫ້ການຊ່ວຍເຫຼືອ ປະເທດຕ່າງໆ ໃນການແກ້ໄຂຜົນກະທົບຈາກວິກິດຫຼາຍມິຕິ ທີ່ຍັງສືບຕໍ່ນັບແຕ່ປີ 2020. ທລຍ ຊ່ວຍສະໜັບສະໜູນ ບັນດາໂຄງການ ທີ່ມີເປົ້າໝາຍຊ່ວຍເຫຼືອຊຸມຊົນບອບບາງທີ່ສຸດໃນເຂດຊົນນະບົດ ເພື່ອປັບປຸງຄວາມສາມາດຂອງເຂົາເຈົ້າໃນການຮັບມືກັບ ການກະທົບຈາກການປ່ຽນແປງດິນຟ້າອາກາດ ໃນ ຂະນະສົ່ງເສີມການພັດທະນາເສດຖະກິດ-ສັງຄົມແບບຍືນຍົງ ໃນໄລຍະຍາວ. ແຜນການດັ່ງກ່າວ ຂອງ ທລຍ ຍັງສອດ ຄ່ອງກັບ ແຜນດຳເນີນງານແກ້ໄຂການປ່ຽນແປງດິນຟ້າອາກາດ (CCAP) ສຳລັບໄລຍະ 2021–25 ແລະ ແຜນ ດຳເນີນງານການປັບຕົວ ແລະ ສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ຂອງ ທະນາຄານ ໂລກ. ແຜນ ການຊ່ວຍເຫຼືອ ຂອງ ທລຍ ຈະປະກອບສ່ວນໃສ່ການຈັດຕັ້ງປະຕິບັດ CCAP ຜ່ານການສຸມໃສ່ ສ້າງຄວາມເຂັ້ມແຂງໃຫ້ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຂອງ ຜູ້ໄດ້ຮັບຜົນະໂຫຍດຈາກ ໂຄງການ, ແລະ ການລົງທຶນ ທີ່ເຊື່ອມໂຍງໂອກາດ ແລະ ຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ, ແລະ ໂຄງການທີ່ຖືກອອກແບບ ແລະ ຈັດຕັ້ງປະຕິບັດ ເພື່ອສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໃຫ້ ສັງຄົມ.

### 3.2 **ເຂດເປົ້າໝາຍ ແລະ ຜູ້ໄດ້ຮັບຜົນປະໂຫຍດ**

36. ແຜນລະດົມທຶນ RLRPP ສຳລັບ ທລຍ ຍັງຈະສືບຕໍ່ ສະໜັບສະໜູນ ບັນດາໂຄງການ ທີ່ຈັດຕັ້ງປະຕິບັດໂດຍ ກົມກອງພາຍໃຕ້ ກສ ແລະ ອົງການກ່ຽວຂ້ອງຂອງລັດ ຊຶ່ງມີເປົ້າໝາຍຊ່ວຍບ້ານບອບບາງສຸດ ພາຍໃນປະເທດ ເວົ້າສະເພາະ ບ້ານ ແລະ ເຂດຈຸດສຸມການພັດທະນາ ຂອງ ລັດຖະບານ ທີ່ມີອັດຕາຄວາມທຸກຍາກສູງ, ຂາດ ໂພຊະນາການ, ມີການເຊື່ອມໂຍງເຊື່ອມຈອດຈຳກັດ ແລະ ສ່ຽງຖືກກະທົບຈາກໄພອັນຕະລາຍຈາກບັນຫາການ ປ່ຽນແປງດິນຟ້າອາກາດ. ຄືດັ່ງບັນດາໂຄງການໃນໄລຍະຜ່ານມາ ຂອງ ທລຍ, ຈະສືບຕໍ່ໃຫ້ການຊ່ວຍເຫຼືອກິດ ຈະກຳຕ່າງໆ ພາຍໃຕ້ວິທີການໜຶ່ງດຽວທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ ໃຫ້ແກ່ ສີ່ແຂວງພາກເໜືອ ແລະ ສາມແຂວງພາກໃຕ້ ຄື: ຫົວພັນ, ອຸດົມໄຊ, ຜົ້ງສາລີ ແລະ ຊຽງຂວາງ ໃນພາກເໜືອ, ສາລະວັນ, ສະຫວັນ ນະເຂດ ແລະ ເຊກອງ ໃນພາກໃຕ້. ເຂດອື່ນໆ ທີ່ໄດ້ຮັບຜົນກະທົບ ຈາກ ບັນຫາການຂາດການຄ້ຳປະກັນ ສະບຽງອາຫານ ຍ້ອນຜົນກະທົບ ແລະ ຄວາມກົດດັນ ຂອງການປ່ຽນແປງດິນຟ້າອາກາດ ກໍຈະຖືກພິຈາລະນາ ໃຫ້ການຊ່ວຍເຫຼືອ. ຄ້າຍຄືກັນກັບບັນດາໂຄງການ ທລຍ ໃນໄລຍະຜ່ານມາ, ຄາດວ່າ: ຜູ້ໄດ້ຮັບຜົນປະໂຫຍດ ຫຼັກຈາກການຊ່ວຍເຫຼືອ ແມ່ນປາຊາຊົນເຜົ່າອື່ນໆ ທີ່ບໍ່ແມ່ນເຜົ່າໄຕລາວ ຊຶ່ງກວມເອົາ 75 ສ່ວນຮ້ອຍຂອງຈຳ ນວນຄາດຄະເນຜູ້ໄດ້ຮັບຜົນປະໂຫຍດ ພາຍໃນບັນດາເມືອງເປົ້າໝາຍ.

37. ທລຍ ຈະຊ່ວຍສະໜັບສະໜູນ ການສ້າງຄວາມສາມາດ ໃຫ້ຂະແໜງການກ່ຽວຂ້ອງ ຢູ່ຂັ້ນແຂວງ ແລະ ຂັ້ນ ເມືອງ ເພື່ອປັບປຸງການບໍລິການໃຫ້ຄຳປຶກສາ ຜ່ານການຈັດຕັ້ງປະຕິບັດກິດຈະກຳ ທີ່ປັບປຸງເຂົ້າເຖິງບ້ານເປົ້າ ໝາຍ ແລະ ການລວມເອົາບ້ານນ້ອຍ ແລະ ຊຸມຊົນຊົນເຜົ່າໃນເຂດຫ່າງໄກສອກຫຼີກ ໃຫ້ໄດ້ຮັບຜົນປະໂຫຍດ ຈາກບັນດາກິດຈະກຳຊ່ວຍເຫຼືອ. ແມ່ຍິງ ກໍ່ຈະໄດ້ຮັບຜົນປະໂຫຍດ ຜ່ານມາດຕະການຮັບປະກັນການເຂົ້າເຖິງ ຢ່າງເທົ່າທຽມ ທົ່ວກິດຈະກຳຂອງໂຄງການ ແລະ ເຂົາເຈົ້າ ຍັງເປັນເປົ້າໝາຍຜູ້ໄດ້ຮັບຜົນປະໂຫຍດຕົ້ນຕໍ ຈາກ

ກິດຈະກຳປັບປຸງໂພຊະນາການ ແລະ ກິດຈະກຳຊ່ວຍເຫຼືອ ຂອງ ກຊກ. ທລຍ ຈະຮັບປະກັນວ່າ: ການກຳນົດບ້ານເປົ້າໝາຍ ແມ່ນປະຕິບັດຕາມຂໍ້ມູນຫຼັກຖານຕົວຈິງ ທີ່ລະບຸ ແຂວງ, ເມືອງ ແລະ ບ້ານເປົ້າໝາຍ. ດັດສະນີໝາຍຄວາມທຸກຍາກຫຼາຍມິຕິ ຂອງ ທະນາຄານໂລກ (ທີ່ໄດ້ຈາກການປະເມີນຄວາມທຸກຍາກຫຼ້າສຸດ ຂອງ ທະນາຄານໂລກ) ຈະຖືກນຳໃຊ້ເພື່ອຈັດອັນດັບບ້ານເປົ້າໝາຍ ທີ່ຖືກສະເໜີເຂົ້າຮ່ວມໂຄງການ.

38. ແຜນລະດົມທຶນ RLRPP ສຳລັບ ທລຍ ຍັງຊ່ວຍສະໜັບສະໜູນ ກິດຈະກຳສ້າງຄວາມເຂັ້ມແຂງໃຫ້ກົນໄກປະສານງານ ໃນວຽກງານພັດທະນາຊົນນະບົດ, ຂະແໜງກະສິກຳ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເວົ້າສະເພາະ ກິດຈະກຳ ທີ່ຊ່ວຍການປັບຕົວ ແລະ ການຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ. ໂຄງການບູລິມະສິດລະດັບສູງ ລວມເອົາ ໂຄງການທີ່ປະກອບສ່ວນໂດຍກົງ ໃສ່ ການເພີ່ມການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃຫ້ແກ່ ກຸ່ມຄົນບອບບາງ ແລະ ມີຄວາມສ່ຽງ ເວົ້າສະເພາະ ແມ່ຍິງ , ເດັກນ້ອຍ, ຄົນພິການ ແລະ ຄົນເຖົ້າ. ນອກຈາກນັ້ນ, ໂຄງລ່າງພື້ນຖານຊົນນະບົດທີ່ມີຄວາມທົນທານສູງຂຶ້ນ ຕໍ່ ການປ່ຽນແປງດິນຟ້າອາກາດ ກໍຖືເປັນ ກິດຈະກຳບູລິມະສິດທີ່ຈະໄດ້ຮັບທຶນ ຊຶ່ງລວມເອົາ ໂຄງການນໍ້າປະຊາຊົນຊຸມ ແລະ ສຸຂາພິບານໃນ ເຂດຊົນນະບົດ ຊຶ່ງຈະຖືກອອກແບບມາເພື່ອສະໜັບສະໜູນ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຂະແໜງສາທາ ໃນຂະນະດຽວກັນ ກໍສະໜອງລະບົບສຸຂາພິບານ ແລະ ນໍ້າສະອາດ ໃຫ້ແກ່ ຊຸມຊົນຢູ່ ຊົນນະບົດ.

39. ແຜນລະດົມທຶນ RLRPP ສຳລັບ ທລຍ ຈະໃຫ້ບູລິມະສິດລະດັບສູງ ສຳລັບ ບັນດາໂຄງການ ທີ່ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນບອບບາງ ເພື່ອຕ້ານສະກັດກັ້ນ ແລະ ຕອບສະໜອງແກ້ໄຂ ໄພນໍ້າຖ້ວມ ແລະ ໄພແລ້ງຂັ້ນຮຸນແຮງ. ນີ້ເປັນການຕອບໂຕ້ແກ້ໄຂ ຜົນການປະເມີນ ທີ່ຈັດຕັ້ງປະຕິບັດໂດຍ ອົງການພາຍໃນ ແລະ ສາກົນ:

- ຍຸດທະສາດການປ່ຽນແປງດິນຟ້າອາກາດແຫ່ງຊາດແກ້ໄຂ (NSCC) ຮອດປີ 2030[5] ໄດ້ກຳນົດວ່າ: ການປ່ຽນແປງດິນຟ້າອາກາດທີ່ເກີດຂຶ້ນຢູ່ ສປປ ລາວ ໄດ້ເປັນຜົນນຳໄປສູ່ ການເພີ່ມຂຶ້ນຂອງອຸນນະພູມ ແລະ ການເໜັງຕີງຂຶ້ນລົງຂອງປະລິມານນໍ້າຝົນ, ເກີດພະຍຸ ແລະ ຝົນຕົກໜັກ, ໄພແລ້ງແລະໄພນໍ້າຖ້ວມທີ່ແກ່ຍາວ ແລະ ຮຸນແຮງ. ເຫດການທາງທຳມະຊາດເຫຼົ່ານີ້ ໄດ້ສົ່ງຜົນກະທົບທາງລົບ ຕໍ່ ບັນດາຂະແໜງການຕ່າງໆ ທີ່ ທລຍ ໃຫ້ຄວາມສຳຄັນ ຄື: ຂະແໜງກະສິກຳ, ການຄໍ້າປະກັນສະບຽງອາຫານ, ການນຳໃຊ້ທີ່ດິນ ແລະປ່າໄມ້, ຊັບພະຍາກອນໍ້າ, ແລະ ຂະແໜງສາທາ.
- ເວັບໄຊ໌ຄວາມຮູ້ກ່ຽວກັບການປ່ຽນແປງດິນຟ້າອາກາດ ສຳລັບ ສປປ ລາວ ຊີ້ໃຫ້ເຫັນວ່າ: "ເຫດການໄພນໍ້າຖ້ວມ ແລະ ໄພແລ້ງ ເກີດຖີ່ຂຶ້ນ ຢູ່ ສປປ ລາວ. ບັນຫາຄວາມທຸກຍາກ ແລະ ການຂາດໂພຊະນາການ ຍັງຄົງຢູ່ໃນອັດຕາສູງ ປະກອບກັບປະຊາກອນສ່ວນໃຫຍ່ ໃນ ສປປ ລາວ ເພິ່ງພາອາໄສການຜະລິດກະສິກຳເປັນແຫຼ່ງພື້ນຖານຂອງການຫາລ້ຽງຊີບ, ການປ່ຽນແປງອາກາດ ສົ່ງຜົນກະທົບໃນລະດັບສູງ ຕໍ່ ປະເທດ ແລະ ປະຊາຊົນ. ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ຖືກລະບຸວ່າ ເປັນບັນຫາໃຫຍ່ ຕໍ່ ຊັບພະຍາກອນນໍ້າ ແລະ ປ່າໄມ້, ຂະແໜງກະສິກຳ, ພະລັງງານ ແລະ ຂະແໜງສາທາ." [6]

---

[5] ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. 2023. ຍຸດທະສາດການປ່ຽນແປງດິນຟ້າອາກາດແຫ່ງຊາດ ຮອດປີ 2030. ນະຄອນຫຼວງວຽງຈັນ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

[6] ທະນາຄານໂລກ. 2021. ເວັບໄຊ໌ຄວາມຮູ້ກ່ຽວກັບການປ່ຽນແປງດິນຟ້າອາກາດ. ວໍຊິງຕັນ ດີຊີ: ທະນາຄານໂລກ. https://climateknowledgeportal.worldbank.org/country/lao-pdr

- ການປະເມີນຄວາມບອບບາງ ຂອງ ສປປ ລາວ ໂດຍອົງການສະຫະປະຊາຊາດດ້ານເຄຫາສະຖານ ບອກໃຫ້ຮູ້ວ່າ: ໄພແລ້ງ "ເປັນໄພອັນຕະລາຍຫຼັກ ຕໍ່ ຖິ່ນຖານທີ່ຢູ່ອາໄສ ຂອງ ປະຊາຊົນ (25 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດໃນປະເທດ ຖືກກະທົບຈາກໄພແລ້ງ), ຮອງລົງມາ ແມ່ນຜົນກະທົບຈາກໄພນ້ຳຖ້ວມ (20 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ ໄດ້ຮັບຜົນກະທົບ). ຈຳນວນປະຊາຊົນ ທີ່ໄດ້ຮັບຜົນກະທົບ ຈາກທັງໄພແລ້ງ ແລະ ໄພນ້ຳຖ້ວມ ມີຫຼາຍກວ່າ 2,85 ລ້ານຄົນ ທີ່ດຳລົງຊີວິດກະຈາຍຢູ່ ເກືອບ 4,000 ບ້ານໃນທົ່ວປະເທດ."[7]

### 3.3 ແຫຼ່ງການຊ່ວຍເຫຼືອທາງດ້ານການເງິນ ທີ່ມີຄວາມເປັນໄປໄດ້

40. ທລຍ ເປັນກົນໄກສຳຄັນ ຂອງ ລັດຖະບານ ໃນການແກ້ໄຂຄວາມທຸກຍາກຢູ່ເຂດຊົນນະບົດ. ທລຍ ສາມາດເຂົ້າເຖິງແຫຼ່ງທຶນ ຈາກ ຜູ້ໃຫ້ທຶນຫຼາຍຝ່າຍ ເພື່ອສ້າງແຜນງານຮອບດ້ານ ແລະ ຕອບສະໜອງຕາມຄວາມຕ້ອງການໃໝ່. ດັ່ງທີ່ໄດ້ກ່າວເຖິງກ່ອນໜ້ານີ້, ທລຍ ໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ຈາກຫຼາຍແຫຼ່ງ ຄື: ສະມາຄົມພັດທະນາສາກົນ (IDA) ຂອງ ກຸ່ມທະນາຄານໂລກ ຊຶ່ງໄດ້ສະໜອງແຫຼ່ງທຶນເບື້ອງຕົ້ນ ໃຫ້ແກ່ ທລຍ ໃນ ປີ  2002; ອົງການຮ່ວມມືເພື່ອການພັດທະນາ ຂອງ ສະວິດ (SDC) ຊຶ່ງໄດ້ສະໜອງເງິນຊ່ວຍເຫຼືອລ້າ ໃຫ້ແກ່ ທລຍ; ການຊ່ວຍເຫຼືອ ຈາກ ອົດສະຕຣາລີ ແລະ ກອງທຶນພັດທະນາສັງຄົມ ຂອງ ຍີ່ປຸ່ນ ນັບແຕ່ປີ 2011 ກໍຄື ທຶນສົມທົບ ແລະ ການຊ່ວຍເຫຼືອທາງດ້ານວັດຖຸ ຈາກ ລັດຖະບານ ແຫ່ງ ສປປ ລາວ. ບັນດາອົງການຈັດຕັ້ງເຫຼົ່ານີ້ ຍັງຄົງສືບຕໍ່ເປັນແຫຼ່ງໃຫ້ການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃຫ້ແກ່ ທລຍ ໃນອະນາຄົດ.

41. ແຫຼ່ງທຶນໃໝ່ທີ່ມີທ່າແຮງ ລວມເອົາ ກອງທຶນພັດທະນາບ້ານ ທີ່ມີແຫຼ່ງທຶນຈາກເງິນສົມທົບ ຂອງ ນັກລົງທຶນຕ່າງປະເທດ ທີ່ລົງທຶນຢູ່ ສປປ ລາວ, ມູນລະນິທິສາກົນຂອງເອກະຊົນ, ແລະ ສະຖາບັນການເງິນເພື່ອການພັດທະນາ (DFI) ນອກຈາກການຊ່ວຍເຫຼືອ ທີ່ໄດ້ຮັບຈາກ ສະຖາບັນການເງິນສາກົນ (IFI) ອົງການຊ່ວຍເຫຼືອທາງດ້ານການເງິນແລະວິຊາການໃນລະດັບສອງຝ່າຍ ທີ່ໄດ້ກ່າວເຖິງຂ້າງເທິງນັ້ນ. ທລຍ ຍັງ ສາມາດໄດ້ຮັບແຫຼ່ງທຶນ ຈາກການມີສ່ວນຮ່ວມ ໃນການລົງທຶນຮ່ວມລະຫວ່າງພາກລັດ ກັບ ເອກະຊົນ (PPP) ກັບ ກອງທຶນເພື່ອການພັດທະນາສາກົນ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ. ແຫຼ່ງທຶນໃໝ່ທີ່ມີທ່າແຮງ ອາດຈະລວມເອົາ:
    - <u>ນັກລົງທຶນເອກະຊົນຕ່າງປະເທດ</u> ຊຶ່ງມີພັນທະພາຍໃຕ້ສັນຍາສຳປະທານ ກັບ ລັດຖະບານລາວ ທີ່ຕ້ອງປະກອບທຶນໃຫ້ການພັດທະນາຊຸມຊົນ ໃນເຂດທີ່ມີຜົນກະທົບຈາກໂຄງການລົງທຶນ ຂອງ ເຂົາເຈົ້າ. ນັກລົງທຶນທີ່ມີທ່າແຮງປະຈຸບັນ ລວມມີ:ໂຄງການພະລັງງານລົມ ຢູ່ແຂວງເຊກອງ, ບໍລິສັດຂຸດຄົ້ນບໍ່ຄຳທອງ-ເຊໂປນ ຈຳກັດ ຢູ່ແຂວງສະຫວັນນະເຂດ; ບໍລິສັດຂຸດຄົ້ນບໍ່ແຮ່ພູເບ້ຍ ຢູ່ແຂວງໄຊສົມບູນ; ບໍລິສັດພະລັງງານໄຟຟ້ານ້ຳຕົກເຊປຽນ-ເຊນ້ຳນ້ອຍ ຢູ່ແຂວງອັດຕະປື  ແລະ ຈຳປາສັກ ແລະ ບໍລິສັດພະລັງງານໄຟຟ້ານໍ້າຕົກນ້ຳທາງຽບ 1 ຢູ່ແຂວງບໍລິຄຳໄຊ ແລະ ໄຊສົມບູນ, ແລະ ອື່ນໆ. ແຫຼ່ງທຶນເຫຼົ່ານີ້ ສາມາດນຳໃຊ້ ຜ່ານຮູບການ

[7] ອົງການສະຫະປະຊາຊາດດ້ານເຄຫາສະຖານ (UN-Habitat). 2019. ຜົນໄດ້ຮັບເບື້ອງຕົ້ນ: ການປະເມີນຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ. ນະຄອນຫຼວງວຽງຈັນ: ອົງການສະຫະປະຊາຊາດດ້ານເຄຫາສະຖານ.

ຮ່ວມລົງທຶນລະຫວ່າງ ພາກລັດ ກັບ ເອກະຊົນ ຜ່ານຮັບຮອງຈາກ ລັດຖະບານ ໂດຍທີ່ ທລຍ ສະໜອງ ຄວາມຊຳນານດ້ານວິຊາການ ເພື່ອເຮັດວຽກກັບ ພະນັກງານ ຂອງ ນັກລົງທຶນ ແລະ ຊຸມຊົນທ້ອງຖິ່ນ ເພື່ອ ຈັດຕັ້ງປະຕິບັດ ກິດຈະກຳພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

- <u>ມູນລະນິທິສາກົນ ຂອງ ເອກະຊົນ</u> ທີ່ປະກອບສ່ວນທຶນ ເຂົ້າໃນ ວຽກງານແກ້ໄຂຄວາມທຸກຍາກ ໃນທົ່ວ ໂລກ. ທລຍ ສາມາດ ເຮັດວຽກ ກັບ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ ຊຶ່ງມີປະສົບການ ແລະໄດ້ຮັບ ອະນຸຍາດເຂົ້າມາເຄື່ອນໄຫວ ຢູ່ ສປ ລາວ ເພື່ອຈັດຕັ້ງປະຕິບັດກິດບັນດາຈະກຳພັດທະນາຊົນນະບົດແລະ ແກ້ໄຂຄວາມທຸກຍາກ. ມູນລະນິທິເອກະຊົນເຫຼົ່ານັ້ນ ລວມມີ:
  - ມູນລະນິທິມາດສະເຕີຄາດ (Mastercard) ຊຶ່ງເປັນຄູ່ຮ່ວມງານ ກັບ ບັນດາອົງການຈັດຕັ້ງຕ່າງໆ ຢູ່ ອາຊີ ແລະ ອາຟຣິກາ ເພື່ອສະໜັບສະໜູນການຂະຫຍາຍຕົວຂອງເສດຖະກິດ ແລະ ການເປັນຜູ້ປະ ກອບການຂອງແມ່ຍິງ.
  - ມູນລະນິທິ ວິນທີວິນທຣອບ ຣອກເກເຟວເລີ (Winthrop Rockefeller) ທີ່ເປັນຄູ່ຮ່ວມງານ ຂອງ ອົງການ USAID ແລະ ຜູ້ໃຫ້ທຶນອື່ນໆ ທີ່ສະໜອງທຶນຊ່ວຍເຫຼືອການພັດທະນາຂະແໜງກະສິກຳ ຢູ່ ອາຊີຕາເວັນອອກສຽງໃຕ້.
  - ມູນລະນິທິ ບິວ ແລະ ເມລິນດາ ເກັດສ໌ (Bill and Melinda Gates) ຊຶ່ງມີຈຸດສຸມເນັ້ນໃສ່ການແກ້ ໄຂຄວາມທຸກຍາກ, ປັບປຸງຂະແໜງສາທາ ແລະ ສຶກສາ.
  - ເຄືອຄ່າຍ ອາກາ ຄານ ເພື່ອການພັດທະນາ (AKDN) ຊຶ່ງສະໜັບສະໜູນ ບັນດາແຜນງານ ປັບປຸງຄຸນ ນະພາບຊີວິດ ຂອງ ຜູ້ທຸກຍາກ ຢູ່ ອາຊີ ແລະ ອາຟຣິກາ ໂດຍມີເປົ້າໝາຍແນໃສ່ ຊ່ວຍ ຊຸມຊົນ ແລະ ສ່ວນບຸກຄົນ ໃຫ້ສາມາດເປັນເອກະລາດເປັນເຈົ້າຕົນເອງ.
  - ກອງທຶນ ອາບູ ດາບີ ເພື່ອການພັດທະນາ (ADFD) ທີ່ສະໜອງເງິນກູ້ດອກເບ້ຍຕໍ່າ ແລະ ບໍລິຫານເງິນ ຊ່ວຍເຫຼືອລ້າ ຂອງ ລັດຖະບານ ສະຫະລັດອາຣັບ ເອັມມີເຣດສ໌ ສຳລັບ ໂຄງການພັດທະນາໂຄງລ່າງ ພື້ນຖານແບບຍືນຍົງ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃນບັນດາປະເທດກຳລັງ ພັດທະນາ.
  - ມູນລະນິທິ ແວວຄຳ (Wellcome) ທີ່ສະໜັບສະໜູນໂຄງການແກ້ໄຂບັນຫາຮີບດ່ວນທາງດ້ານສາ ທາ, ໂພຊະນາການ ແລະ ການປ່ຽນແປງດິນຟ້າອາກາດ.
  - ມູນລະນິທິ ຟອດ (Ford) ທີ່ສະໜອງເງິນຊ່ວຍເຫຼືອລ້າ ໃຫ້ແກ່ ການພັດທະນາຊັບພະຍາກອນມະ ນຸດ ຊຶ່ງລວມທັງ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປັບຕົວເຂົ້າກັບການປ່ຽນແປງ ດິນຟ້າອາກາດ.
  - ມູນລະນິທິ ອິເກຍ (IKEA) ທີ່ສະໜອງເງິນຊ່ວຍເຫຼືອລ້າ ໃຫ້ການພັດທະນາການຫາລ້ຽງຊີບໃນຂະ ແ ໜງກະສິກຳ, ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການຈ້າງງານ, ການເປັນຜູ້ປະກອບ ການ ແລະ ອື່ນໆ.
- <u>ສະຖາບັນການເງິນເພື່ອການພັດທະນາ </u>(DFI) ທີ່ສະໜອງເງິນຊ່ວຍເຫຼືອລ້າ ແລະ ເງິນກູ້ ເພື່ອການພັດທະ ນາຊົນນະບົດ. ຫວ່າງບໍ່ດົນມານີ້ DFI ທີ່ໄດ້ສະໜັບສະໜູນຊ່ວຍເຫຼືອ ກິດຈະກຳການພັດທະນາ ຢູ່ ສປປ ລາວ ລວມມີຄື:

- FMO ຂອງປະເທດໂຮນລັງ ຊຶ່ງເປັນທະນາຄານເພື່ອການພັດທະນາ ໂດຍມີໂຄງຮ່າງການຈັດຕັ້ງ ຂອງ ສະຖາບັນການເງິນສາກົນເອກະຊົນສອງຝ່າຍ. FMO ບໍລິຫານທຶນ ໃຫ້ ກະຊວງການຕ່າງປະເທດ ແລະ ເສດຖະກິດ ຂອງ ລັດຖະບານໂຮນລັງ ເພື່ອເຮັດໃຫ້ ການລົງທຶນຂອງພາກເອກະຊົນ ສ້າງຜົນ ປະໂຫຍດດ້ານການພັດທະນາໃຫ້ໄດ້ສູງສຸດ.
- DEG ເປັນສະຖາບັນການເງິນໃນເຄືອ ຂອງ ກຸ່ມບໍລິສັດ KfW (ບໍລິສັດລົງທຶນ ຂອງ ເຢຍລະມັນ)
- ໂປຣປາໂຄ (Proparco) ຂອງ ຝຣັ່ງ ຊຶ່ງຖືຮຸ້ນໂດຍ ອົງການພັດທະນາປະເທດຝຣັ່ງ (AFD) ແລະ ຜູ້ ຖືຮຸ້ນພາກເອກະຊົນ ຈາກ ບັນດາປະເທດພັດທະນາແລ້ວ, ສະຖາບັນການເງິນດັ່ງກ່າວ ສົ່ງເສີມການ ລົງທຶນຂອງພາກເອກະຊົນ ໃນບັນດາປະເທດກຳລັງພັດທະນາ ເພື່ອເຮັດບັນລຸ ປພຍ. ໂປຣປາໂຄ ໃຫ້ ການຊ່ວຍເຫຼືອທາງດ້ານການເງິນ ໃຫ້ແກ່ບັນດາກິດຈະກຳທີ່ມີຄວາມເປັນໄປໄດ້ທາງເສດຖະກິດ, ມີ ຜົນກຳໄລທາງການເງິນ, ຍືນຍົງທາງດ້ານສິ່ງແວດລ້ອມ ແລະ ມີຄວາມສະເໝີພາບທາງສັງຄົມ.

• ສະຖາບັນການເງິນສາກົນ (IFI) ຊຶ່ງລວມເອົາ ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ກໍຄື ກອງ ທຶນສະເພາະດ້ານ ເຊັ່ນ: ກອງທຶນສີຂຽວດ້ານການປ່ຽນແປງສະພາບດິນຟ້າອາກາດສາກົນ (GCF) ທີ່ເປັນ ກອງທຶນຊ່ວຍວຽກງານປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ກອງທຶນສິ່ງແວດລ້ອມໂລກ (GEF), ແລະ ກອງທຶນລົງທຶນແກ້ໄຂການປ່ຽນແປງດິນຟ້າອາກາດ. ພາກສ່ວນ ທີ່ກຳລັງສະໜອງທຶນໃຫ້ບັນດາໂຄງ ການຕ່າງໆ ຢູ່ ສປປ ລາວ ໃນປະຈຸບັນ ລວມມີຄື:
  - ກອງທຶນ GEF ໃຫ້ທຶນຊ່ວຍເຫຼືອ ບັນດາໂຄງການ ກ່ຽວກັບ ການອະນຸລັກຊີວະນາໆພັນ, ການແກ້ໄຂ ການປ່ຽນແປງດິນຟ້າອາກາດ ແລະ ການເຊື່ອມໂຊມຂອງດິນ.
  - ກອງທຶນ GCF ກຳລັງໃຫ້ທຶນຊ່ວຍເຫຼືອເກົ້າໂຄງການ ຢູ່ ສປປ ລາວ ທີ່ພົວພັນກັບ ການເປັນຜູ້ປະ ກອບການທາງດ້ານເຕັກໂນໂລຊີ, ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນໃນການປັບຕົວເຂົ້າກັບການ ປ່ຽນແປງດິນຟ້າອາກາດ, ການຜະລິດເປັນສິນຄ້າແບບຍືນຍົງ, ການເພີ່ມຜະລິດຕະພາບຈາກທີ່ດິນກະ ສິກຳ ເພື່ອຫຼຸດຜ່ອນຄວາມກົດດັນບຸກລຸກເນື້ອທີ່ປ່າໄມ້ເພື່ອເຮັດການຜະລິດກະສິກຳ.
  - ທະນາຄານພັດທະນາອາຊີ (ADB) ຖືເປັນຜູ້ສະໜອງທຶນຫຼາຍຝ່າຍເຈົ້າໃຫຍ່ ໃຫ້ແກ່ ສປປ ລາວ ນັບ ແຕ່ຊຸມປີ ເຈັດສິບ. ກປສ (ຫຼື EPF) ຂອງ ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ໄດ້ ຮັບເງິນກູ້ US$ 5,7 ລ້ານຈາກ ADB ເພື່ອໃຊ້ເປັນການປະກອບທຶນ ໃຫ້ ກປສ ຝາກເອົາດອກເບ້ຍ ເພື່ອມາໃຊ້ຈ່າຍຄ່າລິຫານ ຂອງ ກປສ. ທະນາໂລກ ຍັງສະໜອງທຶນ US$7 ລ້ານ ໃຫ້ໂຄງການເງິນ ຊ່ວຍເຫຼືອລ້າ ທີ່ຈັດຕັ້ງປະຕິບັດໂດຍ ກປສ. ໂຄງຮ່າງປະຈຸບັນ ກປສ ອະນຸຍາດໃຫ້ ກປສ ເຮັດໜ້າທີ່ ເປັນອົງການຄຸ້ມຄອງໂຄງການ, ຮັບ ແລະ ຄຸ້ມຄອງບໍລິຫານ ຊັບພະຍາກອນທາງດ້ານການເງິນ (ໃນ ຖານະເປັນທຶນປະກອບ ແລະ ທຶນສະສົມ) ເພື່ອສະໜອງທຶນ ໃຫ້ແກ່ວຽກງານປົກປັກຮັກສາສິ່ງແວດ ລ້ອມ ຢູ່ ສປປ ລາວ.

• ອົງການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການສອງຝ່າຍ ທີ່ສາມາດຕິດຕໍ່ຫາເພື່ອຂໍການຊ່ວຍເຫຼືອທາງ ດ້ານການເງິນໃນອະນາຄົດ ໃຫ້ແກ່ ທລຍ ລວມມີ: ສະຫະພາບເອີຣົບ, ອົງການ GIZ, SDC, LuxDev, DFAT, JICA, ແລະ USAID.

### 3.3.1 ການເຜີຍແຜ່ໂຄງການ ແລະ ການເຂົ້າເຖິງແຫຼ່ງທຶນ ສຳລັບ ທລຍ

**42.** ຫຼັງຈາກໄດ້ຮັບການເຫັນດີຈາກ ການນຳ ຂອງ ກສ ແລະ ການຮັບຮອງ ຈາກ ສະພາບໍລິຫານ ຂອງ ທລຍ, ທລຍ ຈະສ້າງແຜນເພື່ອເຜີຍແຜ່ ແຜນລະດົມທຶນ **RLRPP** ສຳລັບ ທລຍ ໃຫ້ ບັນດາອົງການກ່ຽວຂ້ອງ ຂອງ ພາກລັດ ແລະ ເອກະຊົນ ທີ່ເຮັດວຽກ ກ່ຽວກັບ ການພັດທະນາຊົນນະບົດ, ການຫຼຸດຄວາມທຸກຍາກ, ການຍົກຍ້າຍຖິ່ນຖານ ແບບບໍ່ສະໝັກໃຈ, ແລະ ການປັບປຸງຊີວິດການເປັນຢູ່ ໄດ້ຮັບຮູ້. ກຸ່ມເປົ້າໝາຍຫຼັກ ລວມມີຄື: ອົງການກ່ຽວຂ້ອງ ຂອງ ລັດ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງມະຫາຊົນ, ຄູ່ຮ່ວມພັດທະນາ, ແລະ ນັກລົງທຶນພາກເອກະຊົນ ທີ່ມີພັນທະຕ້ອງຈັດຕັ້ງປະຕິບັດແຜນງານພັດທະນາຊຸມຊົນ ຕາມທີ່ກຳນົດໄວ້ໃນສັນຍາທາງກົດໝາຍກັບ ລັດ ຖະບານ, ສະຖາບັນການເງິນສາກົນຫຼາຍຝ່າຍ ແລະ ຜູ້ປ່ອຍກູ້ເອກະຊົນ. ການເຜີຍແຜ່ໂຄງການດັ່ງກ່າວອາດຈະຈັດໃນຮູບແບບຕ່າງໆເຊັ່ນ: ກອງປະຊຸມເຜີຍແຜ່, ກອງປະຊຸມວິຊາການ ແລະ ກອງປະຊຸມສອງຝ່າຍກັບອົງ ການທີ່ມີຄວາມສົນໃຈ.

## ພາກທີ 4: ໂຄງຮ່າງການຈັດຕັ້ງປະສານງານ

### 4.1 **ຄວາມເປັນມາດ້ານການຈັດຕັ້ງ**

43. ທລຍ ໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ 2002 ໂດຍດຳລັດ ນາຍົກລັດຖະມົນຕີ ເລກທີ 073/ນຍ ໂດຍເຄື່ອນໄຫວເປັນອົງການທີ່ມີຄວາມເປັນເອກະລາດທາງດ້ານການເງິນ. ຕໍ່ມາ ໃນເດືອນ ກັນຍາ 2006, ທລຍ ໄດ້ຖືກໂອນໃຫ້ຂຶ້ນກັບຫ້ອງວ່າການລັດຖະບານ (ດຳລັດ ເລກທີ 222/ສນຍ) ພາຍໃຕ້ການຊີ້ນຳ ຂອງ ຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ຂັ້ນສູນກາງ. ຫຼັງຈາກນັ້ນ, ດຳລັດ ເລກທີ 10/ສນຍ ລົງວັນທີ 10 ມັງກອນ 2012 ໄດ້ອະທິບາຍໂຄງຮ່າງການຈັດຕັ້ງ ຂອງ ທລຍ ໃຫ້ມີຄວາມກະຈ່າງແຈ້ງຂຶ້ນຕື່ມ. ໃນ ປີ 2017, ທລຍ ໄດ້ຖືກໂອນ ຈາກ ສຳນັກງານນາຍົກລັດຖະມົນຕີ (ສນຍ) ໃຫ້ ມາຂຶ້ນກັບ ກະຊວງກະສິກຳແລະປ່າໄມ້ (ກປ) ຊຶ່ງ ທລຍ ຍັງສືບຕໍ່ເຄື່ອນໄຫວເປັນ ອົງການທີ່ມີຄວາມເປັນເອກະລາດທາງດ້ານການເງິນ. ສະພາບໍລິຫານ ຂອງ ທລຍ ໄດ້ຮັບການສ້າງຕັ້ງຂຶ້ນທີ່ ກສ ເພື່ອສະໜອງທິດນຳທາງດ້ານນະໂຍບາຍ ໂດຍປະກອບມີລັດຖະມົນຕີ, ຮອງລັດຖະມົນຕີ ຫຼື ຜູ້ຕາງໜ້າຈາກກະຊວງການເງິນ, ກະສິກຳແລະສິ່ງແວດລ້ອມ, ການຕ່າງປະເທດ, ໂຍທາທິການແລະຂົນສົ່ງ, ສຶກສາທິການແລະກິລາ, ສາທາ, ແຮງງານແລະສະຫວັດດີການສັງຄົມ, ອຸດສາຫະກຳແລະການຄ້າ, ຮອງປະທານຄະນະກຳມະການປົກຄອງແຂວງ ກໍຄື ຜູ້ຕາງໜ້າ ຈາກ ທະນາຄານແຫ່ງ ສປປ ລາວ, ແນວລາວສ້າງຊາດ, ສະຫະພັນແມ່ຍິງ, ແລະ ອົງການຈັດຕັ້ງຊາວໜຸ່ມ. ຜູ້ອຳນວຍການ ຂອງ ທລຍ ແມ່ນໄດ້ຮັບການແຕ່ງຕັ້ງ ຈາກ ສະພາບໍລິຫານ ໂດຍມີວາລະເຮັດວຽກເປັນເວລາສາມປີ ຮັບຜິດຊອບການຄຸ້ມຄອງບໍລິຫານ ທລຍ ແລະ ລາຍງານຕໍ່ ສະພາບໍລິຫານ. ການເງິນ ຂອງ ທລຍ ແມ່ນເປັນເອກະລາດ ຈາກ ງົບປະມານ ຂອງ ກສ, ແລະ ມີຂັ້ນຕອນການເບີກຈ່າຍເງິນ ທີ່ສອດຄ່ອງ ກັບ ຂັ້ນຕອນການຄຸ້ມຄອງການເງິນ ຂອງທະນາຄານໂລກ.

44. ເດືອນກັນຍາ 2024, ນາຍົກລັດຖະມົນຕີ ອອກຂໍ້ຕົກລົງ *(ວ່າດ້ວຍ ການແຕ່ງຕັ້ງ ຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງ ເລກທີ 121/ນຍ, 02 ກັນຍາ 2024*) ເພື່ອສ້າງຕັ້ງຄະນະກຳມະການປະສານງານລະຫວ່າງກະຊວງ ປະສານງານຊີ້ນຳການຈັດຕັ້ງປະຕິບັດ ບັນດາກິດຈະກຳ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ຈັດຕັ້ງປະຕິບັດໂດຍບັນດາອົງການກ່ຽວຂ້ອງ. ຄະນະຊີ້ນຳດັ່ງກ່າວ ແມ່ນຢູ່ພາຍໃຕ້ການເປັນປະທານ ຂອງ ພະນະທ່ານຮອງນາຍົກລັດຖະມົນຕີ ແລະ ປະກອບດ້ວຍບັນດາຜູ້ຕາງໜ້າຈາກ ສຳນັກງານນາຍົກລັດຖະມົນຕີ, ກະຊວງກະສິກຳແລະສິ່ງແວດລ້ອມ, ກະຊວງພາຍໃນ, ກະຊວງປ້ອງກັນປະເທດ, ກະຊວງການເງິນ (ຊຶ່ງລວມເອົາທັງຂະແໜງແຜນການແລະການລົງທຶນ), ກະຊວງໂຍທາທິການແລະຂົນສົ່ງ, ກະຊວງເຕັກໂນໂລຊີແລະການສື່ສານ, ກະຊວງອຸດສາຫະກຳແລະການຄ້າ (ຊຶ່ງລວມເອົາທັງ ຂະແໜງພະລັງງານແລະບໍ່ແຮ່), ກະຊວງສຶກສາທິການແລະກິລາ, ກະຊວງສາທາລະນະສຸກ, ກະຊວງແຮງງານແລະສະຫວັດດີການສັງຄົມ, ກະຊວງຖະແຫຼງຂ່າວ, ວັດຖະທະນະທຳ ແລະ ການທ່ອງທ່ຽວ ກໍຄື ຜູ້ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ, ທະນະຄານທຸລະກິດ ຂອງ ລັດ, ສະພາການຄ້າແລະອຸດສາຫະກຳແຫ່ງຊາດລາວ. ໜ້າທີ່ຮັບຜິດຊອບ ຂອງ ຄະນະຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ລວມມີຄື:
    - ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ ສຳນັກງານນາຍົກລັດຖະມົນຕີ ແລະ ອົງການກ່ຽວຂອງຂອງພາກລັດ ກ່ຽວກັບ ການປະສານງານ ແລະ ການສົ່ງເສີມວຽກງານພັດທະນາຊົນນະບົດ.
    - ທົບທວນ ແລະ ຄົ້ນຄວ້າ ທິດທາງທີ່ເໝາະສົມ ເພື່ອເປັນບ່ອນອີງໃຫ້ນະໂຍບາຍຂອງພັກແລະລັດ ກ່ຽວກັບວຽກງານພັດທະນາຊົນນະບົດ.
    - ປະສານງານບັນດາກິດຈະກຳພັດທະນາຊົນນະບົດ ລະຫວ່າງ ອົງການກ່ຽວຂ້ອງ ກັບ ອຳນາດການປົກຄອງທ້ອງຖິ່ນ.
    - ເຮັດໜ້າທີ່ເປັນຈຸດປະສານງານ, ອຳນວຍຄວາມສະດວກ ແລະ ຊີ້ນຳວຽກງານພັດທະນາຊົນນະບົດ.
    - ຕິດຕາມແລະສົ່ງເສີມ ການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອລ້າ ແລະ ເງິນກູ້ ທີ່ສະໜອງໃຫ້ຂະແໜງພັດທະນາຊົນນະບົດ.
    - ສ້າງ, ປະສານງານ ແລະ ສົ່ງເສີມ ບັນດານະໂນບາຍ ທີ່ພົວພັນກັບ ການລົງທຶນພາຍໃຕ້ ແລະ ການນຳໃຊ້ແຫຼ່ງທຶນຈາກຕ່າງປະເທດ ເພື່ອຈັດຕັ້ງປະຕິບັດບັນດາໂຄງການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ.
    - ຈັດຕັ້ງປະຕິບັດການຕິດຕາມ ແລະ ປະເມີນຜົນ ເປັນແຕ່ລະໄລຍະ ຕໍ່ ວຽກງານພັດທະນາຊົນນະບົດ ແບະແກ້ໄຂຄວາມທຸກຍາກ.
    - ສະຫຼຸບ, ສັງລວມ ແລະ ລາຍງານ ຜົນການເຄື່ອນໄຫວວຽກງານພັດທະນາຊົນນະບົດ.
    - ຈັດປະຊຸມ ຕາມຄວາມເໝາະສົມ ເພື່ອປຶກສາຫາລື ຮ່ວມກັບ ບັນດາອົງການຈັດຕັ້ງປະຕິບັດ ແລະ ມອບໝາຍໜ້າວຽກ ໃຫ້ແກ່ບັນດາອົງການປະຕິບັດກິດຈະກຳວຽກງານພັດທະນາຊົນນະບົດ.
    - ຈັດກອງປະຊຸມປຶກສາຫາລື ກັບ ອຳນາດການປົກຄອງທ້ອງຖິ່ນ ເພື່ອແລກປ່ຽນ ກ່ຽວກັບ ການຈັດຕັ້ງປະຕິບັດບັນດາກິດຈະກຳວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ.
    - ແຕ່ງຕັ້ງ ພະນັກງານຮັບຜິດຊອບ ການສັງລວມເກັບກຳຂໍ້ມູນວຽກງານພັດທະນາຊົນນະບົດ ໃນຂົງເຂດຮັບຜິດຊອບຂອງເຂົາເຈົ້າ.
    - ເຂົ້າຮ່ວມກອງປະຊຸມ, ສຳມະນາ, ການຝຶກອົບຮົມ ແລະ ງານຕ່າງໆ ຕາມການເຊື້ອເຊີນ.
    - ພິຈາລະນາມອບໃບຍ້ອງຍໍ ໃຫ້ແກ່ຜູ້ທີ່ມີຜົນງານ.

- ຈັດຕັ້ງປະຕິບັດໜ້າວຽກຕ່າງໆ ຕາມການມອບໝາຍ ຂອງ ສຳນັກງານນາຍົກລັດຖະມົນຕີ.

45. ຂໍ້ຕົກລົງສະບັບດັ່ງກ່າວ ຍັງໄດ້ແຕ່ງຕັ້ງ ກອງເລຂາ ຂອງ ຄະນະກຳມະການຊີ້ນຳວຽກງານພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກຂັ້ນສູນກາງ ໂດຍມີ ທ່ານຮອງລັດຖະມົນຕີ ກສ ເຮັດໜ້າທີ່ເປັນປະທານ ແລະ ປະກອບດ້ວຍ ຫົວໜ້າກົມ, ຮອງຫົວໜ້າຫ້ອງການ ແລະ ຮອງຫົວໜ້າກົມ ຈາກ ຄະນະກຳມະການສູນກາງພັກ (ກະຊວງພາຍໃນ ຖືກປັບໂຄງຮ່າງການຈັດຕັ້ງໃຫ້ຂຶ້ນກັບ ຄະນະກຳມະການສູນກາງພັກ), ສນຍ, ກົມກອງພາຍໃຕ້ ກສ ຄື: ກົມພັດທະນາຊົນນະບົດແລະຫຼຸດຜ່ອນຄວາມທຸກຍາກ (DRDPR) ແລະ ກົມແຜນການແລະການຮ່ວມມື (DOPC). ຫົວໜ້າກົມ DRDPR ເຮັດໜ້າທີ່ ເປັນຮອງປະທານ ແລະ ເປັນຜູ້ປະຈຳການ ຂອງ ກອງເລຂາດັ່ງກ່າວ. ຂໍ້ຕົກລົງສະບັບດັ່ງກ່າວ ຍັງກຳນົດໂຄງຮ່າງການຈັດຕັ້ງວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ທີ່ຄຸ້ມຄອງບັນດາແຜນງານພັດທະນາຊົນນະບົດ ໂດຍຄະນະຊີ້ນຳຢູ່ຂັ້ນສູນກາງ ທີ່ຄ້າຍຄືກັນກັບໂຄງຮ່າງຊີ້ນຳ ທີ່ມີກ່ອນປີ 2017 ໃນເວລາທີ່ ທລຍ ເຄື່ອນໄຫວຂຶ້ນກັບ ສຳນັກງານນາຍົກລັດຖະມົນຕີ.

## 4.2 **ໂຄງຮ່າງການຈັດຕັ້ງປະສານງານ ຂອງ ແຜນລະດົມທຶນ** RLRPP **ສຳລັບ ທລຍ**

46. ພາຍໃຕ້ຂໍ້ຕົກລົງສະບັບຫຼ້າສຸດ ຂອງ ພະນະທ່ານນາຍົກລັດຖະມົນຕີ (*ຂໍ້ຕົກລົງສະບັບເລກທີ 121/ນຍ, 02 ກັນຍາ 2024)*, ແຜນລະດົມທຶນ RLRPP ສະເໜີຫັນປ່ຽນພາລະບົດບາດ ຂອງ ທລຍ ຈາກ ການເຮັດໜ້າທີ່ເປັນທັງອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດໂຄງການ ໄປເປັນ <u>ອົງການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ</u> ໂດຍເຮັດໜ້າທີ່ຮັບ ແລະ ຄຸ້ມຄອງເງິນຊ່ວຍເຫຼືອລ້າ ເພື່ອຈັດສັນໃຫ້ <u>ບັນດາອົງການຈັດຕັ້ງປະຕິບັດໂຄງການ</u> ທີ່ຮັບຜິດຊອບ ການຈັດຕັ້ງປະຕິບັດບັນດາໂຄງການ ແລະ ກິດຈະກຳວຽກງານພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ.

47. ທລຍ ມີປະສົບການຫຼາຍ, ພ້ອມທັງມີແບບແຜນການເຮັດວຽກ, ຂັ້ນຕອນ ແລະ ລະບົບຕ່າງໆ ຮອງຮັບ ການຄຸ້ມຄອງບໍລິຫານ, ການວາງແຜນ ແລະ ການຕິດຕາມ ແຜນງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ, ການຄຸ້ມຄອງຄວາມຮູ້ ແລະ ມີລະບົບ, ການຄວບຄຸມ, ນະໂຍບາຍ ແລະ ຂັ້ນຕອນ ທີ່ເໝາະສົມສຳລັບການຄຸ້ມຄອງການເງິນ. ບັນດາກົມກອງ ພາຍໃຕ້ ກສ ແລະ ອົງການກ່ຽວຂ້ອງອື່ນໆ ຂອງ ລັດ ທີ່ມີພາລະບົດບາດ ແລະ ບົດຮຽນໃນການຈັດຕັ້ງປະຕິບັດກິດຈະກຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ສາມາດຂໍແຫຼ່ງທຶນ ຈາກ ທລຍ ເພື່ອຈັດຕັ້ງປະຕິບັດກິດຈະກຳ ທີ່ສອດຄ່ອງກັບ ນະໂຍບາຍ, ແຜນການ, ຍຸດທະສາດ ແລະ ແຜນງານ ຂອງ ລັດຖະບານ. ໂຄງຮ່າງການຈັດຕັ້ງປະສານງານ ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ມີລາຍລະອຽດໃນ ຮູບສະແດງ 1.

48. ພາລະບົດບາດຂອງ ທລຍ ໃນຖານະເປັນ ອົງການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ລວມມີຄື:

- ແຫຼ່ງທຶນ: ລະບຸແຫຼ່ງທຶນ ແລະ ລະດົມທຶນ ຈາກພາກລັດ ແລະ ເອກະຊົນ ຊຶ່ງລວມທັງ ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສັງຄົມສາກົນ, ແລະ ນັກລົງທຶນພາກເອກະຊົນ ພາຍໃນ ສປປ ລາວ ເພື່ອໃຫ້ການສະໜັບສະໜູນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.
- ບໍລິຫານ: ຈັດຕັ້ງປະຕິບັດໜ້າວຽກໃຫ້ຄໍາແນະນໍາດ້ານການບໍລິການ, ການເງິນ, ການຈັດຊື້ຈັດຈ້າງ ແລະ ດ້ານວິຊາການ; ຕິດຕາມຄວາມສ່ຽງດ້ານສັງຄົມແລະສິ່ງແວດລ້ອມ, ຕິດຕາມ, ປະເມີນຜົນ ແລະ ລາຍງານກ່ຽວກັບ ການຈັດຕັ້ງປະຕິບັດໂຄງການ.
- ສະໜອງສິນຄ້າແລະການບໍລິການ: ສະໜອງສິນຄ້າຄຸນນະພາບສູງ, ຊ່ຽວຊານ ແລະ ການຊ່ວຍເຫຼືອທາງດ້ານວິຊາການ, ຕະຫຼອດເຖິງການບໍລິການສ້າງຄວາມສາມາດ ໃຫ້ແກ່ ບັນດາອົງການຈັດຕັ້ງປະຕິບັດໂຄງການ. ການບໍລິການ ລວມເອົາ ການສິ່ງທີມງານຂະໜາດນ້ອຍ ຂອງ ທລຍ ໄປປະຈໍາຢູ່ຂັ້ນເມືອງ ເພື່ອຊີ້ນໍາ, ໃຫ້ຄໍາປຶກສາ, ແນະນໍາ ແລະ ຝຶກວິຊາການຂັ້ນເມືອງ ກ່ຽວກັບ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດໂຄງການກໍຄື ວຽກງານການວາງແຜນ, ຕິດຕາມ, ປະເມີນຜົນ ແລະ ລາຍງານການຈັດຕັ້ງປະຕິບັດໂຄງການ.
- ຈັດຕັ້ງປະຕິບັດ ແລະ ສະໜັບສະໜູນນະໂຍບາຍ: ສະໜອງຄໍາແນະນໍາ ກ່ຽວກັບ ນະໂຍບາຍ ແລະ ນິຕິກໍາໃຫ້ແກ່ ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ ແລະ ຮັບປະກັນ ການຈັດຕັ້ງປະຕິບັດຂໍ້ຕົກລົງຂອງລັດຖະມົນຕີ ແລະ ບັນດາແຜນງານກ່ຽວຂ້ອງ.
- ຫຼຸດຜ່ອນຄວາມບໍ່ແນ່ນອນ: ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບ ບັນດາເຄື່ອງມືທາງດ້ານນະໂຍບາຍໃໝ່ ເພື່ອໃຫ້ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ ແລະ ພາກສ່ວນກ່ຽວຂ້ອງສໍາຄັນ ເຂົ້າໃຈແຈ້ງ ເປັນການຫຼຸດຜ່ອນບັນຫາຄວາມບໍ່ແນ່ນອນ.

## ຮູບສະແດງ 1: ໂຄງຮ່າງການຈັດຕັ້ງປະສານງານ ວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ



49. ພາລະບົດບາດ ຂອງ ກົມກອງພາຍໃຕ້ ກສ ແລະ ອົງການກ່ຽວຂ້ອງ ຂອງ ລັດ ໃນຖານະເປັນ ອົງການຈັດຕັ້ງປະຕິບັດໂຄງການ ລວມມີຄື:
   - ສ້າງ ແລະ ສົ່ງບົດສະເໜີໂຄງການ ໃຫ້ແກ່ ກົມພັດທະນາຊົນນະບົດແລະຫຼຸດຜ່ອນຄວາມທຸກຍາກ (DRDPR) ແລະ ທລຍ F ເພື່ອຄົ້ນຄວ້າ ແລະ ສະເໜີໃຫ້ ຄະນະຊີ້ນໍາວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂັ້ນສູນກາງ ພິຈາລະນາຮັບຮອງ.
   - ຮັບປະກັນການນໍາໃຊ້ເງິນຢ່າງມີປະສິດທິຜົນ ແລະ ຄວາມຍືນຍົງ ຂອງ ບັນດາກິດຈະກໍາໂຄງການ ທີ່ຈັດຕັ້ງປະຕິບັດໂດຍໄດ້ຮັບທຶນຈາກ ທລຍ.
   - ອໍານວຍຄວາມສະດວກ ໃຫ້ການມີສ່ວນຮ່ວມທີ່ປະສິດທິຜົນຢ່າງຕໍ່ເນື່ອງ ຂອງບັນດາກຸ່ມສໍາຄັນ ແລະ ຊຸມຊົນທ້ອງຖິ່ນ, ສົ່ງເສີມໂອກາດ ເພື່ອລະດົມຊັບພະຍາກອນພາຍນອກ ທີ່ໃຫ້ການຊ່ວຍເຫຼືອວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ເພື່ອສົມທົບໃສ່ ຊັບພະຍາກອນ ທີ່ສະໜອງຜ່ານບັນດາໂຄງການທີ່ໄດ້ຮັບທຶນ ຈາກ ທລຍ.
   - ສະເໜີ ການດັດປັບໂຄງການ ຕາມຄວາມເໝາະສົມ; ຊອກຫາວິທີການດໍາເນີນງານທີ່ເປັນນະວັດຕະກໍາໃໝ່ ເພື່ອສ້າງຄວາມເຂັ້ມແຂງໃຫ້ ການຮ່ວມມື ແລະ ປະສິດທິຜົນ ໃນລະດັບໂຄງການ; ຮັບປະກັນການແບ່ງໜ້າທີ່ຮັບຜິດຊອບຢ່າງມີປະສິດທິພາບ ເພື່ອໃຫ້ມີການປະສານສົມທົບໃນລະດັບສູງສຸດ ລະຫວ່າງ ບັນດາພາກສ່ວນກ່ຽວຂ້ອງສໍາຄັນ ຊ່ວຍໃຫ້ເຂົາເຈົ້າຮູ້ໄດ້ບັນດາໜ້າວຽກ ທີ່ໄດ້ຮັບການມອບໝາຍ ແລະ ຄວາມໄດ້ປຽບໂດຍສົມທຽບ ຂອງ ເຂົາເຈົ້າ.
   - ສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດ ຂອງ ວິຊາການຂັ້ນແຂວງ ແລະ ເມືອງ ເພື່ອຈັດຕັ້ງປະຕິບັດ, ຕິດຕາມ, ປະເມີນຜົນ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດບັນດາກິດຈະກໍາວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ຈາກ ທລຍ.

50. ພາລະບົດບາດ ຂອງ ຫ້ອງການຂັ້ນແຂວງ ແລະ ເມືອງ ໃນຖານະເປັນຄູ່ຮ່ວມຈັດຕັ້ງປະຕິບັດ ລວມມີຄື:
   - ຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ: ພາກສ່ວນກ່ຽວຂ້ອງ ປະສານສົມທົບກັນ ເພື່ອຈັດຕັ້ງປະຕິບັດວຽກງານວຽກງານຕາມພາລະບົດບາດ ຂອງ ຕົນ ແລະ ເຮັດບັນລຸບັນດາຈຸດປະສົງ ຂອງ ໂຄງການ ແລະ ແຜນງານ.
   - ສ້າງຄວາມສາມາດໃຫ້ການຈັດຕັ້ງ: ພາກສ່ວນກ່ຽວຂ້ອງ ປະສານສົມທົບ ເພື່ອພັດທະນາ ແລະ ສ້າງຄວາມເຂັ້ມແຂງ ໃຫ້ ຄວາມສາມາດ ຂອງ ການຈັດຕັ້ງ ຢູ່ແຂວງ ແລະ ເມືອງ.
   - ສ້າງຄວາມພົ້ນເດັ່ນ: ພາກສ່ວນກ່ຽວຂ້ອງ ປະສານສົມທົບ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ມີຄວາມພົ້ນເດັ່ນ ແລະ ຖືກຮັບຮູ້ ຈາກອໍານາດການປົກຄອງແຂວງ ແລະ ເມືອງ.
   - ແລກປ່ຽນຂໍ້ມູນຂ່າວສານ: ພາກສ່ວນກ່ຽວຂ້ອງ ປະສານສົມທົບ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ພັດທະນາການຮ່ວມມືທາງດ້ານວິຊາການ ກັບ ອົງການຈັດຕັ້ງອື່ນໆ.
   - ລະດົມຊັບພະຍາກອນ: ພາກສ່ວນກ່ຽວຂ້ອງ ປະສານສົມທົບ ເພື່ອປະກອບສົມທົບຊັບພະຍາກອນເພີ່ມເຕີມ ຈາກຄູ່ຮ່ວມພັດທະນາທີ່ສະໜອງທຶນຊ່ວຍເຫຼືອ.
   - ຊອກຫາວິທີແກ້ໄຂບັນຫາ: ພາກສ່ວນກ່ຽວຂ້ອງ ປະສານສົມທົບ ເພື່ອຊອກຫາວິທີແກ້ໄຂບັນຫາຮ່ວມກັນ.

- ຮ່ວມອອກແບບໂຄງການ: ພາກສ່ວນກ່ຽວຂ້ອງ ປະສານສົມທົບ ເພື່ອຮ່ວມອອກແບບບັນດາໂຄງການ ພາຍໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

51. ຄະນະວິຊາການປະສານງານ DRDPR-PRF: ກອງເລຂາ ຄະນະຊີ້ນຳຂັ້ນສູນກາງ ສາມາດສ້າງຕັ້ງຄະນະປະສານງານວິຊາການໜຶ່ງຂຶ້ນມາ ເພື່ອເຮັດໜ້າທີ່ເປັນກົນໄກປະສານງານ ລະຫວ່າງ ກົມພັດທະນາຊົນນະບົດແລະຫຼຸດຜ່ອນຄວາມທຸກຍາກ ກັບ ທລຍ (DRDPR-PRF). ຄະນະປະສານງານວິຊາການດັ່ງກ່າວ ຈະເຮັດ ໜ້າທີ່ ກວດຜ່ານ, ທົບທວນ ແລະ ປະເມີນ ບົດສະເໜີໂຄງການ ແລະ ງົບປະມານ ທີ່ສະເໜີຂໍ ຈາກ ກົມກອງພາຍໃຕ້ ກສ ແລະ ບັນດາອົງການກ່ຽວຂ້ອງຂອງລັດ, ກ່ອນທີ່ຈະສະເໜີ ໃຫ້ ຄະນະຊີ້ນຳຂັ້ນສູນກາງ ພິຈາລະນາຮັບຮອງ; ປະສານສົມທົບ ເພື່ອລະດົມການຊ່ວຍເຫຼືອທາງດ້ານວິຊາການ ໃຫ້ແກ່ ບັນດາໂຄງການໃນວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ຕາມຄວາມເໝາະສົມ; ແລະ ປະສານສົມທົບ ເພື່ອຕິດຕາມ, ປະເມີນຜົນ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດໂຄງການ ທີ່ໄດ້ຮັບທຶນ ຈາກ ທລຍ.

### 4.3 ຫຼັກການເຄື່ອນໄຫວ ຂອງ ແຜນລະດົມທຶນ RLRPP ສຳລັບ ທລຍ

52. ແຜນລະດົມທຶນ RLRPP ສຳລັບ ທລຍ ຈະສືບຕໍ່ປະຕິບັດຕາມ ຫຼັກການວາງແຜນ ແລະ ຈັດຕັ້ງປະຕິບັດແບບມີສ່ວນຮ່ວມ ຢູ່ຂັ້ນບ້ານ. ຫຼັກການດັ່ງກ່າວ ພິສູດແລ້ວວ່າ: ມີປະສິດທິຜົນໃນການສ້າງຄວາມເປັນເຈົ້າການ ຂອງຊຸມຊົນ ຕໍ່ ບັນດາກິດຈະກຳຂອງໂຄງການ ດັ່ງທີ່ໄດ້ຮັບການຢັ້ງຢືນ ຈາກ ຜົນການປະເມີນຄວາມເພິ່ງພໍໃຈ ຂອງຜູ້ໄດ້ຮັບຜົນປະໂຫຍດ ຈາກ ໂຄງການ ທລຍ III. ຂະບວນການວາງແຜນພັດທະນາຂັ້ນບ້ານ ທີ່ຖືກນຳສະເໜີຫຼາຍກວ່າສິບປີກ່ອນ ໄດ້ຊ່ວຍປັບປຸງ ຂອບເຂດ ແລະ ຂະບວນການຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ. ສິ່ງສຳຄັນຄື: ປະຊາຊົນພາຍໃນບ້ານ ຊຶ່ງລວມທັງແມ່ຍິງ ໄດ້ເຂົ້າມີສ່ວນຮ່ວມເຮັດໜ້າທີ່ ເປັນຜູ້ອຳນວຍຄວາມສະດວກຂັ້ນບ້ານ. ວິທີການດຳເນີນງານດັ່ງກ່າວ ພິສູດໃຫ້ເຫັນແລ້ວວ່າ: ມີຜົນສຳເລັດ ໃນແຜນງານອື່ນໆ ຂອງ ວຽກງານພັດທະນາຊົນນະບົດ ພາຍໃນລະດັບພາກ ເພື່ອໃຫ້ສາມາດເຂົ້າເຖິງຊຸມຊົນ ແລະ ກຸ່ມຄົນຕ່າງໆ ທີ່ສ່ຽງຖືກປ່ອຍປະລະເລີຍ. ວິທີການດຳເນີນງານດັ່ງກ່າວ ຍັງຖືກ ໝູນໃຊ້ໂດຍນັກລົງທຶນພາກເອກະຊົນ ໃນການຈັດຕັ້ງປະຕິບັດ ໂຄງການຍົກຍ້າຍຖິ່ນຖານແບບບໍ່ສະໝັກໃຈ ແລະ ການປັບປຸງຊີວິດການເປັນຢູ່ ຂອງ ປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກການລົງທຶນໃນຂະແໜງໄຟຟ້ານ້ຳຕົກ ແລະ ບໍ່ແຮ່ ຢູ່ ສປປ ລາວ.

53. ການຈັດຕັ້ງປະຕິບັດ ຫຼັກການເຄື່ອນໄຫວ ຂອງ ທລຍ ຜ່ານແຜນລະດົມທຶນ RLRPP ສຳລັບ ທລຍ ຈະຊ່ວຍເຮັດໃຫ້ ການເຮັດວຽກ ຂອງ ທລຍ ສອດຄ່ອງໂດຍກົງ ກັບ ນະໂຍບາຍ ແລະ ຂະບວນການຄຸ້ມຄອງການເງິນຂອງ ລັດຖະບານ ໃນຂະນະດຽວກັນ ກໍຍັງ ຮັກສາມາດຕະຖານລະດັບສູງ ຂອງ ການເປັນອົງການຄຸ້ມຄອງໂຄງການ ທີ່ໄດ້ຮັບແຫຼ່ງທຶນຈາກບັນດາສະຖາບັນການເງິນສາກົນ, ສະຖາບັນການເງິນເພື່ອການພັດທະນາ, ທະນາຄານພັດທະນາຂອງພາກເອກະຊົນ, ແລະ ແຫຼ່ງທຶນຈາກພາກເອກະຊົນ. ບົນພື້ນຖານຫຼັກການເຄື່ອນໄຫວຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມແລະປ່າໄມ້ (EFPF), ຫຼັກການເຄື່ອນໄຫວ ພື້ນຖານ ຂອງ ທລຍ ລວມມີຄື:

- ກິດຈະກຳຈຳເປັນ ຂອງ ທຸກໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ລວມເອົາ: ການສຳຫຼວດຂໍ້ມູນຖານ, ການທາບທາມຂໍຄຳປຶກສາກັບຂັ້ນບ້ານ, ການມີສ່ວນຮ່ວມຂອງປະຊາຊົນ (ໂດຍສະເພາະແມ່ຍິງ ແລະ ຊາວໜຸ່ມ), ການວາງແຜນແບບມີສ່ວນຮ່ວມຢູ່ຂັ້ນບ້ານ, ການເຊື່ອມສານບົດບາດຍິງ-ຊາຍ, ການພິຈາລະນາໃຫ້ຄວາມສຳຄັນຄົວເຮືອນບອບບາງ, ການຊົດເຊີຍທຸກຜົນກະທົບຈາກໂຄງການ, ການພັດທະນາຊີວິດການເປັນຢູ່, ການຝຶກອົບຮົມ, ກົນໄກແກ້ໄຂຄຳຮ້ອງທຸກ, ການຄຸ້ມຄອງແລະການນຳໃຊ້ຄວາມຮູ້ໃຫ້ເກີດປະໂຫຍດສູງສຸດ, ການຕິດຕາມ, ປະເມີນຜົນ ແລະ ການລາຍງານ ຜົນດຳເນີນງານ ແລະ ຄາດໝາຍຜົນໄດ້ຮັບ.
- ການຄຸ້ມຄອງການເງິນ ແມ່ນຈະລວມສູນຢູ່ຂັ້ນສູນກາງ ຊຶ່ງສອດຄ່ອງກັບລະບົບງົບປະມານ ຂອງ ລັດຖະບານ.
- ທຶນ ຂອງ ທລຍ ຈະຖືກນຳໃຊ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ສອດຄ່ອງຕາມ ຈຸດປະສົງ ຂອງແຜນງານແລະໂຄງການ.
- ທລຍ ຈະເຂົ້າຮ່ວມຢ່າງຕັ້ງໜ້າໃນການລະບຸຊ່ອງຫວ່າງດ້ານຜົນການຈັດຕັ້ງປະຕິບັດ ແລະ ຂອດຂາດປະສິດທິພາບ ໃນໄລຍະການຈັດຕັ້ງປະຕິບັດໂຄງການ ແລະ ສືບຕໍ່ສະໜອງການຄວບຄຸມພາຍໃຕ້ ຕໍ່ການເບີກຈ່າຍເງິນ ໃຫ້ ບັນດາໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ຈັດຕັ້ງປະຕິບັດໂດຍອີງການກ່ຽວຂ້ອງ ຂອງ ລັດ.
- ທຸກລາຍຮັບ ແລະ ລາຍຈ່າຍ ຂອງ ທລຍ ແມ່ນປະຕິບັດຜ່ານລະບົບຄັງເງິນແຫ່ງຊາດ ໂດຍປະຕິບັດຫຼັກການລົງບັນຊີ ຕາມລະບຽບການຄຸ້ມຄອງບັນຊີ ຂອງ ລັດຖະບານ.
- ວຽກບໍລິຫານໂຄງການ ມີປະສິດທິຜົນ, ປະສິດທິພາບ, ພາວະວິໄສ ແລະ ໂປ່ງໃສ ຮັບປະກັນການເຮັດບັນລຸແຜນເບີກຈ່າຍເງິນ.
- ມີການກວດກາ ແລະ ກວດສອບບັນຊີ ເປັນລະບົບ ແລະ ເຮັດປະຈຳປົກກະຕິ ໂດຍປະຕິບັດຕາມລະບຽບກົດໝາຍກ່ຽວຂ້ອງ ຂອງ ລັດຖະບານ.
- ຄວາມສ່ຽງທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຈະໄດ້ຮັບການຕິດຕາມ ເພື່ອຮັບປະກັນວ່າ: ເຮັດບັນລຸໄດ້ຕາມ ແບບແຜນການເຮັດວຽກທີ່ດີຂອງສາກົນ ໃນດ້ານຄວາມຍືນຍົງທາງດ້ານສັງຄົມແລະສິ່ງແວດລ້ອມ ຊຶ່ງລວມທັງ ການບໍ່ຈຳແນກ, ຄວາມໂປ່ງໃສ, ການມີສ່ວນຮ່ວມ, ຄວາມຮັບຜິດຊອບ, ແລະ ການຄຸ້ມຄອງເພື່ອເສີມຂະຫຍາຍ ຄາດໝາຍຜົນໄດ້ຮັບດ້ານການພັດທະນາແບບຍືນຍົງ ຂອງ ບັນດາໂຄງການຕ່າງໆ ຜ່ານການສືບຕໍ່ມີສ່ວນຮ່ວມ ຂອງ ພາກສ່ວນກ່ຽວຂ້ອງ.
- ຈະມີການຈັດຕັ້ງປະຕິບັດ ການກວດສອບອິດສະຫຼະ ເປັນປະຈຳທຸກປີ ຕໍ່ ທລຍ ແລະ ທຸກໂຄງການທີ່ໄດ້ຮັບທຶນຈາກ ທລຍ, ພ້ອມທັງ ມີການກວດສອບບັນຊີ ພາຍໃນປີ ໂດຍຈະມີການສ້າງບົດລາຍງານການເງິນພາຍໃນປີ ເປັນແຕ່ລະໄລຍະ ເພື່ອລະບຸບັນຫາ ແລະ ຂໍ້ບົກພ່ອງ ໃນໄລຍະການທົບທວນພາຍໃນປີ.

### 4.4 **ມາດຖານເງື່ອນໄຂການຄັດເລືອກ ໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ**

54. ບົດສະເໜີໂຄງການ ທີ່ສະເໜີຂໍທຶນ ຈາກ ທລຍ ຈະຄ້າຍຄືກັນກັບ ກິດຈະກຳທີ່ມີການຈັດຕັ້ງປະຕິບັດ ພາຍໃຕ້ໂຄງການ ທລຍ ໃນໄລຍະຜ່ານມາ, ແລະ ຕ້ອງຕອບສະໜອງຕາມມາດຖານເງື່ອນໄຂພື້ນຖານ ຄືດັ່ງຕໍ່ໄປນີ້:

- ສະໜັບສະໜູນການລົງທຶນພັດທະນາໂຄງລ່າງພື້ນຖານຊຸມຊົນນະບົດ ທີ່ຊ່ວຍສະໜັບສະໜູນ ສ້າງຄົວເຮືອນ ແລະ ບ້ານ ໃຫ້ມີຄວາມເປັນເອກະລາດເປັນເຈົ້າຕົນເອງ, ມີການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ສະໜັບສະໜູນການຜະລິດກະສິກຳເປັນສິນຄ້າ, ການປຸງແຕ່ງເພີ່ມມູນຄ່າໃຫ້ຜົນຜະລິດກະສິກຳ ຂອງ ທ້ອງຖິ່ນ.
- ຈຳກັດການນຳໃຊ້ ຜູ້ຮັບເໝົາ ເພື່ອກໍ່ສ້າງ ໂຄງລ່າງພື້ນຖານຊຸມຊົນນະບົດ ດ້ວຍການສຸມໃສ່ ການນຳໃຊ້ແຮງງານທ້ອງຖິ່ນ ເພື່ອສ້າງລາຍໄດ້ໃຫ້ທ້ອງຖິ່ນ.
- ຝຶກອົບຮົມການບໍລິຫານຄວາມສ່ຽງດ້ານສັງຄົມ ແລະ ສິ່ງແວດລ້ອມ ໃຫ້ແກ່ຊຸມຊົນທ້ອງຖິ່ນ ທີ່ຈະຮັບຜິດຊອບການຈັດຕັ້ງປະຕິບັດວຽກກໍ່ສ້າງຂະໜາດນ້ອຍ.
- ສະໜັບສະໜູນຊ່ວຍເຫຼືອກຸ່ມໂພຊະນາການ ທີ່ເອົາໃຈໃສ່ເດັກນ້ອຍ ໃນໄລຍະຫຼັງເກີດ 1.000 ວັນ ຊຶ່ງສອດຄ່ອງກັບແຜນການ ຂອງ ກສ ເພື່ອຮັບປະກັນການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການຜ່ານການສະໜອງອາຫານເສີມ ແລະ ຜັກຈາກສວນຄົວ ແລະ ກິດຈະກຳປູກລ້ຽງ ເພື່ອສະໜອງອາຫານຫຼາກຫຼາຍໝູ່ ໃຫ້ແກ່ເດັກນ້ອຍ.
- ສືບຕໍ່ສະໜັບສະໜູນຊ່ວຍເຫຼືອ ກຊກ ຝາກປະຫຍັດ ແລະ ສະໜອງສິນເຊື່ອ ໃຫ້ສະມາຊິກ ເພື່ອຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ເຮັດໃຫ້ກິດຈະກຳສ້າງເສດຖະກິດຂັ້ນບ້ານ ມີຄວາມຍືນຍົງ ແລະ ຫັນໄປຊ່ວຍຜູ້ຜະລິດຂະໜາດນ້ອຍ ແລະ ກຸ່ມການຕະຫຼາດ ເມື່ອ ກຊກ "ມີຄວາມເຂັ້ມແຂງ".
- ສ້າງຄວາມເຂັ້ມແຂງທາງດ້ານວິຊາການ ແລະ ການຄຸ້ມຄອງໂຄງການ ໃຫ້ ວິຊາການຂັ້ນແຂວງແລະເມືອງ ເພື່ອຊ່ວຍໃຫ້ເຂົາເຈົ້າ ສາມາດສົ່ງເສີມ ແລະ ສະໜັບສະໜູນຊ່ວຍເຫຼືອ ໃຫ້ ກຊກ ແລະ ກຸ່ມຜູ້ຜະລິດ ມີຄວາມຍືນຍົງ.

## 4.5 **ຂັ້ນຕອນການເບີກຈ່າຍເງິນ**

55. ຜ່ານແຜນລະດົມທຶນ RLRPP ສຳລັບ ທລຍ, ການຄຸ້ມຄອງການເງິນ ສ່ວນໃຫຍ່ແມ່ນຍັງຮັກສາຄືເກົ່າ ໂດຍລັດຖະບານ ແລະ ທລຍ ສືບຕໍ່ປະຕິບັດຕາມ ມາດຕະຖານການຄຸ້ມຄອງການເງິນ ຂອງ ທະນາຄານໂລກ ຊຶ່ງລວມເອົາ ເງື່ອນ ໄຂດ້ານການສ້າງແຜນ ແລະ ການຂຶ້ນງົບປະມານ, ການລົງບັນຊີ, ການຄວບຄຸມພາຍໃນ, ຂັ້ນຕອນການເບີກຈ່າຍເງິນ, ການລາຍງານການເງິນ ແລະ ການກວດສອບບັນຊີ. ການຄຸ້ມຄອງການເງິນ ແມ່ນຕ້ອງປະຕິບັດຜ່ານ ລະບົບຄັງເງິນແຫ່ງຊາດ ໂດຍລົງບັນຊີ ຕາມລະບຽບການຄຸ້ມຄອງບັນຊີ ຂອງ ລັດຖະບານ. ຂັ້ນຕອນການເບີກຈ່າຍເງິນ ແມ່ນໄດ້ສະແດງໄວ້ ໃນຮູບສະແດງ 2.



**ຮູບສະແດງ 2: ຂັ້ນຕອນການເບີກຈ່າຍເງິນ**

## 4.6 ການຈັດຊື້ຈັດຈ້າງ

56. ທລຍ ມີປະສົບການຈັດຕັ້ງປະຕິບັດບັນດາໂຄງການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ທີ່ໄດ້ຮັບແຫຼ່ງທຶນຊ່ວຍເຫຼືອ ຈາກ ທະນາຄານໂລກ ມາຫຼາຍກວ່າ 20 ປີ ນັບແຕ່ປີ 2002. ໜ່ວຍງານຈັດຊື້ຈັດຈ້າງ ຂອງຫ້ອງການ ທລຍ ຢູ່ຂັ້ນສູນກາງ ຈະເຮັດໜ້າທີ່ຄຸ້ມຄອງ ແລະ ຊີ້ນຳ ທຸກກິດຈະກຳຈັດຊື້ຈັດຈ້າງ ຄື: ວຽກກໍ່ສ້າງ, ຈັດຊື້ສິນຄ້າ ແລະ ຈັດຈ້າງບໍລິການທີ່ປຶກສາ ສຳລັບ ໂຄງການ ທີ່ຈະໄດ້ຮັບແຫຼ່ງທຶນຊ່ວຍເຫຼືອ ຈາກ ທລຍ ເພື່ອຮັບປະກັນວ່າ: ທຸກຂັ້ນຕອນການຈັດຊື້ຈັດຈ້າງ ປະຕິບັດຕາມ ລະບຽບການ ແລະ ກົດລະບຽບ ຂອງ ມາດຕະຖານຈັດຕັ້ງຈັດຈ້າງຂອງສາກົນ, ພ້ອມນັ້ນ ຍັງຈະເຮັດໜ້າທີ່ຈັດຝຶກອົບຮົມ ໃຫ້ ພະນັກງານຈັດຊື້ຈັດຈ້າງຂອງໂຄງການ ຢູ່ຂັ້ນເມືອງ ແລະ ຄະນະຈັດຊື້ຈັດຈ້າງຢູ່ຂັ້ນບ້ານ, ຊີ້ນຳ ແລະ ໃຫ້ຄຳແນະນຳ ຕໍ່ ພະນັກງານໂຄງການ ແລະ ຄະນະຈັດຊື້ຈັດຈ້າງຢູ່ຂັ້ນບ້ານ, ອະນຸມັດການຈ່າຍເງິນ ໃຫ້ ວຽກກໍ່ສ້າງ, ການຈັດຊື້ສິນຄ້າ ແລະ ການຈັດຈ້າງບໍລິການທີ່ປຶກສາ ຕາມສັນຍາທີ່ໄດ້ເຊັນກັບຜູ້ສະໜອງ, ສ້າງແຜນຈັດຊື້ຈັດຈ້າງ, ຂຽນບົດລາຍງານການຈັດຊື້ຈັດຈ້າງປະຈຳເດືອນ/ປະຈຳຫົກເດືອນ/ປະຈຳປີ; ສ້າງຄູ່ມືຈັດຊື້ຈັດຈ້າງຂັ້ນຊຸມຊົນ ແລະ ແບບພິມກ່ຽວຂ້ອງເພື່ອນຳໃຊ້ ໃນຂະບວນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ. ເພື່ອຈຳກັດຄວາມສ່ຽງຂອງວຽກງານຈັດຊື້ຈັດຈ້າງ, ຂັ້ນຕອນການຈັດຊື້ຈັດຈ້າງທີ່ມີຢູ່ ຂອງ ທລຍ ແມ່ນຈະຈັດຕັ້ງປະບັດຢູ່ຂັ້ນສູນກາງ.

## 4.7 **ການຂໍການຢັ້ງຢືນ ໃຫ້ ກອງທຶນຫຼຸດຜ່ອນຄວາມທຸກຍາກ ເປັນຈຸດປະສານງານແຫ່ງຊາດ**

57. ພາຍຫຼັງທີ່ແຜນລະດົມທຶນ RLRPP ສຳລັບ ທລຍ ຖືກຮັບຮອງ, ທຫລ ສາມາດດຳເນີນຂະບວນການຂໍການຢັ້ງຢືນຈາກສາ ກົນ ເພື່ອເຮັດໜ້າທີ່ເປັນຈຸດປະສານງານແຫ່ງຊາດ ດ້ວຍການພິສູດໃຫ້ເຫັນວ່າ: ທລຍ ມີຄວາມສາມາດຄຸ້ມຄອງ ຊັບພະຍາກອນດ້ານການເງິນ ຈາກ ບັນດາກອງທຶນສາກົນທີ່ມີພາລະບົດບາດແກ້ໄຂການ

ປ່ຽນແປງດິນຟ້າອາ ກາດ ເຊັ່ນ: ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) ແລະ ກອງທຶນສິ່ງແວດລ້ອມໂລກ (GEF), ແລະ ອື່ນໆ. ຫາກບໍ່ໄດ້ຮັບການຢັ້ງຢືນ, ທລຍ ຈະບໍ່ສາມາດ ເຂົ້າເຖິງ *ຊັບພະຍາກອນທາງດ້ານການເງິນ* ຈາກ ກອງທຶນເຫຼົ່ານັ້ນ ໄດ້ໂດຍກົງ (ໝາຍວ່າ: ບໍ່ສາມາດເຂົ້າເຖິງ, ຄຸ້ມຄອງ ແລະ ເບີກຈ່າຍເງິນ ຊັບພະຍາ ກອນທາງດ້ານການເງິນ ໂດຍບໍ່ຕ້ອງຜ່ານ ອົງການຊ່ວຍເຫຼືອຫຼາຍຝ່າຍ ເຊັ່ນ: ທະນາຄານໂລກ, ທະນາຄານພັດທະນາອາຊີ, ຫຼື ອົງການໃນເຄືອຄ່າຍ ສປຊ). ການຂໍການຢັ້ງຢືນດັ່ງກ່າວ ເປັນຂະບວນການທີ່ໃຊ້ເວລາດົນ ອາດໃຊ້ເວລາພິຈາລະນາ ລະຫວ່າງ ສອງ ເຖິງ ສີ່ປີ ຊຶ່ງ ທລຍ ຕ້ອງປະຕິບັດໄດ້ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ກຳນົດໄວ້ໃນຂະບວນການຂໍເປັນຈຸດປະສານງານແຫ່ງຊາດ. ທີມຊ່ຽວຊານ ພາຍໃຕ້ ຄະນະພິຈາລະນາຢັ້ງຢືນ ຈະເຮັດໜ້າທີ່ທົບທວນເອກະລາດ ຄຳຮ້ອງຂໍ ເພື່ອປະເມີນເບິ່ງວ່າ: ອົງການທີ່ຮ້ອງຂໍນັ້ນປະຕິບັດໄດ້ຕາມມາດ ຕະຖານຄຸ້ມຄອງການເງິນ, ມາດຕະຖານປົກປ້ອງສັງຄົມແລະສິ່ງແວດລ້ອມ (ESS) ແລະ ນະໂຍບາຍສົ່ງເສີມບົດບາດຍິງ-ຊາຍ ຕາມທີ່ເງື່ອນໄຂກຳນົດໄວ້ໄດ້ຫຼືບໍ່.

58. ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ (EFPF) ພາຍໃຕ້ ກສ ກຳພວມ ຢູ່ໃນຂະບວນການຂໍການຢັ້ງຢືນ ເປັນຈຸດປະສານງານແຫ່ງຊາດ ຊຶ່ງໄດ້ດຳເນີນການເປັນເວລາຫຼາຍກວ່າສອງປີແລ້ວ ໂດຍໄດ້ຮັບການຊ່ວຍເຫຼືອ ຈາກ ອົງການອາຫານ ແລະ ການກະເສດ ແຫ່ງ ສປຊ (FAO) ແລະ ອົງການ GIZ.

59. ຖ້າ ກສ ເຫັນດີ ໃຫ້ ທລຍ ດຳເນີນຂະບວນການຂໍການຢັ້ງຢືນເປັນອົງການປະສານງານແຫ່ງຊາດ, ທລຍ ສາມາດຂໍການຊ່ວຍເຫຼືອ ຈາກ ອົງການ FAO ເພື່ອລວມເອົາເຂົ້າໃນ ໂຄງການລະດັບພາກພື້ນຂອງ FAO ທີ່ກຳລັງເຮັດການປະເມີນຜົນ ເພື່ອເພີ່ມການເຂົ້າເຖິງແຫຼ່ງທຶນ ຈາກ ກອງທຶນ GCF ໄດ້ໂດຍກົງ ໃຫ້ແກ່ຂະແໜງກະສິກຳພາຍໃຕ້ພາກພື້ນອາຊີຕາເວັນອອກສຽງໃຕ້. ອາດຈະຂໍການຊ່ວຍເຫຼືອຈາກ ທະນາຄານໂລກ ຫຼື ອົງການຊ່ວຍເຫຼືອທາງດ້ານວິຊາການສອງຝ່າຍ (ເຊັ່ນ: ອົງການ GIZ) ເພື່ອຊ່ວຍດຳເນີນຂະບວນການຂໍການຢັ້ງຢືນເປັນ ຈຸດປະສານງານແຫ່ງຊາດ. ຫາກປະສົບຜົນສຳເລັດໃນຂະບວນການຂໍການຢັ້ງຢືນ, ທລຍ ກໍຈະຖືກແຕ່ງຕັ້ງ ເປັນຈຸດປະສານງານແຫ່ງຊາດy (NDA) ເພື່ອຍາດແຍ່ງແຫຼ່ງທຶນການຫຼຸດຜ່ອນຄວາມສ່ຽງ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຈາກ ກອງທຶນ GCF ແລະ GEF ເພື່ອສະໜອງຊັບພະຍາກອນທາງດ້ານການເງິນໃຫ້ແກ່ ບັນດາໂຄງການພັດທະນາກະສິກຳ, ຊົນນະບົດ, ແລະ ແກ້ໄຂຄວາມທຸກຍາກ.

## ພາກທີ 5: ບາດກ້າວໃນຕໍ່ໜ້າ

60. ສະເໜີ ໃຫ້ ຄະນະນຳ ທລຍ ພິຈາລະນາຮັບຮອງ ບັນດາກິດຈະກຳດັ່ງຕໍ່ໄປນີ້ ເພື່ອສຳເລັດຂະບວນການວາງແຜນກະກຽມໂຄງການ ແລະ ສ້າງສຳເລັດບົດສະເໜີແຜນລະດົມທຶນ RLRPP ສຳລັບ ທລຍ:
    a) <u>ການທົບທວນ ພາຍໃນ ທລຍ ຕໍ່ບົດສະເໜີແຜນລະດົມທຶນ RLRPP</u>: ຄະນະນຳ ທລຍ ແລະ ຄະນະຊີ້ນຳການ ຈັດຕັ້ງປະຕິບັດໂຄງການ ປສກ ຈາກທະນາຄານໂລກ ຄວນທົບທວນຮ່າງເອກະສານສະບັບດັ່ງກ່າວນີ້. ໂດຍໃຫ້ເອົາໃຈໃສ່ພິຈາລະນາຢ່າງຮອບຄອບ ຕໍ່ ບັນດາຈຸດສຳຄັນດັ່ງລຸ່ມນີ້:

- ກວດຄືນຂໍ້ມູນຄວາມຈິງ: ຄວາມຖືກຕ້ອງຊັດເຈນ ຂອງ ຂໍ້ມູນ ແລະ ຄວາມເປັນຈິງຕ່າງໆ ທີ່ໄດ້ນຳສະເໜີໃນເອກະສານສະບັບນີ້;
- ຄວາມເປັນໄປໄດ້ທາງດ້ານເສດຖະກິດເຕັກນິກ ຂອງໂຄງການປະເພດຕ່າງໆ ທີ່ໄດ້ກ່າວເຖິງ ພາຍໃຕ້ແຕ່ລະຫົວຂໍ້ ທີ່ໄດ້ສະເໜີໃນ ພາກ ૩ 3 *(ໝາຍເຫດ: ຫົວຂໍ້ເຫຼົ່ານັ້ນ ແມ່ນເອົາຕາມນະໂຍບາຍ ຂອງລັດຖະບານ ເນື່ອງຈາກ ໄດ້ຄັດເອົາມາຈາກ ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າປີ ຄັ້ງທີ 10 ຫຼື ແຜນສິບ ແລະ ຮ່າງແຜນພັດທະນາກະສິກຳແລະສິ່ງແວດລ້ອມ ຫ້າປີ ຄັ້ງທີ 10 ຂອງ ກສ)*;
- ຄວາມເໝາະສົມ ຂອງ ກົມກອງກ່ຽວຂ້ອງພາຍໃນ ກສ ທີ່ຈະເຮັດໜ້າທີ່ ເປັນຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ ກັບ ທລຍ *(ຫຼື ຄວນຈຳເປັນຕ້ອງກ່າວເຖິງບໍ່; ສາມາດເອົາ ຊື່ ຂອງ ກົມກອງກ່ຽວຂ້ອງພາຍໃຕ້ ກສ ອອກ ຖ້າ ທລຍ ຫາກເຫັນວ່າ: ບໍ່ຈຳເປັນຕ້ອງລະບຸລົງໄປ)*; ແລະ
- ຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຂອງ ຄາດໝາຍຜົນໄດ້ຮັບ ຈາກ ບັນດາໂຄງການ ແລະ ກິດຈະກຳຕ່າງໆ ຂອງ ທລຍ ທີ່ຈະຈັດຕັ້ງປະຕິບັດໂດຍ ກົມກອງກ່ຽວຂ້ອງ ພາຍໃຕ້ ກສ.

b) ການອະນຸມັດ ໂດຍ ການນຳ ຂອງ ກສ ແລະ ສະພາບໍລິຫານ ຂອງ ທລຍ: ຄະນະນຳ ຂອງ ທລຍ ຄວນນຳສະເໜີ ບົດສະເໜີ ແຜນລະດົມທຶນ RLRPP ໃຫ້ການນຳ ຂອງ ກສ ພິຈາລະນາຮັບຮອງ ກ່ອນທີ່ຈະສະເໜີໃຫ້ ສະພາບໍລິຫານ ຂອງ ທລຍ ພິຈາລະນາຮັບຮອງ.

c) ການຢັ້ງຢືນ ທລຍ: ຖ້າເອກະສານສະບັບນີ້ ໄດ້ຮັບການຮັບຮອງຈາກ ສະພາບໍລິຫານ ຂອງ ທລຍ, ຄະນະນຳ ຂອງ ທລຍ ປະຊຸມກັບ ຜູ້ຕາງໜ້າອົງການ FAO ປະຈຳ ສປປ ລາວ ເພື່ອຂໍການຊ່ວຍເຫຼືອ ລິເລີ່ມຂະບວນການຂໍການຢັ້ງຢືນ ສຳລັບ ທລຍ. ການຢັ້ງຢືນດັ່ງກ່າວ ຈະເປັນຜົນນຳໄປສູ່ ທລຍ ຖືກກຳນົດເປັນຈຸດປະສານງານແຫ່ງຊາດ (NDA) ໃນການຮ່ວມມື ກັບ ບັນດາກອງທຶນສາກົນ ທີ່ເຮັດວຽກຫຼຸດຜ່ອນຄວາມສ່ຽງ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. *ໝາຍເຫດ: ເນື່ອງຈາກ ກອງທຶນປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ (EFPF) ກຳລັງຢູ່ໃນຂະບວນການຂໍການຢັ້ງຢືນ ແລະ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) ຈຳກັດໃຫ້ໜຶ່ງປະເທດ ມີພຽງ ແຕ່ໜຶ່ງຈຸດປະສານງານແຫ່ງຊາດ (NDA), ສະນັ້ນ ທລຍ ອາດຈະບໍ່ໄດ້ຮັບການຢັ້ງຢືນ. ຄວນຄົ້ນຄວ້າປະເດັນດັ່ງກ່າວ ກັບທາງຜູ້ຕາງໜ້າອົງການ FAO ປະຈຳລາວ ແລະ ບັນດາຊ່ຽວຊານກ່ຽວຂ້ອງ.*

d) ແຜນການເຜີຍແຜ່: ພາຍຫຼັງໄດ້ຮັບການອະນຸມັດ ຈາກ ການນຳ ຂອງ ກສ ແລະ ການຮັບຮອງຈາກ ສະພາບໍລິຫານ ຂອງ ທລຍ ແລ້ວ, ທລຍ ຄວນສ້າງແຜນການ ເພື່ອເຜີຍແຜ່ ແຜນລະດົມທຶນ RLRPP ສຳລັບ ທລຍ ໃຫ້ບັນດາອົງການ ແລະ ພາກສ່ວນກ່ຽວຂ້ອງ ທີ່ເຮັດວຽກ ໃນຂົງເຂດພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ, ການຍົກຍ້າຍແບບບໍ່ສະມັກໃຈ, ແລະ ການປ່ຽນແປງຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບຮູ້. ແຜນ ການເຜີຍແຜ່ ຄວນສຸມໃສ່ກຸ່ມເປົ້າໝາຍຕົ້ນຕໍ ຄືດັ່ງນີ້: ບັນດາອົງການທີ່ກ່ຽວຂ້ອງ ຂອງ ລັດ , ອົງການຈັດຕັ້ງ ສັງຄົມ, ຄູ່ຮ່ວມພັດທະນາ ຂອງ ລັດຖະບານແຫ່ງ ສປປ ລາວ, ນັກລົງທຶນເອກະຊົນ ຊຶ່ງມີພັນທະທາງກົດໝາຍ ຕ້ອງຈັດຕັ້ງປະຕິບັດແຜນງານພັດທະນາຊົນນະບົດ ອີງຕາມ ສັນຍາທີ່ມີ ກັບລັດຖະບານ ແລະ ຜູ້ປ່ອຍກູ້ສາກົນ. ການເຜີຍແຜ່ ຄວນນຳໃຊ້ຫຼາຍຮູບການປະສົມປະສານກັນ ເຊັ່ນ: ກອງປະຊຸມເຜີຍແຜ່, ກອງປະຊຸມວິຊາການ, ການພົບປະເປັນການສະເພາະ ກັບ ອົງການທີ່ມີຄວາມສົນໃຈ.

e) ການຈັດຕັ້ງປະຕິບັດ: ສົມມຸດວ່າ: ຄູ່ຮ່ວມພັດທະນາ ໃຫ້ການຊ່ວຍເຫຼືອທາງດ້ານການເງິນ ໃຫ້ແກ່ ທລຍ ໃນອະນາຄົດອັນໃກ້, ທລຍ ຈຳເປັນຕ້ອງສ້າງກົນໄກ ເພື່ອຮັບໃຊ້ວຽກງານດັ່ງຕໍ່ໄປນີ້ຄື: ວຽກປະສານງານ

ກັບ ກສ ເພື່ອສ້າງຕັ້ງຂັ້ນບໍລິຫານ ໃນການພິຈາລະນາຮັບຮອງເອົາບົດສະເໜີໂຄງການ ທີ່ສະເໜີໂດຍ ບັນດາກົມກອງກ່ຽວຂ້ອງພາຍໃຕ້ ກສ; ວຽກຄຸ້ມຄອງລິຫານງົບປະມານ ໂດຍນໍາໃຊ້ຂັ້ນຕອນ ທີ່ສອດຄ່ອງກັບລະບົບຄັງເງິນແຫ່ງຊາດ ແລະ ລະບຽບການຄຸ້ມຄອງບັນຊີ ຂອງ ລັດຖະບານ; ແລະ ສ້າງຕັ້ງ ຄະນະປະສານງານວິຊາການວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ຂອງ ທລຍ (DRDPR-PRF) (ສະເໜີເບິ່ງຮູບສະແດງ 2 ຂ້າງເທິງ) ເພື່ອເຮັດໜ້າທີ່ເປັນກົນໄກກວດກັ່ນຕອງ ແລະ ສະເໜີການພິຈາລະນາຮັບຮອງບົດສະເໜີໂຄງການຕ່າງໆ ເພື່ອຂໍງົບປະມານຈັດຕັ້ງປະຕິບັດຈາກ ທລຍ.

# ເອກະສານຊ້ອນທ້າຍ 1: ສັງລວມ ບັນດາປະເດັນສຳຄັນ ຈາກ ດຳລັດ ແລະ ບັນດາ ເອກະສານກ່ຽວຂ້ອງ ພາຍໃນຂອບນະໂຍບາຍ ຂະແໜງກະສິກຳ ແລະ ພັດທະນາ ຊົນນະບົດ ຂອງ ລບ ທີ່ ທລຍ ປະກອບສ່ວນຈັດຕັ້ງປະຕິບັດ

*ມະຕິ ກົມການເມືອງສູນກາງພັກ ເລກທີ 4 ວ່າດ້ວຍ ກະສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໄລຍະໃໝ່, ເມສາ 2024*

- ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ: ນຳໃຊ້ທຸກຊັບພະຍາກອນໃຫ້ມີປະສິດທິຜົນ.
- ຫັນຊັບພະຍາກອນ ໃຫ້ເປັນ ຄວາມຮັ່ງມີ: ເຮັດການຜະລິດເພື່ອຕອບສະໜອງຕະຫຼາດພາຍໃນ ແລະ ສົ່ງອອກ, ນຳໃຊ້ເຕັກໂນໂລຊີທັນສະໄໝ, ແລະ ສ້າງຍີ່ຫໍ້ສິນຄ້າທີ່ມີຄຸນນະພາບ.
- ປະຕິບັດງົບປະມານ ຢ່າງເຄັ່ງຄັດ ແລະ ມີປະສິດທິຜົນ ເພື່ອໃຫ້ມີຜົນໄດ້ຮັບດ້ານການພັດທະນາທີ່ສົມຄູ່: ພັດທະນາຜະລິດຕະພັນ ແລະ ການບໍລິການ ເພື່ອສ້າງລະບົບການເງິນທີ່ເຂັ້ມແຂງ ເຊື່ອມໂຍງກັບເສດຖະກິດໂລກ; ນຳໃຊ້ຖານການຜະລິດ ເພື່ອຜະລິດສິນຄ້າ ສະໜອງຕະຫຼາດພາຍໃນ ເພື່ອຕອບສະໜອງມາດຕະຖານການດຳລົງຊີວິດ ຂອງ ປະຊາຊົນລາວ ໂດຍບໍ່ເອື່ອຍອີງການນຳເຂົ້າ.
- ເນັ້ນໜັກ ຄວາມເປັນເອກະລາດເປັນເຈົ້າຕົນເອງ: ຮັບປະກັນ ຄວາມເປັນເອກະລາດເປັນເຈົ້າຕົນເອງ ແຕ່ມີການຮ່ວມມືທາງດ້ານເສດຖະກິດ ແລະ ການເຊື່ອມໂຍງກັບສາກົນ, ນຳໃຊ້ທຶນຮອນທີ່ໄດ້ຮັບຈາກຄູ່ຮ່ວມພັດທະນາ ຢ່າງມີປະສິດທິຜົນ.
- ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ທີ່ເສີມຂະຫຍາຍ ຫົວຄິດປະດິດສ້າງ, ຄວາມດຸໝັ່ນຂະຫຍັນພຽງ, ການເປັນຜູ້ປະກອບການ, ແລະ ກຸ້ມຕົນເອງ. ເພີ່ມປະສິດທິພາບ ຂອງ ການຜະລິດ ເພື່ອເອື້ອອຳນວຍໃຫ້ແກ່ການແຂ່ງຂັນ. ນຳໃຊ້ສະຕິປັນຍາ ເພື່ອຫັນຊັບພະຍາກອນເປັນທຶນ ແຕ່ຕ້ອງຮັບປະກັນຄວາມຍືນຍົງ.
- ປັບປຸງໂຄງສ້າງການຜະລິດແລະການບໍລິການ. ຂະຫຍາຍທ່າແຮງຖານການຜະລິດ. ນຳໃຊ້ກະສິກຳ ເປັນພື້ນຖານໃຫ້ແກ່ການຂະຫຍາຍອຸດສາຫະກຳ. ຫັນຂະແໜງກະສິກຳໃຫ້ທັນສະໄໝ ໂດຍນຳໃຊ້ວິທະຍາສາດ, ເຕັກໂນໂລຊີ, ແລະ ນາວັດຕະກຳ ໃນລັກສະນະທີ່ເປັນມິດກັບສິ່ງແວດລ້ອມ. ປຸງແຕ່ງຜົນຜະລິດກະສິກຳເປັນຜະລິດຕະພັນປຸງແຕ່ງ ທີ່ສົດ, ສະອາດ, ແລະ ດີຕໍ່ສຸຂະພາບ. ສ້າງຄວາມເຂັ້ມແຂງ ໃຫ້ໂຄງລ່າງພື້ນຖານກະສິກຳ-ປ່າໄມ້. ຂະຫຍາຍຖານການຜະລິດອຸດສາຫະກຳ ເພື່ອຜະລິດຝຸ່ນຊີວະພາບ, ອາຫານສັດ, ຜະລິດຕະພັນອຸປະໂພກ-ບໍລິໂພກ. ສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິການທ່ອງທ່ຽວຢູ່ເຂດຊົນນະບົດຄື: ການທ່ອງທ່ຽວແບບອະນຸລັກທຳມະຊາດ ທີ່ມີການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ.
- ການລົງທຶນບູລິມະສິດ (ໃນເຂດຊົນນະບົດ): ຂະແໜງໂຄງລ່າງພື້ນຖານການຂົນສົ່ງ, ສາທາ, ສຶກສາ ເພື່ອຮັບໃຊ້ຊຸມຊົນຊົນນະບົດຫ່າງໄກສອກຫຼີກ ໃນເຂດພູດອຍ.

ສັງລວມບັນດາເອກະສານສຳຄັນ ພາຍໃນຂອບນະໂຍບາຍ ຂອງ ຂະແໜງກະສິກຳ ແລະ ພັດທະນາຊົນນະບົດ ທີ່ ທລຍ ປະກອບສ່ວນ ແລະ ຈັດຕັ້ງປະຕິບັດໂດຍກົງ

*ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 (ADS)*

- ADS ໃຫ້ບູລິມະສິດວຽກງານການຄໍ້າປະກັນສະບຽງອາຫານ ຜ່ານການຜະລິດກະສິກຳສະອາດ, ປອດໄພ ແລະ ຍືນຍົງ ດ້ວຍການສົ່ງເສີມການຜະລິດກະສິກຳ ທີ່ປະກອບສ່ວນໃຫ້ແກ່ການຂະຫຍາຍຕົວເສດຖະກິດຂອງປະເທດ, ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ. ໂຄງລ່າງພື້ນຖານຊົນນະບົດ ທີ່ໄດ້ຮັບການພັດທະນາຂຶ້ນໃໝ່ ຄາດວ່າ: ຈະຊ່ວຍປະກອບສ່ວນ ປົກປັກຮັກສາວັດທະນະທຳ, ສິ່ງແວດລ້ອມ, ອຳນວຍຄວາມສະດວກໃຫ້ແກ່ການຄ້າ, ນຳໃຊ້ຊັບພະຍາກອນນໍ້າຢ່າງມີປະສິດທິພາບ, ເຮັດໃຫ້ລະບົບນິເວດມີຄວາມໝັ້ນທ່ຽງ ແລະ ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ. ADS ຍັງສະໜັບສະໜູນວຽກງານປັບປຸງໂພຊະນາການທີ່ດີ ໂດຍການຮັບປະກັນວ່າ: ປະຊາຊົນ ໄດ້ຮັບພະລັງງານຢ່າງຕໍ່າ 2,600 ກິໂລກະລໍລີ ຕໍ່ຄົນ ຕໍ່ມື້. ຈຳເປັນຕ້ອງມີການຮ່ວມມືທີ່ວຂະແໜງການຕ່າງໆ ໃນການຈັດຕັ້ງປະຕິບັດວິທີການໜຶ່ງດຽວທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ ເພື່ອໃຫ້ບັນລຸ ຄາດໝາຍ 1.c ຂອງ ເປົ້າໝາຍການພັດທະ ນາສະຫະສະວັດ **(MDG1)** ຊຶ່ງພົວພັນກັບການຄໍ້າປະກັນສະບຽງອາຫານ ແລະ ການປັບປຸງໂພຊະນາການ. ກະຊວງກະສິກຳແລະສິ່ງແວດລ້ອມ (ກສ) ຮັບຮູ້ ຄວາມຈຳເປັນ ຂອງ ການຜະລິດກະສິກຳທີ່ເນັ້ນໃສ່ໂພຊະນາການ ຊຶ່ງເຊື່ອມສານການກະຈາຍ ການປູກ, ການລ້ຽງ ແລະ ການປະມົງ ໃຫ້ມີຄວາມຫຼາກຫຼາຍ ເພື່ອປັບປຸງໂພຊະນາການ ໃນການແກ້ໄຂບັນຫາການຂາດໂພຊະນາການ.

*ແຜນງານພັດທະນາເຂດເນີນສູງ, 2016-2025[8] (UDP)*

- UDP ມີສີ່ຈຸດປະສົງ ຄື: ນຳໃຊ້ການພັດທະນາຊົນນະບົດແບບປະສົມປະສານ ເພື່ອແກ້ໄຂຄວາມທຸກຍາກໃນເຂດເນີນສູງ; ປັບປຸງຊີວິດການເປັນຢູ່ ແລະ ການຄໍ້າປະກັນລາຍໄດ້ ເພື່ອການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການໃນເຂດເນີນສູງ; ສ້າງຄວາມເຂັ້ມແຂງໃຫ້ອຳນາດການປົກຄອງທ້ອງຖິ່ນ ເພື່ອໃຫ້ສາມາດສະໜອງບໍລິການສາທາລະນະ, ອຳນວຍຄວາມສະດວກໃຫ້ແກ່ການລົງທຶນຂອງພາກເອກະຊົນ, ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງສັງຄົມ ໃຫ້ໄດ້ຢ່າງມີປະສິດທິຜົນ; ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ. ບັນດາກິດຈະກຳ ທີ່ຈັດຕັ້ງປະຕິບັດ ໂດຍ ທລຍ ມີຄວາມສອດຄ່ອງກັບ ບັນດາຈຸດປະສົງ ຂອງ UDP ແລະ ໄດ້ປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກ, ການເຊື່ອມສານບົດບາດຍິງ-ຊາຍ, ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດ, ນະວັດຕະກຳທາງດ້ານເຕັກນິກວິຊາການ, ແລະ ປັບປຸງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໃຫ້ແກ່ບັນດາຊຸມຊົນໃນເຂດເນີນສູງ.

*ຍຸດທະສາດໂພຊະນາການແຫ່ງຊາດ ຮອດປີ 2025 ແລະ ແຜນດຳເນີນງານ ໄລຍະ 2016-2020 (NNSPA)*

- NNSPA ຕ້ອງການບັນລຸ ປພຍ 2 "*ລຶບລ້າງຄວາມອຶດຫິວ, ບັນລຸການຄໍ້າປະກັນສະບຽງອາຫານ, ປັບປຸງໂພຊະນາການ ແລະ ສົ່ງເສີມການຜະລິດກະສິກຳ ແບບຍືນຍົງ,*" ແລະ ຍັງປະກອບສ່ວນ ເຂົ້າໃນຄວາມພະຍາຍາມບັນລຸອີກຫຼາຍ ປພຍ. ບັນດາກິດຈະກຳ ທີ່ຈັດຕັ້ງປະຕິບັດໂດຍ ທລຍ ເຫັນວ່າ: ສອດຄ່ອງກັບບັນດາແຜນງານ ທີ່ຕ້ອງການແກ້ໄຂ ກົກເຫດຂອງບັນຫາການຂາດໂພຊະນາການ ແລະ ເພື່ອໃຫ້ບັນລຸ ວຽກງານອາຫານປອດໄພ ແລະ ການບໍລິໂພກອາຫານທີ່ພຽງພໍ; ຫຼຸດຄວາມຖີ່ຂອງການເກີດພະຍາດ ທີ່ມີສາເຫດ

[8] UDP ໄດ້ຖືກເຊັນຮອງຮອງໂດຍ ລັດຖະມົນຕີ ກປ ໃນວັນທີ 1 ມີນາ 2016.

ຈາກບັນຫາອາຫານປົນເປື້ອນ; ແລະ ແກ້ໄຂສາເຫດພື້ນຖານ ຂອງ ການຂາດໂພຊະນາການ ໃນລະດັບຄົວເຮືອນ ແລະ ຊຸມຊົນ ຜ່ານກິດຈະກໍາປັບປຸງຕ່າງໆ ເພື່ອໃຫ້ອາຫານປອດໄພ ແລະ ມີຄວາມຫຼາກຫຼາຍ. ການບັນລຸບັນດາຈຸດປະສົງ ທີ່ຖືກກໍານົດໄວ້ໃນ NNSPA ຈະປະກອບສ່ວນເຂົ້າໃນວຽກງານແກ້ໄຂຄວາມທຸກຍາກ.

- ທລຍ ໄດ້ສຸມໃສ່ ການຈັດຕັ້ງປະຕິບັດ 4 ກິດຈະກໍາ ຈາກທັງໝົດ 22 ກິດຈະກໍາບູລິມະສິດ ຊຶ່ງໃນນັ້ນລວມເອົາ ການເພີ່ມການປູກພືດທີ່ມີຄຸນຄ່າທາງໂພຊະນາການສູງ; ການຜະລິດບັນດາຜະລິດຕະພັນທີ່ໃຫ້ໂປຣເຕອິນສູງ ສໍາລັບ ການບໍລິໂພກໃນຄົວເຮືອນ; ການສະໜອງໂຄງລ່າງພື້ນຖານຊົນນະບົດ ເພື່ອເພີ່ມການຜະລິດ; ການສ້າງສິ່ງອໍານວຍຄວາມສະດວກໃນການຈັດການກັບຜົນຜະລິດຫຼັງການເກັບກ່ຽວ ເປັນຕົ້ນ ສິ່ງອໍານວຍຄວາມສະດວກ ສໍາລັບ ການປຸງແຕ່ງອາຫານ, ການອາສາອາຫານໃຫ້ສາມາດຢູ່ໄດ້ດົນ ແລະ ການເກັບມ້ຽນ ເພື່ອຮັບປະກັນ ການສະໜອງອາຫານປອດໄພ ແລະ ມີຄຸນຄ່າທາງໂພຊະນາການ ໄວ້ກິນຕະຫຼອດປີ; ແລະ ການສົ່ງເສີມ ກິດຈະກໍາສ້າງລາຍໄດ້ໃນຂະແໜງກະສິກໍາ ແລະ ຂະແໜງການອື່ນໆ.

*ແຜນງານແຫ່ງຊາດ ການປັບຕົວ, 2009 (NAPA)*

- NAPA ຊີ້ໃຫ້ເຫັນວ່າ: ການເຂົ້າເຖິງ ຊັບພະຍາກອນທໍາມະຊາດ ຖືເປັນຕາໜ່າງຄວາມປອດໄພ ຄົວເຮືອນ ເປັນຈໍານວນຫຼາຍ; ການສູນເສຍຊັບພະຍາກອນທໍາມະຊາດ ຫຼື ການສູນເສຍການເຂົ້າເຖິງຊັບພະຍາກອນເຫຼົ່ານັ້ນ ຈະເປັນໄພຂົ່ມຂູ່ ຕໍ່ ການຄໍ້າປະກັນສະບຽງອາຫານ ຂອງ ຄົວເຮືອນ ແລະ ອາດຈະເຮັດໃຫ້ ຄວາມບອບບາງ ຂອງ ຄົວເຮືອນ ມີເພີ່ມສູງຂຶ້ນ. NAPA ເນັ້ນໜັກ ວິທີການໜຶ່ງດຽວທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ ໂດຍມີ ຄວາມພະຍາຍາມ, ເປົ້າໝາຍ ແລະ ກໍານົດເວລາ ທີ່ເປັນເອກະພາບກັນ, ຈັດຕັ້ງປະຕິບັດ 22 ກິດຈະກໍາ ໃນບັນດາເຂດ ທີ່ມີບັນຫາການຂາດໂພຊະນາການສູງ, ຂາດການຄໍ້າປະກັນສະບຽງອາຫານ, ທ້ອງຖິ່ນທຸກຍາກ ແລະ ບັນດາເຂດຈຸດສຸມ ຂອງ ລັດຖະບານ ຊຶ່ງມີຈຸດປະສົງແກ້ໄຂ ບັນຫາການຂາດໂພຊະນາການ ແບບຍືນຍົງ ຜ່ານວິທີການແກ້ໄຂໜຶ່ງດຽວທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ.

*ແຜນພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ຫ້າປີ (2011-2015) (RDPE)*

- ແຜນ RDPE ສະບັບດັ່ງກ່າວ ໄດ້ກໍານົດທິດນໍາ ເພື່ອການບັນລຸ ເປົ້າໝາຍ ແລະ ຈຸດປະສົງ ຂອງ ແຜນ 8, ຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ແລະ ເປົ້າໝາຍການພັດທະນາສະຫັສະວັດ ຂອງ ອົງການ ສປຊ ເວົ້າສະເພາະ MDG 1: ລຶບລ້າງຄວາມທຸກຍາກທີ່ສຸດ ແລະ ຄວາມອຶດຫິວ. ເພື່ອບັນລຸຈຸດປະສົງຂອງແຜນຫ້າປີດັ່ງກ່າວ, ໄດ້ມີການກໍານົດ ຫົກແຜນງານບູລິມະສິດ ຄື: **(i)** ລວມບ້ານນ້ອຍເປັນບ້ານໃຫຍ່ ແລະ ປັບປຸງການດໍາລົງຊີວິດ ໃຫ້ມີສະຖຽນລະພາບ; **(ii)** ສົ່ງເສີມການປູກພືດເສຖະກິດ ແລະ ການສ້າງລາຍໄດ້ໃນເຂດຊົນນະບົດ; **(iii)** ພັດທະນາໂຄງລ່າງພື້ນຖານໃນເຂດຊົນນະບົດ; **(iv)** ປັບປຸງວຽກງານວັດທະທໍາ-ສັງຄົມ ໃນເຂດຊົນນະບົດ; **(v)** ສ້າງຄວາມເຂັ້ມແຂງໃຫ້ອໍານາດການປົກຄອງທ້ອງ ຖິ່ນ; ແລະ, **(vi)** ເສີມຂະຫຍາຍການຮ່ວມມືພາຍໃນ ແລະ ສາກົນ. ວິທີການວິທະຍາ ຂອງ ແຜນ RDPE ແມ່ນສຸມໃສ່ຂັ້ນຮາກຖານເປັນເຈົ້າການພັດທະນາຊົນນະບົດແບບເຊື່ອມສານ ແລະ ລຶບລ້າງຄວາມທຸກຍາກ, ປັບປຸງການຄໍ້າປະກັນການດໍາລົງຊີວິດ, ສ້າງຄວາມເຂັ້ມແຂງໃຫ້ອໍານາດການປົກຄອງທ້ອງຖິ່ນ ແລະ ໝູນໃຊ້ທຸກທ່າແຮງບົ່ມຊ້ອນພາຍໃນທ້ອງຖິ່ນ ເພື່ອສ້າງປະໂຫຍດສູງສຸດ.

*ຍຸດທະສາດປ່າໄມ້ ຮອດ ປີ 2020*

- ຍຸດທະສາດປ່າໄມ້ ຮອດປີ 2020 ມີເປົ້າໝາຍແນໃສ່ປັບປຸງມາດຕະຖານການດໍາລົງຊີວິດ ຂອງ ປະຊາຊົນລາວ ຜ່ານການຮັບຮອງລະບົບການນໍາໃຊ້ທີ່ດິນຖາວອນ. ຍຸດທະສາດດັ່ງກ່າວ ຮັບຮູ້ວ່າ: ປ່າໄມ້ ສະໜອງການປະກອບສ່ວນຈໍາເປັນ ໃຫ້ແກ່ວຽກງານໂພຊະນາການ ແລະ ການທໍາມາຫາກິນ ຂອງ ປະຊາຊົນໃນເຂດຊົນນະບົດ ເວົ້າສະເພາະ ປະຊາຊົນທຸກຍາກທີ່ດໍາລົງຊີວິດໃນເຂດຊົນນະບົດ, ພ້ອມທັງຮັບຮູ້ອີກວ່າ: ເຄື່ອງປ່າຂອງດົງ ມີບົດບາດຄວາມສໍາຄັນ ດ້ານຄຸນຄ່າທາງໂພຊະນາການ ເພື່ອຮັບປະກັນ ການຄໍ້າປະກັນທາງດ້ານສະບຽງອາຫານ ໃຫ້ ປະຊາຊົນໃນເຂດຊົນນະບົດ. ຍຸດທະສາດດັ່ງກ່າວ ສະໜັບສະໜູນການປູກພືດຕ່າງໆທີ່ບໍ່ແມ່ນເຂົ້າ, ຕົ້ນໄມ້ກິນໝາກ ແລະ ຕົ້ນໄມ້ເສດຖະກິດອື່ນໆ, ການລ້ຽງສັດ, ແລະ ການເຮັດໜອງປາ ທີ່ສາມາດສະໜອງແຫຼ່ງອາຫານການກິນ ແລະ ສ້າງລາຍໄດ້ເພີ່ມ ຊຶ່ງເປັນການປະກອບສ່ວນປັບປຸງໂພຊະນາການ ໃຫ້ແກ່ປະຊາຊົນ.

*ດໍາລັດ ເລກທີ 348/ລບ, ດໍາລັດ ວ່າດ້ວຍ ມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ*
*ລົງວັນທີ 16 ພະຈິກ 2017*

- ມາດຕາ **1:** ກໍານົດມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ເພື່ອເປັນພື້ນຖານ ໃຫ້ແກ່ການກໍານົດເປົ້າໝາຍແກ້ໄຂຄວາມທຸກຍາກ, ແນໃສ່ສ້າງຄອບຄົວ, ບ້ານພັດທະນາ, ບ້ານໃຫຍ່ເປັນ ຕົວເມືອງໃນເຂດຊົນນະບົດ ແລະ ເມືອງເຂັ້ມແຂງຮອບດ້ານ ໃຫ້ປະກົດຜົນເປັນຈິງ.
- ມາດຕາ 2: ກໍານົດບັນດາເງື່ອນໄຂ ທີ່ມີລັກສະນະຮອບດ້ານ ໃນການສ້າງຄອບຄົວ, ບ້ານພັດທະນາ, ບ້ານໃຫຍ່ເປັນ ຕົວເມືອງໃນເຂດຊົນນະບົດ ແລະ ເມືອງເຂັ້ມແຂງຮອບດ້ານ ໃຫ້ປະກົດຜົນເປັນຈິງ.
- ມາດຕາ 3: ການອະທິບາຍຄໍາສັບ

  ກ. <u>ພົ້ນທຸກ</u> ໝາຍເຖິງ ການບັນລຸປັດໄຈພື້ນຖານ ໃນການດໍາລົງຊີວິດປະຈໍາວັນ ຄື: ມີອາຫານການກິນ ທີ່ສາມາດຕອບສະໜອງພະລັງງານ 2,100 ກິໂລກະລໍລີ ຕໍ່ຄົນ ຕໍ່ມື້ ຂຶ້ນໄປ, ມີເຄື່ອງນຸ່ງຫົ່ມ, ມີທີ່ຢູ່ອາໄສຖາວອນ, ສາມາດໃຊ້ຈ່າຍປິ່ນປົວ ເວລາເຈັບເປັນ ແລະ ໃນການສຶກສາ ຂັ້ນພື້ນຖານ, ສາມາດເຂົ້າເຖິງ ຕາໜ່າງການບໍລິການສາທາລະນະ ຂັ້ນພື້ນຖານ;

  ຂ. <u>ບໍລິການສາທາລະນະ ຂັ້ນພື້ນຖານ</u> ໝາຍເຖິງ ການບໍລິການດ້ານສາທາລະນະປະໂຫຍດ ທີ່ອີງການລັດ, ພາກສ່ວນທຸລະກິດ ແລະ ອົງການຈັດຕັ້ງສັງຄົມ ສະໜອງໃຫ້ແກ່ປະຊາຊົນ ເປັນຕົ້ນ ດ້ານສາທາລະນະສຸກ, ການສຶກສາ, ການຄົມມະນາຄົມ, ການຂົນສົ່ງ, ຂໍ້ມູນຂ່າວສານ, ພະລັງງານ ແລະ ນໍ້າສະອາດ, ພື້ນຖານວັດຖຸເຕັກນິກ, ການເງິນ ແລະ ການຊື້ຂາຍ, ຄວາມສະຫງົບປອດໄພ ແລະ ດ້ານອື່ນໆ ທີ່ເປັນຂໍ້ສະດວກພື້ນຖານ ເອື້ອອໍານວຍ ໃຫ້ແກ່ການດໍາລົງຊີວິດ ແລະ ທໍາມາຫາກິນ;
- ມາດຕາ 4: ມາດຕະຖານຄອບຄົວພົ້ນທຸກ
- ມາດຕາ 5: ມາດຕະຖານບ້ານພົ້ນທຸກ

  ບ້ານພົ້ນທຸກ ແມ່ນບ້ານ ທີ່ມີເງື່ອນໄຂຄົບຖ້ວນດັ່ງນີ້:

  1. ມີ ຫຼື ເຂົ້າເຖິງ ໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມຕອນຕົ້ນ;
  2. ມີ ຫຼື ເຂົ້າເຖິງ ສຸກສາລາ ແລະ ການບໍລິການສຸຂະພາບຂັ້ນພື້ນຖານ;
  3. ມີ ຫຼື ເຂົ້າເຖິງ ແຫຼ່ງນໍ້າສະອາດ;

4. ມີເສັ້ນທາງຄົມມະນາຄົມ ທີ່ສາມາດທຽວໄດ້ຕະຫຼອດປີ;
5. ເຂົ້າເຖິງບໍລິການດ້ານໂທລະຄົມມະນາຄົມ ແລະ ການຂົນສົ່ງ;
6. ມີ ຫຼື ເຂົ້າເຖິງ ການຊື້ຂາຍ ແລະ ແລກປ່ຽນສິນຄ້າ ຫຼື ຕະຫຼາດ;
7. ມີຕາຂ່າຍໄຟຟ້າໃນລະບົບ;
8. ມີຄອບຄົວພົ້ນທຸກ ກວມເອົາ 70% ຂຶ້ນໄປ ຂອງຈຳນວນຄອບຄົວທັງໝົດ ພາຍໃນບ້ານ.

ບ້ານທີ່ບໍ່ບັນລຸ ແປດເງື່ອນໄຂ ເທິງນີ້ ຖືວ່າ ເປັນບ້ານທຸກຍາກ.

- ມາດຕາ 8: ມາດຕະຖານບ້ານພັດທະນາ

ບ້ານພັດທະນາ ແມ່ນບ້ານທີ່ມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ປະຊາຊົນພາຍໃນບ້ານ ມີຄວາມສາມັກຄີປອງດອງ, ມີສະຕິເຄົາລົບປະຕິບັດກົດໝາຍ ແລະ ຕື່ນຕົວເປັນເຈົ້າການ ໃນການສ້າງສາພັດທະນາ;
2. ລະບົບການເມືອງຂອງບ້ານ ມີຄວາມໜັກແໜ້ນ ເຂັ້ມແຂງ;
3. ບັນລຸເງື່ອນໄຂ ດ້ານການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ;
4. ເສດຖະກິດ ມີການຂະຫຍາຍຕົວ ຕໍ່ເນື່ອງ;
5. ມີແຜນພັດທະນາບ້ານທີ່ດີ ແລະ ມີການຈັດຕັ້ງປະຕິບັດ ຢ່າງຖືກຕ້ອງ;
6. ມີແຜນການນຳໃຊ້ທີ່ດິນ ສາມ ປະເພດ ຄື: ດິນປຸກສ້າງ, ດິນທຳການຜະລິດ ແລະ ດິນສາທາລະນະ ເພື່ອຮັບໃຊ້ແກ່ການພັດທະນາ ແລະ ການບໍລິການ;
7. ມີເສັ້ນທາງຄົມມະນາຄົມເຂົ້າເຖິງ ທຽວໄດ້ຕະຫຼອດປີ ຢ່າງສະດວກ;
8. ປະຊາຊົນພາຍໃນບ້ານ ເຂົ້າເຖິງການບໍລິການສາທາລະ ຢ່າງສະດວກ;
9. ບັນລຸເງື່ອນໄຂ ດ້ານການສຶກສາວັດທະນະທຳ-ສັງຄົມ;
10. ມີການຄຸ້ມຄອງ,ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນ ແລະ ຍືນຍົງ;
11. ເປັນບ້ານພົ້ນທຸກ ແລະ ມີຄອບຄົວພັດທະນາ 85% ຂຶ້ນໄປ.

## ເອກະສານຊ້ອນທ້າຍ 2: ແຜນທີ່ການເຄື່ອນໄຫວ ຂອງ ໂຄງການ ທລຍ III, ທລຍ III-ເພີ່ມທຶນ ແລະ ໂຄງການ ປສກ



**COUNTRY: Lao People's Democratic Republic**
**Community Livelihood Enhancement And Resilience**

